# ພຸດທະທຳນວາຍ
# ກ່ຽວກັບ
# ພຣະເມສີອານ

ສຸພາສິດໂບຮານຂອງລາວເຮົາເພິ່ນໄດ້ກ່າວເອົາໄວ້ວ່າດັ່ງນີ້:

"ຕັດພົມພິດຄິດຢູ່ເຈັດວັນ ເອົາຜົວຫຼືເອົາເມຍພິດຄິດຢູ່ຈົນຕາຍ" ແຕ່ຂ້າພະເຈົ້າຢາກຈະຂໍເພີ່ມອີກວ່າ ຄັນຖ້າເຮົາຫາກເຊື່ອໃນສາສະໜາ ຫຼື ເຊື່ອໃນພຣະເຈົ້າທີ່ຜິດ ຈະຄິດຢູ່ຕະຫຼອດໄປເປັນນິດ ຄືເກິ່ງແມ່ນວ່າ ເນື້ອໜັງຮ່າງກາຍນີ້ຈະຕາຍໄປແລ້ວກໍຕາມ ແຕ່ດວງວິນຍານຈິດ ຍັງຈະຕ້ອງຮັບທຸກທໍລະມານໃນບຶງໄຟນະຮົກຕະຫຼອດໄປເປັນນິດ".

ໂບຮານລາວເພິ່ນກ່າວໄວ້ ໃຫ້ເຮົາຈື່ຈຳຈົດ
ບອກວ່າ ຕັດພົມພິດ ຈະຄິດຈົນເຈັດມື້
ເອົາຜົວ ຫຼືວ່າເມຍພິດນັ້ນ ຄິດກັນຈົນຕາຍຈາກ
ເກິ່ງຈະປະຢ່າແລ້ວ ກໍຍັງແປ້ວຢູ່ບໍ່ເຊົາ
ອັນນຶ່ງ ການເຊື່ອໃນພຣະເຈົ້າ ເຮົາແຫ່ງຄິດໄປດົນ
ຄິດໄປຈົນເຮົາຕາຍ ກໍບໍ່ວາຍລືມເວັ້ນ
ເປັນສັນໃດແທ້ ຈະຂໍແປຕ້ານກ່າວ
ເພື່ອໃຫ້ຊາວພີ່ນ້ອງ ຟັງແລ້ວໄດ້ຮິ່ນຕອງ
ຫວັງວ່າຊາວພີ່ນ້ອງ ຈະຄົ້ນອ່ານນຳກັນ
ຄວາມສຳຄັນຂອງມັນມີແນວໃດ ຈົ່ງວິໄຈຢ່າໄລເວັ້ນ
ຢ່າເປັນຄົນເໝືອນເຂົາເວົ້າ ຄົນຫູເບົາແລະໃຈງ່າຍ
ຮຽນຮູ້ຫຼາຍແລ້ວເຊື່ອໝັ້ນ ຄົນນັ້ນຈຶ່ງເຊື່ອຈິງ.

ພີ່ນ້ອງລາວທີ່ຮັກແພງ ສາສະໜາແລະພຣະເຈົ້ານີ້ເປັນເລື່ອງທີ່ສຳຄັນ,ພວກເຮົາບໍ່ຄວນເປັນຄົນຫູເບົາໃຈງ່າຍແລະບໍ່ຄວນເຊື່ອກັນໄປແບບຕາມລົມໆແລ້ງໆ, ແບບຕາມນິຕານເກົດ ຫຼືເຊື່ອໄປແບບສຸມສີ່ສຸມຫ້າ. ໂປດຈົ່ງຄິດ, ພິຈາລະນາ, ສຶກສາ ແລະຮຽນຮູ້ໃຫ້ເຂົ້າໃຈດີເສຍກ່ອນໆທີ່ຈະຕົກລົງປົງໃຈເຊື່ອ. ຖ້າບໍ່ດັ່ງນັ້ນທ່ານຈະເສຍໃຈແລະກິນແໜງໃຈໄປຕະຫຼອດຊີວິດ, ບໍ່ແມ່ນເຈັດວັນ ແລະບໍ່ແມ່ນຈົນຕາຍຄືເຖິງແມ່ນຮ່າງກາຍຂອງເຮົານີ້ຈະຕາຍໄປແລ້ວກໍຕາມ ແຕ່ຈິດວິນຍານຂອງເຮົາກໍຍັງຈະຕ້ອງໄດ້ຮັບຄວາມທຸກທໍລະມານກັນຢູ່ຕໍ່ໄປໃນບຶງໄຟນະຮົກ ຄັນເຮົາຫາກເຊື່ອໃນພຣະເຈົ້າທີ່ຜິດພາດໄປ. ດ້ວຍເຫດນີ້ແຫຼະ ຂ້າພະເຈົ້າຈຶ່ງເປັນຫ່ວງແລະຢາກຂໍຮ້ອງໃຫ້ພວກທ່ານໄດ້ພາກັນທວນຄິດພິຈາລະນາໃຫ້ດີກ່ຽວກັບເລື່ອງນີ້. ຂ້າພະເຈົ້າຫວັງສະເໝີວ່າໜັງສືນ້ອຍເຫຼັ້ມນີ້ຄົງຈະໃຫ້ຄວາມຮູ້, ຄວາມເຂົ້າໃຈໃນຄວາມຈິງແກ່ທ່ານບໍ່ຫຼາຍກໍໜ້ອຍ ໂດຍສະເພາະແລ້ວກໍແມ່ນຄວາມຈິງກ່ຽວກັບຄຳສອນແລະຄຳທຳນວາຍທີ່ພະພຸດທະອົງໄດ້ທຳນວາຍເອົາໄວ້ເມື່ອຫຼາຍພັນປີກ່ອນກ່ຽວກັບເລື່ອງຂອງພຣະເມສີອານຜູ້ທີ່ຈະມາໂຜດໂລກພາຍໜ້າ.

## ໜັງສືທີ່ໃຊ້ປະກອບໃນການຄົ້ນຄວ້າ


| | |
|---|---|
| ປຣີຊາ ພິນທອງ | ວັນນະຄະດີອີສານ<br>ບໍ່ໄດ້ບົ່ງຊື່ຂອງອົງການຫຼືບໍລິສັດທີ່ພິມ |
| ສຸຊີບ ປອນຍານຸພາບ | ປະຫວັດສາສະໜາ<br>ສຳນັກພິມບຳລຸງສາສະໜາ ພິມຄັ້ງທີ5<br>ປີ ພ.ສ. 2526 |
| ສ.ຈ ສະຖຽນ ພັນທະລັງສີ | ສາສະໜາປຽບທຽບ<br>ແຜ່ວິທະຍາ, ກຸງເທພ, ພ.ສ. 2497 |
| ພະສິຣິ ວິສຸດທິວົງ | ສິ້ນສ່ວນຂອງພຣະໄຕຣປິດົກ<br>ວັດພຣະສິງຫ໌ຊຽງໃຫມ່, 23 ເຫຼັ້ມທີ 27<br>ພ.ສ. 2497 |
| ສະມາຄົມພຣະຄຣິສຕະທຳຄຳພີ | ພຣະຄຣິສຕະທຳຄຳພີ<br>ພຣະທຳຄຳພີເດີມສະບັບຫຍໍ້ແລະ<br>ພຣະຄຳພີໃໝ່ສະບັບສົມບູນ, 1979 |
| ຊຸຊີບ ປຸນຍານຸພາບ | ພຣະໄຕຣປິດົກສະບັບປະຊາຊົນ<br>ມະຫາກຸດຊະຣາດ ວິທະຍາລັຍ,<br>ພ.ສ. 2528 |
| ອ.ປ. ປ່ຽນ | ພຸດທະປະຫວັດຈາກພະໂອດ<br>ມູນນິທິ ທຳມະທານໄຊຍາ, 2523 |

3. ພວກເຮົາຍັງມີໜັງສືພ້ອມດ້ວຍກະແຊດທີ່ບັນທຶກເລື່ອງຕ່າງໆອີກຢ່າງມາກມາຍທີ່ທ່ານສາມາດນຳເອົາໄປອ່ານ, ຟັງ ເພື່ອເພີ່ມເຕີມເສີມຄວາມຮູ້ໃຫ້ກັບຕົນເອງຫຼືບໍ່ກໍຝາກໄປເປັນຂອງຂວັນໃຫ້ແກ່ພີ່ນ້ອງຍາດມິດເພື່ອນຝູງຂອງທ່ານໄດ້ ຖ້າທ່ານສົນໃຈກະລຸນາຕິດຕໍ່ກັບພວກເຮົາໄດ້ທຸກໂອກາດ

## 3. ຂໍພຣະພອນຈົ່ງມີແກ່ທ່ານຜູ້ອ່ານທັງຫຼາຍ.

ຂໍໃຫ້ຄວາມຮັກຂອງພຣະບິດາ, ຄວາມເມດຕາຂອງພຣະບຸດ ແລະຄວາມສະໜິດສະໜົມກົມກຽວຂອງອົງພຣະວິນຍານບໍຣິສຸດ ຈົ່ງສະຖິດຄຸ້ມຄອງຮັກສາແລະນຳພາທ່ານໃຫ້ໄດ້ພົບກັບຄວາມຮູ້ ຄວາມເຂົ້າໃຈ, ໄດ້ຮັບພຣະພອນ ແລະສັນຕິສຸກໃນພຣະອົງຕະຫຼອດໄປດ້ວຍເທີ້ນ.

ສຳລັບພີ່ນ້ອງຜູ້ທີ່ອ່ານແລ້ວໄດ້ຕັດສິນໃຈ, ຫຼືເກີດມີປັນຫາ, ມີຄຳຖາມ, ມີຂໍ້ຂ້ອງໃຈແລະໄດ້ຮັບປະໂຫຍດໜ້ອຍຫຼາຍເທົ່າໃດຈາກໜັງສືເຫຼັ້ມນີ້ກະລຸນາຂຽນຈົດໝາຍ,ໂທລະສັບຖາມແລະແຈ້ງໃຫ້ຂ້າພະເຈົ້າຊາບນຳດ້ວຍຕາມທີ່ຢູ່ໃນຂ້າງຫຼັງຂອງໜັງສືເຫຼັ້ມນີ້.

ມີເງິນລ້ານ ບ້ານໃຫຍ່ໂຕ ໂກ້ຫຼູຍິ່ງ
ມີທຸກສິ່ງ ມີອຳນາດ ວາດສະໜາ
ໃນທີ່ສຸດ ກໍຕ້ອງຕາຍ ວາຍຊີວາ
ສະແຫວງຫາ ທາງທີ່ຜິດ ອະນິຈັງ

ມີພຣະເຈົ້າ ເທົ່ານັ້ນ ທີ່ຂ້າເພິ່ງ
ເປັນທີ່ໜຶ່ງ ໃນຊີວິດ ບໍ່ຜິດຫວັງ
ຂ້າຈະເດີນ ຕາມທາງນັ້ນ ຊົ່ວຊີວັງ
ຈົນກະທັ້ງ ເຖິງສະຫວັນ ນິຣັນດອນ

ພັນຕຣີ ໄພຣົຈນ໌ ນະລຳປາງ

ທ່ານ ອາຈານ ມະຫາ ທອງສວຍ ສັກດາຣັກ
ທີ່ເມືອງ ແຊນດີເອໂກ ລັດ ຄາລີຟໍເນຍ

ຂໍໃຫ້ພຣະເຈົ້າແຫ່ງສາກົນຈັກກະວານ ຊົງສະຖິດສະຖາພອນແດ່ອາຈານ ແລະງານຮັບໃຊ້ທັງປວງ ທີ່ພຣະອົງໄດ້ຊົງເລືອກເອົາທ່ານແລ້ວ ໃຫ້ທຳງານນັ້ນໆເພື່ອລາຊະອານາຈັກຂອງພຣະອົງ .

ຂ້ານ້ອຍຂໍສະແດງຄວາມຂອບໃຈນຳທ່ານອາຈານເປັນຢ່າງສູງທີ່ອາຈານຍັງລະນຶກເຖິງຂ້ານ້ອຍແລະໃຫ້ກຽດອອກຄວາມຄິດຄວາມເຫັນກ່ຽວກັບການຂຽນປຶ້ມພຸດທະທຳນວາຍກ່ຽວກັບພຣະເມສີອານທີ່ອາຈານໄດ້ຂຽນມາແລ້ວ .

ທ່ານອາຈານທີ່ເຄົາລົບ, ພຣະຜູ້ເປັນເຈົ້າໄດ້ຊົງເລືອກເອົາທ່ານ ອາຈານ ເພື່ອໃຫ້ນຳເອົາແສງສະຫວ່າງຂອງພຣະເຈົ້າໄປສູ່ຄົນທັງຫຼາຍທີ່ສະແຫວງຫາແລະປາຖະໜາຢາກຈະພົ້ນຈາກຄວາມມືດມົນ . ຕາມຄວາມເຊື່ອແລະຄວາມເຂົ້າໃຈຂອງຂ້ານ້ອຍແລ້ວເຫັນວ່າ ໜັງສືເຫຼັ້ມນີ້ເປັນຕຳລາທີ່ດີທີ່ສຸດເຫຼັ້ມໜຶ່ງ ໃນການນຳຄົນຜູ້ຕ້ອງການລອດພົ້ນບາບກຳໃຫ້ເຂົ້າເຖິງພຣະທຳ ຜູ້ເຊິ່ງເປັນຜູ້ໃຫ້ອະໄພໂທດບາບ ເປັນຕຳລາທີ່ເປີດສິ່ງທີ່ປົກບັງໄວ້ໃຫ້ເປີດເຜີຍອອກ ຫຼືຫງາຍສິ່ງທີ່ຂວ້ຳໄວ້ໃຫ້ຄົນໄດ້ເຫັນແຈ້ງ . ພ້ອມນີ້ຂໍສະແດງຄວາມນອບນ້ອມຕໍ່ຄວາມອົດສະຫະພະຍາຍາມຂອງທ່ານ ທີ່ຄົ້ນຄວ້າຕຳລາຈາກແຫຼ່ງຕ່າງໆມາປະກອບເປັນຫຼັກຖານອ້າງອີງດ້ວຍເຫດຜົນ ບວກກັບຊີ້ບອກທຳມະຊາດອ້ອມຕົວມະນຸດໃຫ້ເຫັນສະຫງ່າລາສີ ແລະສີພຣະຫັດຂອງພຣະເຈົ້າຜູ້ຊົງສ້າງ ປຶ້ມເຫຼັ້ມນີ້ຈຶ່ງເປັນບົດເທດສະໜາອັນປະເສີດແກ່ຊີວິດຂອງມະນຸດທັງປວງທີ່ມີຄວາມຫວັງໃນການລອດພົ້ນບາບກຳ. ຂໍໃຫ້ງານປະກາດເລື່ອງຂອງພຣະເຈົ້ານີ້ ໄດ້ເຂົ້າສູ່ຈິດໃຈຂອງມວນຊົນຊາວລາວ ໃຫ້ໄດ້ບັນລຸພຣະສັດຈະທຳທົ່ວທຸກຖ້ອນໜ້າແດ່ທ້ອນ . ດ້ວຍຄວາມຮັກແລະເຄົາລົບໂດຍຄວາມເຊື່ອໃນພຣະນາມຂອງພຣະມະຫາເຢຊູຄຣິດເຈົ້າ.

7/9/96 ທອງສວຍ ສັກດາຣັກ

ຊົງອະໄພບາບໃຫ້ຂ້ານ້ອຍແລະໄດ້ຮັບຂ້ານ້ອຍໄວ້ເປັນລູກຂອງພຣະອົງ ຂອບພຣະຄຸນພຣະອົງ ສັນລະເສີນພຣະອົງ ໃນພຣະນາມຂອງອົງພຣະເຢຊູຄຣິດເຈົ້າ ອາແມນ.

ຄ. <u>ຄຳແນະນຳພິເສດສຳລັບທ່ານ</u>.

1. ສິ່ງສຳຄັນທີ່ເຮົາຄວນຈຳໄວ້ອີກນັ້ນກໍຄື ຢ່າດຳລົງຊີວິດໄປຕາມດວງຫຼືໄປຕາມໂຊກຊະຕາວາສະໜາ ແຕ່ຈົ່ງພາກັນດຳລົງຊີວິດໄປຕາມພຣະທຳຄຳສັ່ງສອນຂອງພຣະເຈົ້າເພື່ອທ່ານຈະບໍ່ຜິດຫວັງ ເພາະນັ້ນຄືຄວາມຈິງທີ່ຈະຕ້ອງເກີດຂຶ້ນຢ່າງແນ່ນອນກັບໂລກແລະກັບຊີວິດຂອງມະນຸດເຮົາ.

2. ບໍ່ແມ່ນທຸກສາສະໜາໃນໂລກນີ້ຈະດີໝົດ ແຕ່ບາງສາສະໜານັ້ນກໍດີແທ້. ສາສະໜາສາມາດສະໜອງຄວາມຕ້ອງການຂອງມະນຸດເຮົາໄດ້ເກືອບທຸກຢ່າງ ແຕ່ມີຢູ່ສາມຢ່າງທີ່ສາສະໜາບໍ່ສາມາດທີ່ຈະໃຫ້ແກ່ມະນຸດໄດ້ແລະສາມຢ່າງນີ້ກໍຄື:1. ພຣະເຈົ້າອົງທ່ຽງແທ້, 2. ການໃຫ້ອະໄພບາບ ແລະ 3. ຊີວິດອັນຕະຫຼອດໄປເປັນນິດຊົ່ວນິລັນດອນກັບພຣະເຈົ້າໃນແຜ່ນດິນສະຫວັນຂອງພຣະອົງ. ຜູ້ທີ່ສາມາດໃຫ້ສາມຢ່າງໃນຂ້າງເທິງນີ້ແກ່ພວກເຮົາໄດ້ພາຍໃນໂລກແລະໃນຈັກກະວານນີ້ກໍແມ່ນມີແຕ່ຜູ້ດຽວຄືພຣະເຢຊູຄຣິດເທົ່ານັ້ນ ທັງນີ້ກໍເປັນເພາະວ່າພຣະອົງຊົງເປັນພຣະເຈົ້າອົງທ່ຽງແທ້ທີ່ພວກເຮົາລໍຄອຍແລະທີ່ພະພຸດທະເຈົ້າໄດ້ກ່າວເຖິງ (1 ໂຢຮັນ 5:20) ເປັນຜູ້ທີ່ມາຍັງໂລກນີ້ເພື່ອໄຖ່ບາບໃຫ້ກັບມະນຸດເຮົາທັງຫຼາຍ (ມັດທາຍ 1:21) ແລະໄດ້ຊົງເປັນຜູ້ທີ່ມາເພື່ອຈະເປັນທາງນຳມະນຸດເຮົາໃຫ້ກັບຄືນດີກັບພຣະເຈົ້າແລະເຂົ້າສູ່ແຜ່ນດິນສະຫວັນຂອງພຣະອົງ (ໂຢຮັນ 14:6).

ເຊື່ອແລະການກາບໄຫວ້ສິ່ງທີ່ພຣະເຈົ້າສ້າງຂຶ້ນນັ້ນແທນພຣະອົງຜູ້ຊົງສ້າງ (ໂຣມ 1:25)

3. ຍອມຮັບວ່າ ພຣະເຢຊູຄຣິດນັ້ນ ຊົງເປັນພຣະເຈົ້າແລະເປັນພຣະຜູ້ໄຖ່ບາບແກ່ມະນຸດເຮົາທັງຫຼາຍ ໂດຍສະເພາະແລ້ວກໍແມ່ນບາບຂອງທ່ານ.

4. ສາລະພາບບາບນັ້ນຕໍ່ພຣະອົງ, ພ້ອມທັງຍິນຍອມທີ່ຈະກັບໃຈໃໝ່ ເລີກເຊື່ອຢ່າງງົມງວາຍນັ້ນເສຍ ແລ້ວອັນເຊີນໃຫ້ພຣະເຢຊູຄຣິດ ໄດ້ເຂົ້າມາເປັນພຣະເຈົ້າໃນຊີວິດຂອງທ່ານ ນັບຕັ້ງແຕ່ບັດນີ້ເປັນຕົ້ນໄປ.

5. ຖ້າທ່ານຫາກພ້ອມທີ່ຈະເຮັດເຊັ່ນນີ້ ຈົ່ງອະທິຖານຮັບເອົາພຣະອົງໂດຍເວົ້າຕາມດັ່ງຕໍ່ໄປນີ້:

ຂ້າແດ່ອົງພຣະລາຊະບິດາ ຂ້ານ້ອຍດີໃຈທີ່ໄດ້ຮູ້ວ່າພຣະອົງຊົງເປັນພຣະເຈົ້າຜູ້ຊົງປະທານຊີວິດແລະລົມຫາຍໃຈໃຫ້ແກ່ຂ້ານ້ອຍ. ຂ້ານ້ອຍເສຍໃຈທີ່ບໍ່ໄດ້ຮູ້ຈັກກັບພຣະອົງ, ໄດ້ປະໝາດແລະເມີນເສີຍຕໍ່ພຣະອົງຕະຫຼອດມາ. ຂ້ານ້ອຍເສຍໃຈທີ່ສຸດທີ່ໄດ້ກະທຳເຊັ່ນນີ້ຕໍ່ພຣະອົງ ແລະຂໍສາລະພາບວ່າ ຈະບໍ່ເຮັດອີກຕໍ່ໄປ. ຂ້ານ້ອຍຂໍຂອບພຣະຄຸນພຣະອົງທີ່ຍັງຊົງຮັກແລະຫ່ວງໃຍຂ້ານ້ອຍຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ໃຫ້ລົງມາຕາຍແທນທີ່ໄມ້ກາງແຂນເພື່ອຮັບບາບແທນຂ້ານ້ອຍ. ນັບຕັ້ງແຕ່ນີ້ເປັນຕົ້ນໄປ ຂ້ານ້ອຍຂໍກັ້ມໃຈເກົ່າແລະຮັບເອົາໃຈໃໝ່ ເຊື່ອແລະໄວ້ວາງໃຈໃນພຣະອົງ ແລະຂໍເຊີນໃຫ້ພຣະອົງຊົງເປັນພຣະເຈົ້າຂອງຂ້ານ້ອຍຕະຫຼອດໄປ. ຂອບພຣະຄຸນພຣະອົງທີ່ໄດ້



# ບົດນຳ

"ຄວາມຈິງເປັນສິ່ງທີ່ບໍ່ຕາຍ ເປັນສິ່ງທີ່ມະນຸດເຮົາທັງຫຼາຍພາຍໃນໂລກນີ້ມີຄວາມປາຖະໜາ ແລະຕ້ອງການຢາກຈະຮູ້". ພີ່ນ້ອງ, ທ່ານຜູ້ອ່ານທີ່ຮັກແພງທັງຫຼາຍ, ໜັງສືພຸດທະທຳນວາຍສະບັບນີ້ ຄັນຖ້າທ່ານຫາກອ່ານໄວ້ທ່ານກໍຈະໄດ້ຄວາມຮູ້, ສຶກສາໄວ້ຈະໄດ້ເຂົ້າໃຈໃນຄວາມຈິງ, ເຊື່ອໄວ້ຈະໄດ້ຊີວິດແລະຕິດຕາມໄປຈົນຕາຍຈະເຖິງສະຫວັນ.

ຂ້າພະເຈົ້າຜູ້ຂຽນມີເຈດຈຳນົງອັນແຮງກ້າ ແລະມີຄວາມປາຖະໜາເປັນຢ່າງຍິ່ງທີ່ຈະນຳເອົາຄວາມຈິງແລະເຫດຜົນຕ່າງໆທີ່ກ່ຽວພັນກັນກັບຄຳທຳນວາຍຂອງພະພຸດທະເຈົ້າ ແລະຄຳສັ່ງສອນໃນພຣະທຳຄຳພີຂອງຊາວຄຣິສຕຽນມາບັນທຶກໄວ້. ເປົ້າໝາຍຫຼືຄວາມຕັ້ງໃຈນັ້ນກໍແມ່ນເພື່ອຈະໃຫ້ພີ່ນ້ອງຊາວລາວເຮົາ ທັງທີ່ເປັນຊາວພຸດແລະຊາວຄຣິສຕຽນໄດ້ພາກັນອ່ານແລະສຶກສາຮຽນຮູ້ເຖິງຄວາມຈິງ ຄວາມສຳຄັນແລະການພົວພັນກັນໃນຄຳສັ່ງສອນຂອງທັງສອງສາສະໜານີ້. ຂ້າພະເຈົ້າຜູ້ຂຽນບໍ່ໄດ້ມີເຈຕະນາແລະຄວາມປາຖະໜາທີ່ຈະດູຖູກຢຽດຫຍາມແລະໃສ່ຮ້າຍປ້າຍສີສາສະໜາໜຶ່ງສາສະໜາໃດ. ດ້ວຍເຫດນີ້ຈຶ່ງຫວັງວ່າພີ່ນ້ອງຈະພາກັນອ່ານແລະສຶກສາພິຈາລະນາໃຫ້ດີກ່ຽວກັບເລື່ອງນີ້.

ສຳລັບພີ່ນ້ອງຜູ້ທີ່ໄດ້ອ່ານແລະໄດ້ສຶກສາແລ້ວ ຂ້າພະເຈົ້າກໍຫວັງຢ່າງຍິ່ງວ່າທ່ານຈະແນະນຳໃຫ້ຄົນອື່ນໄດ້ອ່ານ ແລະໄດ້ສຶກສານຳດ້ວຍ. ພຸດທະທຳນວາຍເຫຼັ້ມນີ້ໄດ້ຈັດພິມຂຶ້ນມາເຖິງສາມຄັ້ງແລ້ວ ແລະຄັ້ງນີ້ກໍເປັນຄັ້ງທີ່ສີ່ ປາກົດວ່າ ແຕ່ລະຄັ້ງກໍແມ່ນໄດ້ນຳ

ຜົນປະໂຫຍດອັນມະຫາສານໃຫ້ທ່ານຜູ້ອ່ານເປັນຢ່າງດີແລະມີຫຼາຍຄົນໄດ້ຂຽນຈົດໝາຍແຈ້ງໃຫ້ຂ້າພະເຈົ້າວ່າ ເພິ່ນໄດ້ຮູ້ຈັກກັບພຣະເຈົ້າ ແລະເຂົ້າໃຈເຖິງຄວາມຈິງກ່ຽວກັບເລື່ອງຂອງສາສະໜາ ແລະຂອງພຣະເມສີອານນີ້ດີ. ຂ້າພະເຈົ້າເຊື່ອແລະຫວັງຢ່າງຍິ່ງວ່າ ໜັງສືເຫຼັ້ມນີ້ຈະໄດ້ຊ່ວຍທ່ານໃຫ້ໄດ້ພົບພໍ້ກັບຄວາມຈິງ, ໄດ້ເຊື່ອແລະໄດ້ຮັບເອົາພຣະເຈົ້າອົງທ່ຽງແທ້ເຊັ່ນດຽວກັນກັບພີ່ນ້ອງເຫຼົ່ານັ້ນທີ່ໄດ້ອ່ານແລະໄດ້ພົບມາແລ້ວ. ພາຍຫຼັງທີ່ທ່ານໄດ້ອ່ານແລ້ວມີບັນຫາ ມີຄຳຖາມແລະມີຂໍ້ຂ້ອງໃຈ ກະລຸນາໂທລະສັບຫຼືຂຽນຈົດໝາຍໄປຍັງຂ້າພະເຈົ້າໄດ້ທຸກໂອກາດຫຼືບໍ່ກໍຂໍໃຫ້ທ່ານພາກັນໄປທີ່ໂບດທີ່ວິຫານເພື່ອສອບຖາມລາຍລະອຽດ ແລະສຶກສາເພີ່ມເຕີມໄດ້.

ດ້ວຍຄວາມຮັກແພງແລະນັບຖື.



4. ມະນຸດເຮົາຈະຫຼີກລ້ຽງໂທດກຳທັງ 4 ໃນຂ້າງເທິງນີ້ບໍ່ໄດ້ ນອກເສຍແຕ່ວ່າເຮົາຈະເຊື່ອແລະຮັບເອົາພຣະເຢຊູຄຣິດໄວ້ເປັນພຣະເຈົ້າໃນຊີວິດໃນເວລາທີ່ເຮົາຍັງມີຊີວິດຢູ່ ເພາະວ່າໃນພຣະເຢຊູນັ້ນ ພຣະເຈົ້າໄດ້ຊົງໃຫ້ພຣະອົງຮັບບາບໂທດແທນເຮົາແລ້ວ ຜູ້ທີ່ເຊື່ອແລະມີພຣະອົງກໍຈະບໍ່ມີບາບ ແຕ່ຈະມີຄວາມຊອບທຳ (2 ໂກຣິນໂທ 5:21), ຈະມີສັນຕິສຸກ (ໂຣມ 5:1), ຍັງຈະຕ້ອງຕາຍຝ່າຍເນື້ອໜັງ ແຕ່ຈະບໍ່ຕາຍຝ່າຍວິນຍານ (ໂຢຮັນ 5:24; 11:25) ຄືວິນຍານຈະບໍ່ຕົກນະຮົກ (ພຣະນິມິດ 20:15), ແຕ່ໄດ້ຜ່ານພົ້ນຈາກການພິພາກສາລົງໂທດທີ່ຈະມີຂຶ້ນໃນວັນສຸດທ້າຍນັ້ນແລ້ວ (ໂຢຮັນ 3:18, 5:24). ພຣະເຈົ້າໄດ້ຊົງຕັ້ງພຣະເຢຊູຄຣິດໄວ້ໃຫ້ເປັນທາງເພື່ອນຳມະນຸດເຮົາກັບຄືນມາສູ່ພຣະເຈົ້າ, ລອດພົ້ນຈາກຄວາມບາບແລະເຂົ້າສູ່ແຜ່ນດິນສະຫວັນຂອງພຣະອົງ (ໂຢຮັນ 14:6) ຊຶ່ງໃນຜູ້ອື່ນ, ໃນທາງອື່ນຫຼືໃນສາສະໜາອື່ນນັ້ນແມ່ນບໍ່ມີເລີຍ (ກິດຈະການ 4:12). ໃຜກໍຕາມທີ່ມີຄວາມປາຖະໜາຢາກຈະສ້າງຄວາມຫວັງ, ສ້າງຄວາມໝັ້ນໃຈໃຫ້ກັບຕົນເອງແລະຢາກຈະຫຼີກລ້ຽງຈາກບາບໂທດທັງ 4 ປະການທີ່ກ່າວມາໃນຂ້າງເທິງນີ້ແລ້ວ ຜູ້ນັ້ນກໍຈະຕ້ອງໄດ້ເຊື່ອແລະຮັບເອົາພຣະເຢຊູຄຣິດ ຈຶ່ງຈະລອດພົ້ນໄດ້

ຂ. ສຳລັບພີ່ນ້ອງຜູ້ທີ່ຍອມຮັບແລະປາຖະໜາ ທີ່ຢາກຈະເລີ່ມຕົ້ນຊີວິດໃໝ່ໃນພຣະອົງ ນີ້ຄືຄຳແນະນຳສຳລັບທ່ານ.

1. ຍອມຮັບວ່າ ທີ່ພະພຸດທະເຈົ້າທຳນວາຍໄວ້ເຖິງເລື່ອງຂອງພຣະເມສີອານນັ້ນເປັນຄວາມຈິງແລະພຣະເມສີອານຜູ້ນັ້ນກໍຄືອົງພຣະເຢຊູຄຣິດນັ້ນເອງ.

2. ຍອມຮັບວ່າຕົນເອງເປັນຄົນບາບ ບໍ່ຮູ້ພຣະເຈົ້າແລະປະໝາດພຣະອົງຕະຫຼອດມາ ໂດຍການເມີນເສີຍຕໍ່ພຣະອົງແລະໂດຍການ

2. ທ່ານຮູ້ບໍ່ວ່າ ພຣະເຈົ້ານັ້ນຊົງຮັກມະນຸດເຮົາທຸກໆຄົນ ພຣະອົງບໍ່ຊົງປາຖະໜາທີ່ຢາກຈະໃຫ້ຜູ້ໜຶ່ງຜູ້ໃດຈິບຫາຍ ແຕ່ຊົງປາຖະໜາທີ່ຈະໃຫ້ມະນຸດທັງປວງມາເຖິງການກັ່ມໃຈເກົ່າເອົາໃຈໃໝ່ (2 ເປໂຕ 3:9). ປາຖະໜາຢາກໃຫ້ມະນຸດເຮົາທຸກຄົນນັ້ນມີສັນຕິສຸກ, ມີຊີວິດອັນຕະຫຼອດໄປເປັນນິດ ແລະໄດ້ໃຊ້ຊີວິດທັງສອງປະການນີ້ຢູ່ກັບພຣະອົງໃນສະຫວັນ ເນື່ອງດ້ວຍເຫດນີ້ພຣະອົງຈຶ່ງໄດ້ຊົງໃຫ້ໂອກາດແກ່ມະນຸດເຮົາທຸກຄົນ. ພຣະເຈົ້າໄດ້ປະທານສັນຕິສຸກແລະຊີວິດອັນຕະຫຼອດໄປເປັນນິດນີ້ໄວ້ໃນພຣະເຢຊູ ດັ່ງນັ້ນຜູ້ທີ່ມີພຣະເຢຊູກໍຈະມີສັນຕິສຸກ (ໂຣມ 5:1) ມີຊີວິດອັນຕະຫຼອດໄປເປັນນິດ (1ໂຢຮັນ 5:11-12) ມີຊີວິດທີ່ຄົບບໍລິບູນ (ໂຢຮັນ 10:10) ແລະມີຄວາມໝັ້ນໃຈວ່າຈະໄດ້ຢູ່ກັບພຣະເຈົ້າໃນແຜ່ນດິນສະຫວັນຂອງພຣະອົງ (ໂຢຮັນ 14:1-3).

3. ມະນຸດເຮົາທັງໂລກນີ້ມີຄວາມປາຖະໜາຢາກຈະໄດ້, ຢາກຈະມີສັນຕິສຸກອັນແທ້ຈິງດ້ວຍກັນທັງນັ້ນ. ແຕ່ບັນຫານັ້ນກໍມີຢູ່ວ່າ ເຮົາຈະມີບໍ່ໄດ້ແລະກໍໄປບໍ່ເຖິງ ຍ້ອນວ່າມະນຸດເຮົາທຸກຄົນນັ້ນເປັນຄົນຜິດບາບ ແລະຂາດຈາກພຣະລັດສະໝີຂອງພຣະເຈົ້າ (ໂຣມ 3:23) ແລະເນື່ອງດ້ວຍຄວາມບາບນີ້ເອງ ມະນຸດເຮົາທຸກໆ ຄົນຈຶ່ງຕ້ອງໄດ້ຮັບ:

3.1 ຄວາມທຸກໃນໂລກ (ປະຖົມມະການ 3:16-19)

3.2 ຄວາມຕາຍຝ່າຍເນື້ອໜັງ

3.3 ບໍ່ຮູ້ແລະບໍ່ເຂົ້າໃຈວ່າ ຕາຍແລ້ວຈະໄປເປັນຫຍັງ?ແລະຈະໄປຢູ່ໃສ່? ຄວາມຕາຍຝ່າຍຈິດວິນຍານ

3.4 ຈະຕ້ອງເຂົ້າສູ່ການພິພາກສາຮ່ວມກັບພີມານຊາຕານ (ພຣະນິມິດ 20:15)



## **ສາລະບານ**


| ບົດທີ | ເລື່ອງໃນເຫຼັ້ມ | ໜ້າ |
|---|---|---|
| 01. | ຄວາມສຳຄັນແລະທີ່ມາຂອງພຸດທະທຳນວາຍເຫຼັ້ມນີ້ | 9 |
| 02. | ທ່ານເຊື່ອຢູ່ໃນພຸດທະສາສະໜາຈິງຫຼື? | 19 |
| 03. | ພຸດທະປະຫວັດ, ຫຼັກຄຳສອນ ແລະຄວາມຈິງ | 29 |
| 04. | ພຸດທະທຳນວາຍກ່ຽວກັບຍຸກສຸດທ້າຍຂອງໂລກ | 39 |
| 05. | ຄຳທຳນວາຍກ່ຽວກັບອາຍຸສັງຂານ ຂອງພຸດທະສາສະໜາ | 47 |
| 06. | ຄຳທຳນວາຍເລື່ອງຜູ້ທີ່ຈະມາໂຜດໂລກພາຍໜ້າ | 55 |
| 07. | ວ່າດ້ວຍກຳ, ຜົນຂອງກຳ ແລະຄວາມລອດພົ້ນກຳ | 63 |
| 08. | ຄຳທຳນວາຍເຖິງຄວາມເຊື່ອມໂຊມ ຂອງພະສັດຈະທຳ | 71 |
| 09. | ຄຳທຳນວາຍຈາກລຳພື້ນເມືອງກ່ຽວກັບ ຜູ້ທີ່ຈະມາໂຜດໂລກໃນພາຍໜ້າ | 77 |
| 10. | ຄຳທຳນວາຍເຖິງແຜ່ນດິນຂອງພຣະເມສີອານ | 81 |
| 11. | ນິທານພື້ນເມືອງເລື່ອງພະຍາກາເຜືອກ | 85 |
| 12. | ທ່ານກຳລັງເດີນຢູ່ໃນທາງສາຍໃດ? | 91 |
| 13. | ຄວາມຫວັງຫຼັງຄວາມຕາຍໃນສອງສາສະໜາ | 97 |
| 14. | ຄວາມຄິດເຫັນ ແລະການຕັດສິນໃຈຂອງທ່ານ | 107 |


—-((ຈົບ))-—

ນອນ ໂດຍບໍ່ມີຜູ້ໃດສາມາດຫຼີກລ້ຽງໄດ້. ແຕ່ກ່ອນຄວາມຕາຍນັ້ນຈະມາເຖິງ ພວກເຮົາກໍຄວນພາກັນຕຽມຕົວປະເຊີນກັບມັນກ່ອນຄື ຊອກຫາຄວາມຫວັງແລະສ້າງຄວາມໝັ້ນໃຈໃຫ້ກັບຕົນເອງໄວ້. ມະນຸດເຮົາເປັນຈຳນວນຫຼາຍໄດ້ພາກັນເມີນເສີຍແລະເຄີຍໄດ້ປ່ອຍປະລະເລີຍກັນມາແລ້ວ ໂດຍຄິດວ່າມັນເປັນເລື່ອງທີ່ສຸດວິໄສທີ່ຈະເຂົ້າໃຈໄດ້ ແລະບາງຄົນນັ້ນກໍໄດ້ພາກັນເຊື່ອໄປຕາມບຸນຕາມກຳຍ້ອນບໍ່ຮູ້ຄວາມຈິງ. ບໍ່ວ່າມະນຸດເຮົາຈະເຊື່ອແລະເຂົ້າໃຈກັນຢ່າງໃດກໍຕາມ ກ່ຽວກັບເລື່ອງນີ້ ຄັນຖ້າເຮົາຫາກບໍ່ພາກັນຕຽມຕົວທີ່ຈະປະເຊີນກັບມັນ ໂດຍການເຊື່ອເພິ່ງໃນພຣະເຈົ້າພຣະເຢຊູຄຣິດແລ້ວ ຜົນທີ່ຈະຕາມມາພາຍໜ້າກໍຈະເໝືອນໆກັນທຸກຄົນຄື:

1.1 ຈະປະຫຼາດໃຈ ເມື່ອໄດ້ພົບກັບອົງພຣະເຢຊູຜູ້ທີ່ຕົນເອງໄດ້ປະຕິເສດແລະບໍ່ຮັບເມື່ອມີຊີວິດຢູ່ໃນໂລກນີ້.

1.2 ຈະພົບກັບຄວາມກິນແໜງໃຈ ຢ່າງທີ່ສຸດເມື່ອໄດ້ຮູ້ວ່າຕົນເອງຈະຕ້ອງລົງສູ່ນະຣົກຫຼັງຈາກໄດ້ຮັບການພິພາກສາໂດຍພຣະເຢຊູຄຣິດແລ້ວ.

1.3 ຈະພົບກັບຄວາມທຸກທໍລະມານໃນບຶງໄຟນະຣົກ ຢ່າງໜ້າເວດທະນາ

1.4 ຈະບໍ່ມີໂອກາດທີ່ຈະກັບໃຈໃໝ່ອີກເມື່ອເຖິງຕອນນັ້ນແລ້ວ

ເຫດການທີ່ກ່າວມານີ້ ຈະບໍ່ມີມະນຸດຄົນໃດໃນໂລກສາມາດທີ່ຈະຫຼີກລ້ຽງໄດ້ ບໍ່ວ່າເຮົາຈະເຊື່ອຢູ່ໃນລັດທິໃດຫຼືໃນສາສະໜາໃດ ອ້າງຕາມພຣະທຳຄຳສອນທີ່ພຣະເຈົ້າໄດ້ຊົງເປີດເຜີຍໄວ້ໃນພຣະທຳ (ຟີລິບປອຍ 2:10-11) ແລະໃນ (2 ໂກຣິນໂທ 5:10) ນັ້ນ.

ຈະຂໍໃຫ້ທ່ານໄດ້ທົບທວນຫວນຄິດກັນອີກເທື່ອໜຶ່ງກ່ຽວກັບເລື່ອງນີ້ ເພາະບາງທີທ່ານອາດມອງຂ້າມຄວາມຈິງແລະຄວາມສຳຄັນບາງຢ່າງໄປກໍໄດ້. ສ່ວນທ່ານຜູ້ທີ່ໄດ້ຮັບການໜູນໃຈ ຫຼືກະຕຸ້ນໃຈໃຫ້ເຫັນວ່າເລື່ອງນີ້ເປັນເລື່ອງສຳຄັນແລະຈຳເປັນຕໍ່ຊີວິດ ແລ້ວກໍເກີດມີຄວາມສົນໃຈຢ່າງຈິງຈັງ ພ້ອມທັງຕັດສິນໃຈທີ່ຈະສຶກສາຄົ້ນຄວ້າເພື່ອໃຫ້ຮູ້ຈັກຄວາມຈິງໃນເລື່ອງດັ່ງກ່າວນີ້ເພີ່ມເຕີມກັນຕໍ່ໄປແລ້ວ ຂ້າພະເຈົ້າກໍຂໍສະແດງຄວາມຍິນດີນຳ. ສຳລັບທ່ານຜູ້ທີ່ໄດ້ອ່ານແລະໄດ້ສຶກສາຮຽນຮູ້ກັນຢ່າງຈິງຈັງນັ້ນ, ເມື່ອເກີດມີຄວາມຮູ້ຄວາມເຂົ້າໃຈ, ເກີດຄວາມເຊື່ອ, ຄວາມໄວ້ວາງໃຈແລະປາຖະໜາຢາກຮັບເອົາພຣະເຈົ້າພຣະເຢຊູຄຣິດ ຜູ້ທີ່ເຮົາເຊື່ອວ່າພຣະອົງຊົງເປັນພຣະເມສີອາທີ່ຈະມາໂຜດໂລກພາຍໜ້ານີ້ແລ້ວ ຂ້າພະເຈົ້າຂໍສະແດງຄວາມດີໃຈດ້ວຍ.

2. <u>ຄຳແນະນຳຕໍ່ທ່ານຜູ້ອ່ານ</u>.

ກ. <u>ສຳລັບທ່ານຜູ້ທີ່ປະຕິເສດ, ເມີນເສີຍແລະຖືວ່າເລື່ອງນີ້ບໍ່ສຳຄັນ</u>

1. ຄັນກ້າສົມມຸດວ່າ ຊີວິດຂອງທ່ານຕ້ອງມ້ອຍມອດກອດວິນຍານອອກຈາກພາກຮ່າງກາຍ ທ່ານຮູ້ຫຼືບໍ່ວ່າດວງວິນຍານຂອງທ່ານນັ້ນຈະໄປເປັນຫຍັງ? ແລະຈະໄປຢູ່ໃສ? ຈະວຽນວາຍຕາຍເກີດ? ຈະເປັນພີຮັບຄວາມທຸກທໍລະມານໃນນະຣົກກັບຊາຕານຫຼືຈະໄປຢູ່ກັບພຣະເຈົ້າພຣະເຢຊູໃນສະຫວັນຂອງພຣະອົງ? ທ່ານຢາກຈະໄປຢູ່ບ່ອນໃດ? ແລະທ່ານຄິດວ່າທ່ານຈະໄປຢູ່ໃສ ກ້າອ້າງຕາມຄວາມເຊື່ອ ຄວາມເຂົ້າໃຈແລະຄວາມໝັ້ນໃຈຂອງທ່ານໃນເວລານີ້?

ມະນຸດເຮົາທຸກຄົນໃນໂລກນີ້ຕ່າງກໍຮູ້ຈັກແລະເຂົ້າໃຈກັນດີວ່າມື້ໜຶ່ງພວກເຮົາຈະຕ້ອງພົບກັບຄວາມຕາຍຝ່າຍເນື້ອໜັງຢ່າງແນ່



# ບົດທີ 1

# ຄວາມສຳຄັນແລະທີ່ມາຂອງ ພຸດທະທຳນວາຍເຫຼົ່ານີ້

- ອ່ານໄວ້ໄດ້ຄວາມຮູ້
- ສຶກສາໄວ້ຈະເຂົ້າໃຈໃນຄວາມຈິງ
- ເຊື່ອໄວ້ຈະໄດ້ຊີວິດອັນຕະຫຼອດໄປເປັນນິດ
- ຕິດຕາມໄປຈົນຕາຍຈະໄດ້ຢູ່ກັບພຣະເຈົ້າອົງທ່ຽງແທ້ແລະຈະໄດ້ໄປຢູ່ໃນແຜ່ນດິນສະຫວັນ

ບໍ່ວ່າຍຸກໃດຫຼືສະໄໝໃດກໍຕາມມະນຸດເຮົາມັກຈະພາກັນມົວເມົາ, ລຸ້ມຫຼົງແລະເຫີ່ເຫີມຢູ່ກັບການທີ່ຕົນໄດ້ມີສາສະໜານັ້ນໆຫຼາຍກວ່າການທີ່ຈະຊອກຫາຄວາມຈິງ, ຄວາມໝາຍ, ເປົ້າໝາຍ, ຄຳສັ່ງສອນແລະຄຳທຳນວາຍທີ່ກ່າວໄວ້ໃນສາສະໜາທີ່ຕົນເຊື່ອ ເມື່ອເປັນເຊັ່ນນີ້ຈຶ່ງເຮັດໃຫ້ເຮົາຫຼາຍຄົນຕ້ອງພາດພັ້ງຈາກເປົ້າໝາຍໃນຄວາມຕັ້ງໃຈແລະຄວາມຕ້ອງການໃນການທີ່ເຮົາໄດ້ເຊື່ອແລະໄວ້ວາງໃຈໃນສາສະໜາຂອງຕົນ.

1. <u>ຄວາມສຳຄັນ</u>.

ເຖິງທ່ານຜູ້ອ່ານທີ່ຮັກແພງແລະນັບຖືທັງຫຼາຍ, ຄຳທຳນວາຍທັງໝົດທີ່ໄດ້ບັນທຶກຢູ່ໃນໜັງສືສະບັບນີ້ ເປັນຄຳທຳນວາຍທີ່ມີຄວາມສຳ

ຄັນແລະມີຄວາມຈຳເປັນຢ່າງຍິ່ງຕໍ່ຊີວິດຂອງພວກເຮົາຊາວລາວທັງຫຼາຍ ໂດຍສະເພາະແລ້ວກໍແມ່ນຕໍ່ພີ່ນ້ອງລາວເຮົາທີ່ຍັງເຊື່ອຢູ່ໃນພຸດທະສາສະໜາ ເພາະນີ້ຄື: ປິດສະໜາແລະປັດຊະຍາ ອັນຊຶ່ງເປັນຫົວໃຈແລະເປັນຄຳສັ່ງສອນອັນສຳຄັນທີ່ອົງພະສຳມາສຳພຸດທະເຈົ້າໄດ້ຊົງຕັດກ່າວສັ່ງສອນມະນຸດເຮົາເອົາໄວ້ເມື່ອສອງພັນຫ້າຮ້ອຍປີກ່ອນ. ການທີ່ພວກເຮົາທັງຫຼາຍໄດ້ພາກັນປະໝາດ, ຂາດຄວາມເອົາໃຈໃສ່, ບໍ່ສົນໃຈ, ບໍ່ຄົ້ນຄວ້າຊອກຫາແລະເມີນເສີຍຕໍ່ຄຳທຳນວາຍເຫຼົ່ານີ້ ມັນຈະບໍ່ນຳເອົາຜົນດີໃດໆມາສູ່ຊີວິດຂອງພວກເຮົາເລີຍ ມີແຕ່ຈະນຳເອົາບັນຫາ, ຄວາມທຸກ, ຄວາມຕາຍ, ຄວາມຫາຍຍະນະແລະຄວາມກິນແໜງໃຈເທົ່ານັ້ນມາສູ່ພວກເຮົາທັງຫຼາຍໃນບັ້ນປາຍຂອງຊີວິດ.

ສຳລັບພີ່ນ້ອງຜູ້ທີ່ໄດ້ເບິ່ງເຫັນຄວາມສຳຄັນແລະຄວາມຈຳເປັນ ແລະໄດ້ພາກັນຕັ້ງໃຈສຶກສາຄົ້ນຄວ້າຊອກຫາຢ່າງຈິງໃຈ ຂ້າພະເຈົ້າເຊື່ອວ່າ ພີ່ນ້ອງຜູ້ນັ້ນຈະໄດ້ພົບກັບພຣະເຈົ້າທີ່ຕົນປາຖະໜາພົບ, ນັບຫາ ແລະ ເຮັດບຸນຫານັ້ນຢ່າງແນ່ນອນ. ສຳຄັນທີ່ສຸດກໍແມ່ນໃນເວລາທີ່ທຸກຄົນກຳລັງສຶກສາຊອກຫາຄວາມຈິງນີ້ຢູ່ ທຸກຄົນຈະຕ້ອງເຮັດໃຈໃຫ້ເປັນກາງໃຫ້ໄດ້ ແລ້ວໃຊ້ເຫດຜົນເພື່ອຄົ້ນຄິດພິຈາລະນາ ຊອກຫາຄວາມຈິງທີ່ເຊື່ອງຢູ່ໃນຄຳທຳນວາຍແລະໃນສາສະໜານັ້ນໆ.

ໃຜກໍຕາມທີ່ໄດ້ເບິ່ງເຫັນຄວາມສຳຄັນ, ໄດ້ຕັ້ງໃຈສຶກສາ, ຊອກຄົ້ນຫາຄວາມຈິງຕາມດັ່ງທີ່ກ່າວມານີ້ແລ້ວ ແລະໄດ້ສຶກສາພິຈາລະນາໄຕ່ຕອງເບິ່ງເຫດຜົນ, ຄວາມຄິດແລະຄວາມເປັນຈິງຕາມທີ່ກ່າວໄວ້ໃນໜັງສືຫົວນີ້ແລ້ວ ທ່ານກໍຈະມີໂອກາດໄດ້ພົບກັບພຣະເຈົ້າແລະໄດ້ເຂົ້າໃຈເຖິງຄວາມເປັນຈິງຕາມທີ່ເຮົາມີຄວາມຕ້ອງການນັ້ນຢ່າງແນ່ນອນ.



# ບົດທີ 14

# ຄວາມຄິດເຫັນ ແລະການຕັດສິນໃຈຂອງທ່ານ

"ຄົນໂງ່ຕາຍຍ້ອນບໍ່ຫົວຊາ
ຄົນໄຮ້ດຽງສາຕາຍຍ້ອນບໍ່ຮູ້"
"ຄົນຜູ້ສະຫຼາດມີປັນຍາຍ່ອມຄິດກ່ອນຕັດສິນໃຈ
ແຕ່ຄົນໂງ່ມັກຕັດສິນໃຈກ່ອນຄິດ"

## 1. ເມື່ອຮູ້ແລ້ວເຊັ່ນນີ້ທ່ານຈະເຮັດຢ່າງໃດກ່ຽວກັບເລື່ອງນີ້?

ພີ່ນ້ອງທີ່ຮັກແພງທັງຫຼາຍ, ເມື່ອທ່ານໄດ້ອ່ານແລະໄດ້ສຶກສາຮຽນຮູ້ເຖິງຄວາມຈິງ ຊຶ່ງປະກອບດ້ວຍຄຳອະທິບາຍແລະຂໍ້ມູນຕ່າງໆຈາກພຣະຄຣິສຕະທຳຄຳພີຂອງຄຣິສຕຽນແລະຈາກຫຼັກແຫຼ່ງຕ່າງໆແລ້ວເຊັ່ນນີ້ ທ່ານຈະວ່າຢ່າງໃດ? ທ່ານຈະຖືວ່າມັນເປັນເລື່ອງທຳມະດາ ແລ້ວກໍພາກັນປະຕິເສດແລະເມີນເສີຍກັນຕໍ່ໄປຫຼື? ຫຼືວ່າຈະຍອມຮັບເອົາຄວາມຈິງແລະຂໍ້ມູນດັ່ງກ່າວນີ້ ມາພິຈາລະນາເພື່ອຈະໄດ້ເຊື່ອແລະຮັບເອົາພຣະເຈົ້າພຣະເມສີອານອົງນີ້ຕາມຄຳສັ່ງຂອງພະພຸດທະເຈົ້າ ແລະຕາມດັ່ງທີ່ທ່ານໄດ້ພາກັນລໍຄອຍ. ສຳລັບທ່ານຜູ້ທີ່ຍັງຖືວ່າເລື່ອງນີ້ເປັນເລື່ອງທຳມະດາບໍ່ສຳຄັນຕໍ່ຊີວິດເລີຍ ຂ້າພະເຈົ້າກໍຢາກ

## 2. ຫຼັກຄໍ້າປະກັນນໍາເອົາມາອ້າງ.

ພຸດທະທຳນວາຍທັງໝົດທີ່ຂ້າພະເຈົ້າໄດ້ນຳມາບັນທຶກໄວ້ເປັນໜັງສືນ້ອຍຫູ້ັມນີ້ ແມ່ນໄດ້ມາໂດຍອາໄສທີ່ມາສາມປະການຄື:

(1) ໂດຍການສຶກສາຄົ້ນຄວ້າຈາກໜັງສືກ່ຽວກັບພຸດທະສາສະໜາໂດຍທົ່ວໄປ.

(2) ຈາກການສຳພາດແລະການໃຫ້ຄວາມຮ່ວມໄມ້ຮ່ວມມືຂອງມະຫາ, ຄູອາຈານ ທີ່ມີຄຸນວຸດທິ ທັງລາວແລະຊາວຕ່າງປະເທດ, ແລະ

(3) ຈາກປະສົບການສ່ວນຕົວເປັນເວລາເຖິງ 22 ປີທີ່ຂ້າພະເຈົ້າໄດ້ເຊື່ອກືແລະໄດ້ໃຊ້ຊີວິດຢູ່ໃນພຸດທະສາສະໜາແລະອີກ 30 ກວ່າປີທີ່ໄດ້ທຳການສຶກສາ ແລະຮັບໃຊ້ຢູ່ໃນວົງການຄຣິສຕຽນ. ຂ້າພະເຈົ້າເຊື່ອວ່າທີ່ມາທັງສາມປະການໃນຂ້າງເທິງນີ້ ຄົງຈະສ້າງຄວາມເຊື່ອກືແລະຄວາມໝັ້ນໃຈໃຫ້ກັບທ່ານຜູ້ອ່ານໄດ້ເປັນຢ່າງດີ.

## 3. ຕົວຢ່າງຂອງຜູ້ຂຽນ.

ຂ້າພະເຈົ້າເກີດແລະໃຫຍ່ຢູ່ຄອບຄົວ, ຢູ່ໃນບ້ານແລະຢູ່ໃນປະເທດທີ່ເຊື່ອແລະເອີ້ນຕົນເອງວ່າພຸດ. ຕັ້ງແຕ່ເກີດມາຂ້າພະເຈົ້າເອງກໍແມ່ນເຄີຍບວດແຕ່ພຽງຄັ້ງດຽວໃນຊີວິດ ຄືບວດຈູງຄົນຕາຍພຽງເຄິ່ງມື້ເທົ່ານັ້ນອັນຊຶ່ງເປັນການບວດຕາມປະເພນີທີ່ພໍ່ແມ່ເຮົາເຄີຍປະຕິບັດມາ ຢ່າງໃດກໍດີ ເຖິງແມ່ນວ່າຂ້າພະເຈົ້າເອງຈະບໍ່ເຄີຍບວດຮຽນເຖິງເລື່ອງຂອງພຸດທະສາສະໜານີ້ຢ່າງຈິງຈັງກໍຕາມ ແຕ່ກໍຖືວ່າຕົນເຊື່ອໃນພຸດທະສາສະໜາແລະເປັນພຸດທະສາສະນິກະຊົນມາຈົນເຖິງ 22 ປີ. ໃນຊ່ວງໄລຍະ 22 ປີທີ່ເຊື່ອຢູ່ໃນພຸດທະສາສະໜານີ້ ຂ້າພະເຈົ້າກ້າເວົ້າໄດ້ຢ່າງເຕັມປາກວ່າ ຂ້າພະເຈົ້າເອງກໍເປັນພຸດທີ່ດີຄົນໜຶ່ງເໝືອນກັບຄົນລາວຄົນອື່ນໂດຍທົ່ວໄປທີ່ມີທັງຄວາມຮັກ, ມີທັງ

ຄວາມສັດທາ, ມີທັງການໃຫ້ກຽດນັບຖື ແລະມີທັງການປົກປ້ອງຮັກສາ ໃຜຈະມາປະໝາດແລະລົບຫຼູ່ສາສະໜານີ້ບໍ່ໄດ້. ນອກຈາກຈະເປັນພຸດທີ່ດີແລ້ວ ຂ້າພະເຈົ້າຍັງເປັນພຸດທີ່ງົມງວາຍທີ່ສຸດຄົນໜຶ່ງນຳອີກດ້ວຍ ເພາະເຖິງແມ່ນວ່າຂ້າພະເຈົ້າຈະເຊື່ອ ແລະປະກອບສ່ວນໃນພິທີກຳຕ່າງໆຢ່າງສຸດໃຈແລະສຸດສັດທາກໍຕາມ ແຕ່ການປະພຶດການກະທຳຂອງຂ້າພະເຈົ້າກໍແມ່ນເຮັດແລະປະຕິບັດໄປແບບຫອຍນຳຄາດ ຄືໄດ້ເຮັດແລະປະຕິບັດໄປແບບຕາມມີຕາມເກີດ, ຕາມພໍ່ຕາມແມ່ ແລະຕາມຮີດຄອງປະເພນີເພິ່ນພາເຊື່ອໄປຊື່ໆ ໂດຍທີ່ຕົນເອງນັ້ນບໍ່ໄດ້ມີຄວາມຮູ້ແລະຄວາມເຂົ້າໃຈເທື່ອໃດເລີຍກ່ຽວກັບຄຳສອນໃນພຸດທະສາສະໜານັ້ນ.ໃນຕອນນັ້ນຂ້າພະເຈົ້າຮອດບໍ່ເຄີຍຄິດສົນໃຈທີ່ຈະສຶກສາຮ່ຳຮຽນພະທຳຄຳສອນຂອງພຸດທະສາສະໜານັ້ນແຕ່ປະການໃດເລີຍ ໂດຍໄດ້ຄິດຢູ່ໃນໃຈສະເໝີວ່າ ແນວໃດມັນກໍຈະຕ້ອງເປັນສາສະໜາທີ່ດີແລະສັກສິດຢູ່ແລ້ວ ເພາະຄັນຖ້າມັນຫາກບໍ່ດີ ພໍ່ແມ່ແລະປູ່ຍ່າຕາຍາຍຂອງພວກເຮົາເພິ່ນກໍຄົງຈະບໍ່ພາພວກເຮົາເຊື່ອຢ່າງແນ່ນອນ.

ຢູ່ມາເມື່ອຂ້າພະເຈົ້າອາຍຸໄດ້ປະມານ 20 ປີ ຂ້າພະເຈົ້າ ກໍເລີ່ມຊອກສະແຫວງຫາຄວາມຮູ້ໃສ່ຕົວຕາມພາສາຂອງຊາວໜຸ່ມທົ່ວໆໄປ. ຂ້າພະເຈົ້າມີໂອກາດໄດ້ພົບກັບພວກສອນສາສະໜາຄຣິດຊຶ່ງເປັນຊາວອາເມຣິກາກຸ່ມໜຶ່ງຊຶ່ງພວກເພິ່ນໄດ້ພາກັນໄປທີ່ປະເທດລາວຂອງພວກເຮົາ ເພື່ອປະກາດເຖິງຄວາມຈິງກ່ຽວກັບພຣະເຈົ້າ, ມະນຸດ, ໂລກ ແລະຈັກກະວານແລະການຮັບເອົາຄວາມລອດພົ້ນຈາກຄວາມບາບ ໂດຍທາງ ຄວາມເຊື່ອໃນອົງພຣະເຢຊູຄຣິດ. ເພື່ອໃຫ້ມີໂອກາດໄດ້ບອກຄວາມຈິງທີ່ກ່າວມານີ້ແກ່ຄົນລາວເຮົາ ພວກເພິ່ນຈຶ່ງໄດ້ຈັດໃຫ້ມີການສອນພາສາອັງກິດຟຣີຂຶ້ນ ຊຶ່ງກົງກັນກັບເວລາທີ່ຂ້າພະເຈົ້າຢາກຮຽນພາສາອັງກິດຢູ່ພໍດີຈຶ່ງໄດ້ໄປຮຽນນຳພວກເພິ່ນ.ໃນຂະນະທີ່ຮຽນພາສາ





"ເມື່ອມີໂອກາດທີ່ຈະຕ້ອນຮັບແຂກຄົນ
ໃດຄົນໜຶ່ງທີ່ຢ້ຽມຢາມ ຈົ່ງຕ້ອນຮັບເພິ່ນ
ໃຫ້ດີທີ່ສຸດເພາະແຂກຜູ້ນັ້ນອາດຈະບໍ່ມີ
ໂອກາດກັບມາໃຫ້ເຮົາໄດ້ຕ້ອນຮັບອີກ"

ເຊັ່ນດຽວກັບຊີວິດນີ້ ຈົ່ງເຮັດໃນສິ່ງທີ່ດີ ເຊື່ອຈົ່ງເຊື່ອ
ໃນສິ່ງທີ່ຖືກຕ້ອງ ເພາະພີ່ນ້ອງອາດຈະບໍ່ໄດ້ເຊື່ອອີກ.

ອ້າງຕາມຄຳກ່າວຂອງພຣະອົງແລ້ວຜູ້ນັ້ນຈະຕ້ອງຕາຍໃນຄວາມຜິດບາບຂອງຕົນ (ໂຢຮັນ 8:24) ແຕ່ສ່ວນບັນດາຜູ້ທີ່ເຊື່ອ ຜູ້ນັ້ນກໍຈະມີຊີວິດອັນຕະຫຼອດໄປເປັນນິດ ແລະບໍ່ເຂົ້າໃນການພິພາກສາ ແຕ່ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ (ໂຢຮັນ 5:24). ຄວາມຕາຍໃນທີ່ນີ້ກໍຄືຄວາມຕາຍຄັ້ງທີ່ສອງຂອງວິນຍານຈິດຫຼືຂອງຊີວິດທີ່ແທ້ຈິງຂອງມະນຸດສະໂລກໃນວັນສຸດທ້າຍ. ໃນພຣະທຳຄຳພີຂອງຄຣິສຕຽນຍັງໄດ້ສອນເອົາໄວ້ອີກວ່າ ມະນຸດເຮົາບໍ່ຈຳເປັນທີ່ຈະຕ້ອງຕາຍໃນຊີວິດຝ່າຍວິນຍານຈິດນີ້ກໍໄດ້ ແຕ່ຄັນຖ້າເຮົາຫາກບໍ່ຢາກຕາຍ ພວກເຮົາຈຳເປັນຕ້ອງໄດ້ຫຼົບຫຼີໜີໃຫ້ພົ້ນຈາກຄວາມບາບທີ່ມີຢູ່ໃນຕົວເຮົາທຸກຄົນນັ້ນເສຍກ່ອນ ແລະວິທີທີ່ເຮົາທຸກຄົນຈະໜີພົ້ນຈາກຄວາມບາບນີ້ໄດ້ນັ້ນ ໃນໂລກນີ້ກໍແມ່ນມີຢູ່ແຕ່ພຽງທາງດຽວຄື ທາງຂອງອົງພຣະເຢຊູຄຣິດແຕ່ພຽງເທົ່ານັ້ນ ເພາະໃນທາງອື່ນຫຼືໃນທາງຜູ້ອື່ນນັ້ນຄວາມລອດພົ້ນນັ້ນບໍ່ມີເລີຍ (ກິດຈະການ 4:12). ມີແຕ່ທາງດຽວເທົ່ານັ້ນຄືທາງຂອງອົງພຣະເຢຊູຄຣິດ ຊຶ່ງພຣະເຈົ້າໄດ້ຊົງຕັ້ງໄວ້ເພື່ອໃຫ້ເປັນທາງທີ່ຈະຍົກຄວາມຜິດບາບໃຫ້ແກ່ມະນຸດສະໂລກທັງຫຼາຍ (ມັດທາຍ 1:21).

<u>ບົດສະຫຼຸບ</u>:

ເມື່ອຮູ້ແລ້ວເຊັ່ນນີ້ ທ່ານຈະຕ້ອງເຮັດຢ່າງໃດ? ຈະດຳລົງຊີວິດໃນຄວາມສິ້ນຫວັງນີ້ກັນຕໍ່ໄປຫຼື? ຫຼືຈະຮັບເອົາຄວາມໝັ້ນໃຈອັນໃໝ່ໃນອົງພຣະເຢຊູຄຣິດຜູ້ນີ້. ສຳລັບເລື່ອງນີ້ທ່ານເທົ່ານັ້ນຈະເປັນຜູ້ຕັດສິນໃຈ ແລະຈະເລືອກທາງເດີນນີ້ສຳລັບຕົນເອງໃນຊີວິດ. ຂ້າພະເຈົ້າກໍໄດ້ແຕ່ອະທິຖານ ແລະຫວັງຢ່າງຍິ່ງວ່າ ທ່ານຈະເລືອກເອົາທາງທີ່ດີແລະທາງທີ່ຖືກຕ້ອງສຳລັບຊີວິດ ຄືທາງອົງພຣະເຢຊູນີ້.





ອັງກິດຢູ່ນັ້ນ ພວກເພິ່ນກໍໄດ້ສວຍໂອກາດເອົາປຶ້ມພຣະຄຳພີທີ່ເປັນພາສາອັງກິດມາໃຫ້ເຝິກອ່ານໄປນຳດ້ວຍ. ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງມີໂອກາດໄດ້ອ່ານແລະໄດ້ຮຽນຮູ້ເຖິງເລື່ອງຂອງພຣະເຈົ້າພຣະເຢຊູຄຣິດເປັນຄັ້ງທຳອິດໃນຊີວິດ.

ໃນຕອນທຳອິດເມື່ອຂ້າພຣະເຈົ້າໄດ້ຍິນໄດ້ຟັງເຖິງເລື່ອງນີ້ຂ້າພະເຈົ້າກໍເສີຍໆແລະຄິດຢູ່ໃນໃຈສະເໝີວ່າ ສາສະໜາໃດກໍດີຄືກັນໝົດແລະມີເປົ້າໝາຍໃນການສອນໃຫ້ຄົນເປັນຄົນດີທັງນັ້ນ. ດ້ວຍເຫດນີ້, ມະນຸດຈະເຊື່ອໃນສາສະໜາໃດກໍບໍ່ສຳຄັນເພາະດີດ້ວຍກັນທັງນັ້ນ. ຕໍ່ມາເມື່ອໄດ້ຍິນຫຼາຍເຂົ້າແບບເພີນໆກໍເລີ່ມທີ່ຈະປະຕິເສດແລະຄິດຄຽດຊັງຢູ່ໃນໃຈດ້ວຍ ແຕ່ພາຍຫຼັງທີ່ໄດ້ສຶກສາຢູ່ເປັນເວລາເຖິງສອງປີກໍໄດ້ພົບວ່າ ຄຳສອນໃນພຣະຄຣິສຕະທຳຄຳພີ ທີ່ພວກເພິ່ນນຳເອົາມາສອນນັ້ນລ້ວນແຕ່ເປັນຄວາມຈິງແລະເປັນຄຳຕອບຂອງຊີວິດທີ່ຂ້າພະເຈົ້າແລະພີ່ນ້ອງຊາວລາວຂອງເຮົາປາຖະໜາ, ຊອກແລະງົມຫາມາຕະຫຼອດຊີວິດ. ໂດຍສະເພາະກໍແມ່ນຄຳຕອບຂອງຄຳຖາມທີ່ວ່າ: ມະນຸດເຮົາເປັນໃຜ? ເປັນຄົນຫຼືເປັນສັດ? ເກີດມາແຕ່ໃສ? ເກີດມາເອງຫຼືມີຜູ້ສ້າງ? ຖ້າມີຜູ້ສ້າງຜູ້ສ້າງຜູ້ນັ້ນແມ່ນໃຜ? ເປັນຜູ້ສັກສິດ, ເປັນສິ່ງສັກສິດ,ຫຼືເປັນພະອິນພະພົມກັນແທ້? ເປັນຫຍັງຈຶ່ງມີເກີດແກ່ເຈັບຕາຍ? ຕາຍແລ້ວຈະໄປເປັນຫຍັງແລະຈະໄປຢູ່ໃສ? ຄວາມຈິງເຫຼົ່ານີ້ໄດ້ເຮັດໃຫ້ຂ້າພະເຈົ້າຢາກຕັດສິນໃຈທີ່ຈະເຊື່ອ ແລະຕ້ອນຮັບເອົາອົງພຣະເຢຊູຄຣິດໄວ້ເປັນພຣະເຈົ້າໃນຊີວິດ. ແຕ່ກ່ອນທີ່ຈະເຊື່ອແລະຕັດສິນໃຈປະຖິ້ມຫຼືເລີກເຊື່ອໃນພຸດ, ພາມ, ຜີ ທີ່ເປັນສາສະໜາປະຈຳຊາດປະຈຳຊີວິດຂອງຂ້າພະເຈົ້າຢູ່ແລ້ວໃນເວລານັ້ນ. ຂ້າພະເຈົ້າກໍຢາກຈະເພີ່ມຄວາມແນ່ໃຈໃຫ້ກັບຕົນເອງເສຍກ່ອນໆຈາກໄປ. ດັ່ງນັ້ນຂ້າພະເຈົ້າຈຶ່ງໄດ້ເລີ່ມຕົ້ນຕັ້ງໃຈສຶກສາຄົ້ນຄວ້າສົມທຽບເບິ່ງຫຼັກຄຳ

ສອນທີ່ເປັນມາໃນອະດີດ, ທີ່ເປັນຢູ່ໃນປະຈຸບັນແລະທີ່ຈະເປັນໄປໃນອະນາຄົດພ້ອມດ້ວຍປະຫວັດສາດ, ຄຳທຳນວາຍແລະພິທີກຳຕ່າງໆດ້ວຍ. ຍິ່ງຂ້າພະເຈົ້າໄດ້ສຶກສາຄົ້ນຄວ້າຫຼາຍເທົ່າໃດກໍຍິ່ງເຮັດໃຫ້ຂ້າພະເຈົ້າເກີດຄວາມເຊື່ອ,ມີຄວາມໝັ້ນໃຈແລະພ້ອມທີ່ຈະຕັດສິນໃຈເຊື່ອໄວຍິ່ງຂຶ້ນ. ໂດຍສະເພາະແລ້ວກໍແມ່ນຄຳທຳນວາຍກ່ຽວກັບພຣະເມສີອານທີ່ຈະມາໂຜດໂລກພາຍໜ້າໃນພຸດທະສາສະໜານັ້ນມັນຊ່າງກົງກັນຫຼືຄ້າຍຄືກັນກັບຄຳທຳນວາຍໃນສາສະໜາຢູດາຍ. ຫຼາຍກວ່ານັ້ນກໍແມ່ນຄວາມເປັນຈິງທີ່ປາກົດຢູ່ໃນພຣະທຳຄຳພີລ້ວນແຕ່ເປັນສິ່ງທີ່ຂ້າພະເຈົ້າຕ້ອງການທັງນັ້ນ.ໃນທີ່ສຸດຂ້າພະເຈົ້າຈຶ່ງໄດ້ຕັດສິນໃຈເຊື່ອແລະຕ້ອນຮັບເອົາພຣະເຢຊູຄຣິດອົງນີ້ຜູ້ຊົງເປັນພຣະເຈົ້າໄວ້ເປັນພຣະເຈົ້າແລະເປັນພຣະຜູ້ຊົງໂຜດໃຫ້ພົ້ນໃນຊີວິດຂອງຂ້າພະເຈົ້າ.

ຄວາມຈິງ,ເຫດຜົນ,ພຣະທຳຄຳສອນແລະຄຳທຳນວາຍທັງຫຼາຍທີ່ຂ້າພະເຈົ້າໄດ້ນຳເອົາມາບັນທຶກໄວ້ໃນໜັງສືພຸດທະທຳນວາຍສະບັບນີ້ ລ້ວນແຕ່ເປັນຜົນແຫ່ງການສຶກສາຄົ້ນຄວ້າທີ່ຂ້າພະເຈົ້າໄດ້ຄົ້ນພົບແລະໄດ້ນຳມາບັນທຶກໄວ້ໃນໜັງສືເຫຼັ້ມນີ້ ໂດຍຫວັງເປັນຢ່າງຍິ່ງວ່າ ມື້ໜຶ່ງທ່ານແລະພີ່ນ້ອງຊາວລາວຂອງພວກເຮົາບາງຄົນຈະໄດ້ຈັບຂຶ້ນມາອ່ານແລະສຶກສາຄົ້ນຄວ້າ. ເມື່ອໄດ້ອ່ານແລະໄດ້ສຶກສາຮຽນຮູ້ແລ້ວກໍຈະໄດ້ພົບກັບຄວາມຮູ້ ຄວາມເຂົ້າໃຈໃນຄວາມຈິງແລະໄດ້ພົບກັບພຣະເຈົ້າອົງທ່ຽງແທ້ທີ່ມະນຸດເຮົາທຸກຄົນຕ້ອງການ ແລະໄດ້ພາກັນຊອກສະແຫວງຫາແລະໄດ້ລໍຄອຍຖ້າມາເປັນເວລາດົນນານໃນຊີວິດ.

## 4. ບົດຮຽນທີ່ໄດ້ຮັບ.

ຈາກການສຶກສາຄົ້ນຄວ້າຂອງຂ້າພະເຈົ້າໃນເລື່ອງຂອງຄຣິສຕະສາສະໜາແລະພຸດທະສາສະໜາຢ່າງຈິງຈັງນີ້ ມັນໄດ້ນຳເອົາຜົນດີ





ຫຼັບກໍຕື່ນ: ພຣະຄຳພີສອນວ່າທຸກຄົນທີ່ຕາຍໄປໃນພຣະເຢຊູເປັນເໝືອນກັບຄົນຫຼັບເທົ່ານັ້ນດັ່ງທີ່ເຮົາໄດ້ພົບໃນຊີວິດຂອງລາຊະໂລ. ພຣະເຢຊູຊົງບອກສາວົກວ່າ (ໂຢຮັນ 11:11). ນີ້ສະແດງວ່າຫຼັບໄປໃນພຣະເຢຊູນີ້ຍັງມີຕື່ນ. ທຸກຊີວິດທີ່ຕາຍໄປແລ້ວນັ້ນຈະຕ້ອງຟື້ນຂຶ້ນມາດ້ວຍກັນທຸກຄົນ ເພື່ອເຂົ້າສູ່ການພິພາກສາ ກ່ອນທີ່ຈະຂຶ້ນສູ່ສະຫວັນຫຼືລົງນະຮົກຕາມຄວາມເຊື່ອແລະຕາມການປະຕິບັດຂອງຕົນ (2 ໂກຣິນໂທ 5:10).

ຟື້ນກໍມີ: ສຳລັບເລື່ອງນີ້ພຣະຄຳພີໄດ້ຢືນຢັນໄວ້ຢ່າງສຸດຂີດວ່າ "ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ" (1 ເທຊະໂລນີກ 4:16) ຊຶ່ງລັກສະນະຂອງການຄືນຂຶ້ນມານັ້ນໄດ້ອະທິບາຍຢືນຢັນຢ່າງແຈ່ມແຈ້ງໃນ (1 ໂກຣິນໂທ 15:1-58). ນອກຈາກການຢືນຢັນຂອງພຣະຄຳພີແລ້ວ ພຣະເຢຊູຍັງໄດ້ສົ່ງເສີມໃຫ້ພວກເຮົາເກີດຄວາມໝັ້ນໃຈ ໂດຍການເອີ້ນລາຊະໂລໃຫ້ເປັນຂຶ້ນມາຈາກຄວາມຕາຍ ແລະນອກຈາກນັ້ນ ພຣະອົງເອງກໍໄດ້ເປັນຄືນຂຶ້ນມາຈາກຄວາມຕາຍເຊັ່ນດຽວກັນ ພາຍຫຼັງທີ່ໄດ້ຖືກຝັງໄວ້ໃນອຸບໂມງມາເປັນເວລາເຖິງສາມວັນແລ້ວ.

ໜີກໍພົ້ນ: ເປັນທີ່ຊາບກັນດີຢູ່ແລ້ວວ່າ ມະນຸດເຮົາຈະໜີອັນໃດກໍຄົງຈະໜີໄດ້ ແຕ່ຈະໜີຄວາມຕາຍນີ້ບໍ່ພົ້ນເປັນແນ່ແທ້. ເມື່ອເປັນເຊັ່ນນີ້ ເຫດສັນໃດພວກເຮົາຈຶ່ງຈະສາມາດໜີພົ້ນຈາກຄວາມຕາຍນີ້ໄດ້ໂດຍທາງພຣະເຢຊູຄຣິດ? ເຫດຜົນນັ້ນກໍແມ່ນມີຢູ່ວ່າ ທີ່ພວກເຮົາພົ້ນໄດ້ກໍຍ້ອນວ່າ ພຣະເຢຊູນັ້ນໄດ້ຊົງຕາຍແທນເຮົານັ້ນເອງ. ຄວາມຕາຍທີ່ພຣະອົງໄດ້ຊົງຕາຍແທນພວກເຮົານັ້ນ ແມ່ນຄວາມຕາຍຝ່າຍວິນຍານຈິດບໍ່ແມ່ນເນື້ອໜັງ. ດັ່ງນັ້ນ, ໃຜກໍຕາມທີ່ບໍ່ຍອມເຊື່ອໃນພຣະອົງ

ເບີດຂອງໂລກແລະຈັກກະວານນັ້ນກໍມີຄວາມແຕກຕ່າງກັນດ້ວຍ. ພຣະຄຳພີໄດ້ສິດສອນເອົາໄວ້ວ່າ ມະນຸດເຮົາແຕ່ລະຄົນນັ້ນຈະບໍ່ມີການວຽນວາຍຕາຍເກີດ ແຕ່ຈະເກີດພຽງແຕ່ເທື່ອດຽວຫຼັງຈາກນັ້ນກໍຈະລໍການເຂົ້າສູ່ການພິພາກສາຕາມທີ່ພຣະເຈົ້າກຳນົດໄວ້ (ເຮັບເຣີ 9:27). ພຣະເຈົ້າບໍ່ໄດ້ມີພຣະປະສົງທີ່ຈະໃຫ້ມະນຸດເຮົາຄົນໜຶ່ງຄົນໃດຕ້ອງຈິບຫາຍ ແຕ່ປາຖະໜາຢາກໃຫ້ເຮົາທຸກຄົນ ໄດ້ມາເຖິງການກັ່ບໃຈເກົ່າຮັບເອົາໃຈໃໝ່ແລະໄດ້ຮັບເອົາຄວາມລອດພົ້ນຈາກບາບກຳໃນພຣະອົງ (2 ເປໂຕ 3:9). ໃຜກໍຕາມເມື່ອມີຊີວິດຢູ່ ຫາກມີໂອກາດໄດ້ເຊື່ອແລະໄວ້ວາງໃຈໃນອົງພຣະເຢຊູຄຣິດແລ້ວ ຜູ້ນັ້ນກໍຈະສາມາດເກີດມີຄວາມໝັ້ນໃຈໃນຕົນເອງໄດ້ວ່າ: ໄປ (ຕາຍ) ກໍຕ້ອງມີກັບ, ຫຼັບ (ຕາຍ) ກໍຕ້ອງມີຕື່ນ, ຟື້ນກໍຕ້ອງມີ ແລະຖ້າໜີກໍຈະຕ້ອງພົ້ນ ຊຶ່ງທັງໝົດນີ້ແມ່ນກົງກັນຂ້າມກັບຄວາມເຊື່ອທີ່ມີຢູ່ໃນພຸດທະສາສະໜາທັງນັ້ນ ຍົກຕົວຢ່າງດັ່ງຕໍ່ໄປນີ້:

ໄປກໍກັບ: ພຣະຄຳພີສອນວ່າທຸກຄົນທີ່ຕາຍໄປແລ້ວນັ້ນເຮົາຈະໄດ້ພົບກັນອີກ ເພາະພຣະເຢຊູຈະນຳຄົນເຫຼົ່ານັ້ນໃຫ້ກັບມາພ້ອມພຣະອົງ (1ເທຊະໂລນິກ4:14). ອີກອັນໜຶ່ງພຣະເຢຊູເອງກໍໄດ້ໃຫ້ຄຳໝັ້ນສັນຍາກັບເຫຼົ່າອັກຄະສາວົກຂອງພຣະອົງວ່າ ພຣະອົງຈະສະເດັດມາອີກ (ໂຢຮັນ 14:1-3) ແລະໃນວັນທີ່ພຣະອົງຊົງສະເດັດກັບຄືນສູ່ສະຫວັນນັ້ນ ຕໍ່ໜ້າສາວົກຂອງພຣະອົງແລະຕໍ່ໜ້າຝູງຊົນຫຼາຍກວ່າ 500 ຄົນນັ້ນເທວະດາສອງອົງກໍໄດ້ປາກົດແກ່ພວກເພິ່ນແລະໄດ້ບອກວ່າ “ພຣະເຢຊູອົງນີ້ຊຶ່ງຊົງຮັບໄປຈາກພວກທ່ານ, ພວກທ່ານໄດ້ເຫັນພຣະອົງຂຶ້ນເມືອຍັງສະຫວັນນັ້ນ” ( ກິດຈະການ 1:11). ນີ້ເປັນຄຳກ່າວທີ່ຢືນຢັນແກ່ພວກເຮົາທັງຫຼາຍວ່າ ເມື່ອຈາກໄປຫຼືຕາຍໄປໃນອົງພຣະເຢຊູນັ້ນ ພວກເຮົາຍັງມີຄວາມຫວັງວ່າຈະຕ້ອງໄດ້ກັບມາອີກພ້ອມກັບພຣະອົງ.





ສອງຢ່າງມາສູ່ຊີວິດຄື: (1) ມັນໄດ້ຊ່ອຍໃຫ້ຂ້າພະເຈົ້າໄດ້ພົບແລະໄດ້ຮູ້ຈັກກັບພຣະເຈົ້າ(ໄດ້ພົບພຣະເຈົ້າ) (2) ໄດ້ເຂົ້າໃຈໃນຄວາມຈິງກ່ຽວກັບຕົນເອງແລະການເປັນມາຂອງມວນມະນຸດຊາດໃນໂລກ (ໄດ້ພົບຕົນເອງແລະຄົນອື່ນ) ແລະ (3) ໄດ້ຮູ້ຈັກວ່າມະນຸດໃຕ້ຮົ່ມຟ້ານັ້ນມາຈາກບ່ອນດຽວກັນ (ປະຖົມມະການ 1:26; ກິດຈະການ 17:26) ມີຄວາມບາບ ແລະຈະຕ້ອງໄດ້ຮັບໂທດແລະຮັບຄວາມລອດພົ້ນຈາກທາງດຽວກັນ ຄືທາງຂອງອົງພຣະເຢຊູຄຣິດເຈົ້ານີ້ດ້ວຍກັນທັງນັ້ນ ໃນຕອນທຳອິດຂ້າພະເຈົ້າກໍເຂົ້າໃຈຜິດຄິດວ່າສາສໜາຄຣິດຫຼືທາງຂອງພຣະເຢຊູຄຣິດນີ້ເປັນທາງທີ່ເຫັນແກ່ຕົວ ແຕ່ພໍໄດ້ສຶກສາຢ່າງເຖິງຖອງແລະເລິກເຊິ່ງແລ້ວ ຈຶ່ງມີໂອກາດໄດ້ເຂົ້າໃຈ. ຖ້າທ່ານໃດຫາກມີຄວາມຮູ້ສຶກແລະມີອະຄະຕິເຊັ່ນນີ້ໃນເວລານີ້ທີ່ກຳລັງອ່ານໜັງສືເຫຼັ້ມນີ້ຢູ່ໂປດຢ່າໄດ້ຢຸດແລະເລີກອ່ານ ຂໍໃຫ້ທ່ານນຶກຢູ່ສະເໝີວ່ານີ້ຄືຄວາມຈິງທີ່ສຳຄັນທີ່ສຸດທີ່ຕ້ອງການໃນຊີວິດທີ່ພົມານຊາຕານບໍ່ປາຖະໜາທີ່ຈະໃຫ້ທ່ານແລະມະນຸດຄົນໃດໃນໂລກນີ້ໄດ້ຮູ້, ໄດ້ພົບແລະໄດ້ເຂົ້າໃຈ.

## 5. <u>ເຄັດລັບທີ່ຄວນຮູ້</u>.

ຈາກປະສົບການແລະຄວາມເຊື່ອຖືອັນແທ້ຈິງຂອງຂ້າພະເຈົ້າກັບຍາດພີ່ນ້ອງທີ່ຜ່ານມາ ປາກົດວ່າ ພວກເຮົາໄດ້ພາກັນເຊື່ອແລະນັບຖືສາສະໜາພຸດຢ່າງເຄັ່ງຄັດ ແຕ່ໄດ້ນັບຖືຕັ້ງແຕ່ປາກ ຍ້ອນບໍ່ຮູ້ແລະບໍ່ເຂົ້າໃຈ ສ່ວນພາກປະຕິບັດແລະພິທີກຳຕ່າງໆນັ້ນແມ່ນປະຕິບັດກັນໄປຄົນລະເລື່ອງ ເຊັ່ນ: ເຊື່ອໃນສາສະໜາພຸດປະຕິບັດຕາມລັດທິພາມແລະໄວ້ວາງໃຈໃນຜີ. ຄວາມຈິງການເຊື່ອແລະການປະຕິບັດເຊັ່ນນີ້ ບໍ່ໄດ້ມີແຕ່ຂ້າພະເຈົ້າແລະຄອບຄົວ ແຕ່ຄົນລາວເກືອບທຸກຄົນແມ່ນໄດ້ພາກັນເຊື່ອໃນທຳນອງນີ້ດ້ວຍກັນທັງນັ້ນ ແມ່ນແຕ່ພະສົງອົງຄະເຈົ້າເອງທີ່

ບວດຢູ່ໃນວັດ ກໍຍັງເຊື່ອໃນທໍານອງດຽວກັນນີ້ ແລະໃນບາງກໍລະນີນັ້ນກໍຍິ່ງເຊື່ອຜິດພາດໄປຫຼາຍກວ່າອອກຕົນຍາດໂຍມເສຍອີກດັ່ງເຊັ່ນ: ການເຊື່ອໃນເວດມົນຄາຖາ, ເຊື່ອໃນກະຕຸດບຸດດາ, ເຊື່ອນວດສະເໜ່ຫາແລະເຄື່ອງແຄ້ວຂອງຄົງ ຊຶ່ງອົງພະສໍາມາສໍາພຸດທະເຈົ້າບໍ່ເຄີຍໄດ້ສອນເອົາໄວ້ໃນທໍານອງນີ້. ໃນເມື່ອພະສົງຜູ້ທີ່ປະຕິບັດທໍາແລະເປັນຜູ້ນໍາທາງສາສະໜາເອງຫາກຍັງຂາດຄວາມຮູ້ຄວາມເຂົ້າໃຈແລະຍັງເຊື່ອກັນໄປຢ່າງຜິດພາດຢູ່ເຊັ່ນນີ້ແລ້ວ ພວກເຮົາຜູ້ທີ່ເປັນພຸດທະສາສະນິກະຊົນທໍາມະດາທີ່ຄອຍແຕ່ຈະຮັບຄໍາແນະນໍາແລະຮັບການສິດສອນຈາກເພິ່ນອີກຕໍ່ໜຶ່ງນັ້ນ ຈະມີໂອກາດຮູ້ແລະເຂົ້າໃຈໃນຄໍາສັ່ງສອນຂອງພະພຸດທະເຈົ້າຢ່າງຖືກຕ້ອງນັ້ນໄດ້ຢ່າງໃດ? ຈະມີໂອກາດພົບກັບພຣະເຈົ້າພຣະເມສີອານຫຼືພຣະສີອະຣິຍະເມດໄຕຣ ຜູ້ທີ່ຈະມາໂຜດໂລກໃຫ້ພົ້ນບາບຕາມດັ່ງທີ່ພະພຸດທະອົງໄດ້ທໍານວາຍເອົາໄວ້ນັ້ນໄດ້ຢ່າງໃດ? ຂ້າພະເຈົ້າເອງເຫັນວ່າ ໂອກາດທີ່ເຮົາຈະໄດ້ເຊື່ອພຸດຢ່າງຖືກຕ້ອງແລະຈະໄດ້ພົບກັບຄວາມເຂົ້າໃຈໃນຄໍາສັ່ງສອນອັນແທ້ຈິງຂອງອົງສໍາມາສໍາພຸດທະເຈົ້ານັ້ນແມ່ນບໍ່ມີເລີຍ. ດ້ວຍເຫດນີ້ພວກເຮົາຈຶ່ງຈໍາເປັນຕ້ອງອາໄສຫຼັກຄໍາສອນທີ່ວ່າ "ອັດຕະຫິອັດຕະໂນນາໂຖ" (ຕົນເປັນທີ່ເພິ່ງຂອງຕົນ) ນີ້ ເປັນທີ່ເພິ່ງເພື່ອຈະໄດ້ສຶກສາຄົ້ນຄວ້າຫາຫົນທາງນີ້ດ້ວຍຕົນເອງ. ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າຄວາມຮູ້,ຄວາມເຂົ້າໃຈ, ຂໍ້ຄິດ, ຄໍາສອນ, ຄໍາແນະນໍາແລະຄໍາຊັກຊວນທັງໝົດທີ່ຂ້າພະເຈົ້າໄດ້ນໍາມາບັນທຶກໄວ້ໃນໜັງສືສະບັບນີ້ຈະກາຍມາເປັນບົດຮຽນອັນລໍ້າຄ່າແກ່ທ່ານແລະຍາດຕິພີ່ນ້ອງທີ່ຕ້ອງການຄວາມຮູ້ແລະຕ້ອງການການຫຼຸດພົ້ນຈາກການງົມງວາຍ ຈະໄດ້ພົບກັບພຣະເຈົ້າແລະໄດ້ເຂົ້າໃຈໃນເລື່ອງຂອງພຸດທະທໍານວາຍແລະຂໍ້ຄວາມທັງຫຼາຍທີ່ພົວພັນກັນໃນເລື່ອງນີ້ຫຼາຍຕື່ມຂຶ້ນ.





## 2. ຄວາມຫວັງຂອງຊີວິດຫຼັງຄວາມຕາຍໃນພຣະເຢຊູ.

ຄໍາສອນ ທີ່ກ່ຽວກັບຄວາມຫວັງຂອງຊີວິດຫຼັງຄວາມຕາຍໃນພຣະເຢຊູເປັນຄໍາສອນທີ່ມີການສອນໄວ້ຢ່າງຊັດເຈນແລະແຈ່ມແຈ້ງໃນພຣະຄໍາພີ ຊຶ່ງພຣະເຈົ້າໄດ້ຊົງສອນແລະເປີດເຜີຍເອົາໄວ້ໃນພຣະຄໍາພີວ່າ ຄວາມຕາຍນີ້ມັນບໍ່ໄດ້ເປັນທໍາມະຊາດຂອງມະນຸດຫຼືບໍ່ກໍບໍ່ໄດ້ເປັນກົດເກນຂອງຊີວິດຕາມພົມລິຂິດ ຫາກແຕ່ເປັນໂທດກໍາທີ່ພຣະເຈົ້າໄດ້ກໍານົດໄວ້ ທີ່ມະນຸດເຮົາໄດ້ເລືອກເອົາ ໂດຍທີ່ພຣະເຈົ້າບໍ່ຊົງເຫັນພ້ອມ ແລະບໍ່ຊົງພໍພຣະໄທເລີຍ. ດັ່ງທີ່ເຮົາໄດ້ພົບຢູ່ໃນພຣະທໍາປະຖົມມະການ ບົດທີ 3:1-19 ນັ້ນ. ພາຍຫຼັງທີ່ມະນຸດໄດ້ເຮັດບາບແລະໄດ້ພົບກັບຄວາມຕາຍນີ້ເປັນທີ່ຮຽບຮ້ອຍແລ້ວອົງພຣະຜູ້ເປັນເຈົ້າພຣະອົງກໍບໍ່ໄດ້ຊົງນິ້ງຢູ່ດູດາຍ ແຕ່ໄດ້ຊົງຈັດຫາໂຄງການນີ້ ກໍແມ່ນຕັ້ງຢູ່ໃນການສົ່ງພຣະບຸດອົງດຽວຂອງພຣະອົງຄືພຣະເຢຊູຄຣິດນີ້ໃຫ້ລົງມາເກີດໃນໂລກມະນຸດ ເພື່ອຮັບບາບໂທດຫຼືຕາຍແທນມະນຸດເຮົາທັງຫຼາຍ. ດັ່ງນັ້ນ, ການເກີດ, ການຕາຍຫຼືຊີວິດຂອງອົງພຣະເຢຊູຄຣິດນີ້ ຈຶ່ງມີຄວາມສໍາຄັນຫຼາຍຕໍ່ຄວາມຫວັງຫຼັງຈາກຄວາມຕາຍຂອງມະນຸດເຮົາທັງຫຼາຍພາຍໃນໂລກນີ້. ດ້ວຍເຫດນີ້ ພຣະອົງ ຈຶ່ງໄດ້ກ່າວໄວ້ໃນຕອນໜຶ່ງໃນພຣະຄໍາພີວ່າ: "ເຮົານີ້ແຫຼະ ເປັນເຫດໃຫ້ຄົນທັງປວງເປັນຄືນມາທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອຢູ່ໃນເຮົາ ເຖິງແມ່ນຕາຍໄປແລ້ວກໍຍັງມີຊີວິດຢູ່ ແລະທຸກຄົນທີ່ຍັງມີຊີວິດຢູ່ແລະວາງໃຈເຊື່ອຢູ່ໃນເຮົາ ກໍຈະບໍ່ຕາຍຈັກເທື່ອ" (ໂຢຮັນ 11:25-26).

ຄວາມຫວັງຂອງຊີວິດຫຼັງຄວາມຕາຍໃນພຣະເຢຊູນັ້ນຍ່ອມມີຄວາມແຕກຕ່າງກັນຢ່າງມາກມາຍກັບຄວາມຫວັງຫຼັງຄວາມຕາຍໃນພຸດທະສາສະໜາແລະບໍ່ແມ່ນແຕ່ຄວາມຫວັງຂອງຊີວິດຫຼັງຄວາມຕາຍແຕ່ພຽງເທົ່ານັ້ນ ແມ່ນແຕ່ຄໍາສອນທີ່ກ່າວເຖິງໃນເບື້ອງຕົ້ນກໍາ

ແຕ່ມັນຈະເປັນໄປ. ຄົນລາວເຮົາສ່ວນຫຼາຍແລ້ວແມ່ນລ້ວນແຕ່ມີຄວາມຮູ້ສຶກແລະຄວາມເຂົ້າໃຈໃນທຳນອງນີ້ດ້ວຍກັນທັງນັ້ນ ແມ່ນແຕ່ຄູບາຢູ່ວັດເອງກໍຍັງໄດ້ກ່າວເອົາໄວ້ຢ່າງຄົນໝົດຫວັງກ່ຽວກັບເລື່ອງນີ້ ໂດຍທີ່ເພິ່ນໄດ້ຂຽນເປັນຄຳຂວັນເອົາໄວ້ໃນຄົນຕະລະບັດຂອງເພິ່ນວ່າ "ໄປບໍ່ກັບ ຫຼັບບໍ່ຕື່ນ ພື້ນບໍ່ມີ ໜີບໍ່ພົ້ນ" ຄຳຂວັນດັ່ງກ່າວນີ້ ມັນບໍ່ໄດ້ໃຫ້ຄວາມຫວັງແລະຄວາມປອບໃຈໃດໆແກ່ມະນຸດເຮົາເລີຍຫາກແຕ່ເປັນຄວາມຈິງທີ່ໄດ້ຊີ້ໃຫ້ພວກເຮົາໄດ້ເຫັນເຖິງຄວາມໝົດຫວັງຂອງຊີວິດຫຼັງຈາກຄວາມຕາຍນັ້ນຕ່າງຫາກ.

ຄວາມເຂົ້າໃຈຜິດອັນໃຫຍ່ຫຼວງຂອງຄົນລາວເຮົາໂດຍທົ່ວໄປອີກອັນໜຶ່ງນັ້ນກໍໄດ້ແກ່ "ຕາຍເປັນຜີໜີເປັນເພິ່ນ" ຄົນເຮົາເມື່ອຍັງມີຊີວິດຢູ່ກໍຮັກກັນແພງກັນ ແຕ່ພໍເມື່ອຕາຍໄປແລ້ວກໍເກີດມີຄວາມຢ້ານກັນຈົນຕົວສັ່ນຄຸ້ມກັນບ້ານເຮືອນດ້ວຍຝ້າຍມຸງຄຸນອັນໜາແໜ້ນເພື່ອປ້ອງກັນຜີ. ສ່ວນຜູ້ທີ່ເຄີຍເປັນຜົວເມຍກັນກໍເຖິງກັບຕ້ອງມີການຕັດຢ່າບັນດາພີ່ນ້ອງເພື່ອນຝູງກັນ ກໍຈະຕ້ອງມີການຕັດຂາດສາຍສຳພັນ. ອັນຄວາມຈິງແລ້ວມະນຸດເຮົາເມື່ອຕາຍໄປແລ້ວຮ່າງກາຍກໍຈະຕ້ອງຖືກແຍກອອກຈາກວິນຍານ ຝັງຫຼືຈູດກຸ້ມໄວ້ໃນດິນ ສ່ວນວິນຍານອັນຊຶ່ງເປັນພາກສ່ວນຂອງຊີວິດທີ່ແທ້ຈິງຈະຕ້ອງເປັນຢູ່ກັນຕໍ່ໄປນັ້ນ ກໍຈະໄປຢູ່ອີກບ່ອນໜຶ່ງຊຶ່ງຜູ້ສ້າງຄື ພຣະເຈົ້າ ນັ້ນໄດ້ກຳນົດເອົາໄວ້. ໃນເມື່ອມະນຸດເຮົາຫາກບໍ່ໄດ້ຮູ້ແລະບໍ່ເຂົ້າໃຈໃນເລື່ອງນີ້ເອງ ຈຶ່ງເປັນເຫດໃຫ້ມີການເຂົ້າໃຈຜິດ ໂດຍຄິດກັນໄປວ່າ ຕາຍແລ້ວຈະຕ້ອງໄປເປັນຜີ ໃຊ້ກຳໃຊ້ເວນຢູ່ຊົ່ວກັບຊົ່ວກັນມາຈົນເຖິງເທົ່າທຸກມື້ນີ້. ທ່ານຈະດຳລົງຊີວິດ ຢູ່ໃນໂລກນີ້ຢ່າງຄົນສິ້ນຫວັງ ແລະຢ່າງຄົນບໍ່ຮູ້ຈັກຫຍັງຕໍ່ໄປຫຼື? ຫຼືທ່ານຈະສ້າງຄວາມຫວັງ, ສ້າງຄວາມໝັ້ນໃຈໃຫ້ກັບຕົນເອງກ່ຽວກັບເລື່ອງນີ້? ຄຳຕອບນັ້ນກໍແມ່ນຢູ່ທີ່ທ່ານຈະເປັນຄົນຕັດສິນໃຈ.





" ຄົນໂງ່ເຊື່ອຄຳເວົ້າທຸກຢ່າງ
ແຕ່ວ່າຄົນຜູ້ສະຫຼາດຮອບຄອບນັ້ນ
ພິຈາລະນາບາດກ້າວຂອງຕົນເປັນຢ່າງດີ "

(ສຸພາສິດ 14:15)

2. <u>ຜູ້ມີໂຣກໜ້ອຍ</u>: ເປັນເພາະຕົນບໍ່ໄດ້ບຽດບຽນສັດ ສ່ວນຜູ້ທີ່ມີໂຣກຫຼາຍນັ້ນເປັນເພາະບຽດບຽນສັດ

3. <u>ຜູ້ມີຮູບຮ່າງຂີ້ເລ່</u>: ເພາະເປັນຄົນມັກຮ້າຍ, ຄຽດແຄ້ນພະຍາບາດ ສ່ວນຜູ້ທີ່ງາມແລະຜິວພັນດີນັ້ນເປັນເພາະບໍ່ເປັນຄົນມັກຄຽດແລະບໍ່ມັກພະຍາບາດຄົນອື່ນ.

4. <u>ຜູ້ມີຍົດສັກຕ່ຳ</u>: ເປັນເພາະມັກອິດສາຄົນອື່ນ ສ່ວນຜູ້ທີ່ມີສັກສູງນັ້ນເປັນເພາະບໍ່ໄດ້ບຽດບຽນໃຜ

5. <u>ຜູ້ຍາກຈົນ</u>: ເປັນເພາະມັກອິດສາຄົນອື່ນ ສ່ວນຜູ້ມີສັກສູງນັ້ນເປັນເພາະບໍ່ໄດ້ບຽດບຽນໃຜ

6. <u>ຜູ້ເກີດໃນຕະກຸນຕ່ຳ</u>: ເພາະເປັນຄົນກະດ້າງກໍ່ຕົວບໍ່ຮູ້ຈັກອ່ອນນ້ອມ ຜູ້ເກີດໃນຕະກຸນສູງເພາະຮູ້ຈັກອ່ອນນ້ອມບໍ່ກໍ່ຕົວ

7. <u>ຜູ້ເກີດເປັນຄົນໂງ່</u>: ເປັນເພາະບໍ່ຍອມໄຕ່ຖາມ ບໍ່ສະແຫວງຫາຄວາມຮູ້ ສ່ວນຜູ້ທີ່ມີປັນຍາຫຼາຍນັ້ນເປັນເພາະມັກໄຕ່ຖາມ

ອ້າງຕາມຄວາມເຂົ້າໃຈຂອງຊາວບ້ານໂດຍທົ່ວໄປແລ້ວ ພີ່ນ້ອງຊາວລາວເຮົາທີ່ເປັນຊາວພຸດສ່ວນຫຼາຍນັ້ນກໍແມ່ນຍັງບໍ່ຄ່ອຍຈະມີຄວາມຮູ້ຄວາມເຂົ້າໃຈແລະຄວາມໝັ້ນໃຈໃນຊີວິດຫຼັງຄວາມຕາຍນີ້ເທົ່າໃດ. ເນື່ອງຈາກວ່າມັນເປັນເລື່ອງທີ່ເລິກລັບແລະການສິດສອນກັນບໍ່ຄ່ອຍຈະທົ່ວເຖິງແລະແຈ່ມແຈ້ງ. ດ້ວຍເຫດນີ້ ຈຶ່ງເປັນເຫດໃຫ້ຄົນລາວເຮົາຫຼາຍຄົນຕ້ອງຕາຍໄປ ໂດຍທີ່ຕົນເອງຍັງບໍ່ຮູ້ແລະບໍ່ເຂົ້າໃຈວ່າຈະເກີດຫຍັງຂຶ້ນກັບຕົນ, ຈະໄປເປັນຫຍັງແລະຈະໄປຢູ່ໃສເມື່ອຕາຍໄປແລ້ວ? ສ່ວນຜູ້ທີ່ຍັງມີຊີວິດຢູ່ກໍບໍ່ຮູ້ວ່າຈະຕຽມຕົວຕຽມໃຈປະເຊີນກັບຄວາມຕາຍນີ້ກັນຢ່າງໃດ? ດັ່ງນັ້ນ ຈຶ່ງໄດ້ແຕ່ປ່ອຍຊີວິດຂອງຕົນໃຫ້ເປັນໄປຕາມຍະຖາກຳຄືປ່ອຍໄປຕາມດວງ ສຸດແລ້ວ

ສະເພາະແລ້ວກໍແມ່ນພີ່ນ້ອງຊາວລາວຂອງພວກເຮົານີ້ເອງ. ຄົນລາວສ່ວນຫຼາຍບໍ່ຮູ້ແລະບໍ່ເຂົ້າໃຈວ່າ ຕາຍແລ້ວຈະໄປເປັນຫຍັງ? ແລະຈະໄປຢູ່ໃສ?

ອີງຕາມຫຼັກຄຳສອນໃນພຸດທະສາສະໜາແລ້ວ ພະພຸດທະເຈົ້າໄດ້ສອນເອົາໄວ້ວ່າ "ການເກີດທຸກຊະນິດນັ້ນເກີດຈາກແຮງກຳ" ນີ້ໝາຍຄວາມວ່າ ພະພຸດທະອົງນັ້ນຍອມຮັບຮອງໃນອຳນາດຂອງກຳແລະເນື່ອງຈາກວ່າພະອົງຊົງຮັບຮອງເຊັ່ນນີ້ ຈຶ່ງເປັນການຮັບຮອງຄວາມເປັນວົງວຽນຂອງຊີວິດວ່າ ມີການວຽນວາຍຕາຍເກີດ. ເນື່ອງດ້ວຍເຫດນີ້ຊາວລາວເຮົາທີ່ໄດ້ເຊື່ອຢູ່ພຸດທະສາສະໜາຈຶ່ງມີຄວາມຫວັງວ່າ ຫຼັງຈາກຕາຍໄປແລ້ວຈະໄດ້ມີໂອກາດກັບຄືນມາເກີດໃໝ່ອີກໃນອະນາຄົດຫຼືໃນຊາດໜ້າ. ການເກີດໃນຄັ້ງຕໍ່ໄປຈະໄປເກີດເປັນຫຍັງຈະມີຮູບຮ່າງໜ້າຕາແລະມີຖານະຢ່າງໃດນັ້ນກໍແມ່ນສຸດແລ້ວແຕ່ການກະທຳແລະການດຳລົງຊີວິດຂອງຕົນໃນຊາດນີ້. ດັ່ງນັ້ນເພິ່ນຈຶ່ງມີຄຳກ່າວໄວ້ໃນ "ວາເສດຕະສູດ"ວ່າ ບຸກຄົນບໍ່ໄດ້ຊົ່ວຫຼືດີເພາະຊາດກຳເນີດຫາກແຕ່ຍ້ອນເປັນການກະທຳຂອງຕົນນັ້ນຕ່າງຫາກ. ຍົກຕົວຢ່າງ: ຄົນໆໜຶ່ງຈະເປັນຊາວນາ, ເປັນນັກສິລະປິນ, ເປັນພໍ່ຄ້າ, ເປັນຄົນຮັບໃຊ້, ເປັນໂຈນ, ເປັນທະຫານຫຼືເປັນກະສັດ, ກໍເພາະການກະທຳຂອງຕົນ. ໂລກຂອງເຮົານີ້ເປັນໄປເພາະກຳ ສັດທັງຫຼາຍພູກພັນຢູ່ທີ່ກຳເໝືອນກັບກົງກວຽນທີ່ໝູນວຽນຢູ່ບໍ່ໄດ້ຂາດ. ເພື່ອສະແດງໃຫ້ເຂົ້າໃຈໃນພົນແຫ່ງກຳໄດ້ມີຄຳເວົ້າຕອນໜຶ່ງຂອງພະພຸດທະອົງ ໄດ້ກ່າວເອົາໄວ້ໃນ "ຈູພະກຳວະພັງສູດ" ວ່າ:

1. <u>ຜູ້ທີ່ມີອາຍຸໜ້ອຍ</u>: ເປັນເພາະວ່າຜູ້ນັ້ນຂ້າສັດ ສ່ວນຜູ້ທີ່ມີອາຍຸຍືນ ເປັນເພາະບໍ່ໄດ້ຂ້າສັດ



# ບົດທີ 2
# ທ່ານເຊື່ອຢູ່ໃນ ພຸດທະສາສະໜາແທ້ບໍ?

ເຊື່ອກໍໃຫ້ວ່າເຊື່ອ ເປັນກໍໃຫ້ວ່າເປັນ ຮູ້ກໍໃຫ້ວ່າຮູ້
ຢ່າຊູ່ລ່າຍຕົວະຕົນ ພົນຕາມມາທີຫຼັງ ຊິຫຼັ່ງລົງນ້ຳຕາຍ້ອຍ
ຢ່າຄອຍຟັງແຕ່ຄົນເວົ້າ ສຶກສາເອົາໃຫ້ຮູ້ກ່ອນ
ຮູ້ຄຳສອນ ແລ້ວເຊື່ອໝັ້ນ ຄົນເຮົານັ້ນຈຶ່ງເຊື່ອຈິງ

"ຢ່າເຊື່ອໃຈທາງ ຢ່າວາງໃຈຄົນ ມັນຊິຈົນໃຈໂຕ"

"ຢ່າບອກວ່າຕົນເຊື່ອເພາະຄົນອື່ນພາເຊື່ອ
ແຕ່ຈົ່ງຮຽນຮູ້ດ້ວຍຕົນເອງແລ້ວຈຶ່ງເຊື່ອ"

## 1. <u>ພຸດແທ້ຫຼືພຸດຕາມປະເພນີ</u>.

ກ່ອນທີ່ຈະໃຫ້ທ່ານທັງຫຼາຍໄດ້ພົບກັບຄຳທຳນວາຍຂອງອົງພະສຳມາສຳພຸດທະເຈົ້າ ຂ້າພະເຈົ້າກໍຢາກໃຫ້ທ່ານໄດ້ພາກັນຫັນມາສຳຫຼວດກວດເບິ່ງຕົນເອງເສຍກ່ອນວ່າທ່ານເປັນພຸດຫຼືເຄີຍເປັນພຸດປະເພດໃດ? ເປັນພຸດແທ້ ຫຼືເປັນພຸດຕາມຮີດ? ພຸດແທ້ນັ້ນ ຄືແນວໃດ? ແລະພຸດຕາມຮີດນັ້ນຄືແນວໃດ? ເພາະເທົ່າທີ່ເຮົາເຄີຍເຫັນຜ່ານມາບໍ່ວ່າຈະເປັນອະດີດຫຼືປະຈຸບັນ ຊາວລາວເຮົາແມ່ນໄດ້ພາກັນ

ເປັນພຸດຕາມຮີດຫຼືຕາມເພິ່ນນັ້ນຫຼາຍກວ່າພຸດແທ້. ພວກເຮົາຮູ້ຈັກເຖິງເລື່ອງດັ່ງກ່າວນີ້ກັນໄດ້ຢ່າງໃດ? ຄວາມຈິງແລ້ວການສັງເກດນັ້ນມັນກໍບໍ່ຍາກ ຄືພຸດແທ້ນັ້ນກໍໄດ້ແກ່ ຜູ້ທີ່ຮູ້ຈັກພະທຳຄຳສອນຂອງພະພຸດທະອົງຢ່າງຄັກແນ່ແລະປະຕິບັດຕາມຢ່າງຖືກຕ້ອງນັ້ນເອງ. ແຕ່ສ່ວນຜູ້ທີ່ເປັນພຸດຕາມປະເພນີນັ້ນກໍຄື ຜູ້ທີ່ເຊື່ອໄປແບບຕາມມີຕາມເກີດ, ຕາມພໍ່ ຕາມແມ່ ແລະຕາມຮີດຕາມຄອງເພິ່ນພາເຊື່ອໄປຊື່ໆ ແຕ່ສ່ວນຕົນເອງນັ້ນກັບບໍ່ຮູ້ແລະບໍ່ເຂົ້າໃຈໃນຄຳສັ່ງສອນຂອງພຸດທະສາສະໜານັ້ນຢ່າງແທ້ຈິງເລີຍ ຄົນທີ່ເປັນພຸດເຊັ່ນນີ້ແຫຼະທີ່ພວກເຮົາເອີ້ນກັນວ່າ 'ພຸດຕາມຮີດ'. ຄົນລາວເຮົາສ່ວນຫຼາຍແລ້ວແມ່ນພາກັນ ຖືພຸດເຊື່ອຜີແລະປະຕິບັດຕາມລັດທິພາມ ກັນມາໂດຍຕະຫຼອດ. ເມື່ອເປັນເຊັ່ນນີ້ ພວກເຮົາຈະຖືວ່າພວກເຮົາເປັນພຸດແບບໃດກັນ? ເປັນພຸດແທ້? ຫຼືວ່າພຸດຕາມຮີດ? ພໍທ່ານໄດ້ອ່ານມາຮອດຕອນນີ້ ຂ້າພະເຈົ້າເອງກໍເຊື່ອວ່າທ່ານຜູ້ອ່ານທຸກຄົນ ກໍຄົງພໍຈະນຶກວາດພາບອອກໄດ້ເຖິງການເຊື່ອຖືຂອງຕົນແລະຂອງຄົນລາວເຮົາໂດຍທົ່ວໄປ ເພາະຄົນລາວເຮົາເກືອບທຸກຄົນແມ່ນລ້ວນແຕ່ມີປະສົບການໃນຄວາມເປັນພຸດໃນທຳນອງນີ້ມາດ້ວຍກັນທັງນັ້ນ. ຂໍໃຫ້ທ່ານຈົ່ງສຳຫຼວດກວດເບິ່ງຕົນເອງເບິ່ງວ່າ ເມື່ອສົມທຽບກັບຄວາມເປັນຈິງທີ່ກ່າວມາໃນຂ້າງເທິງນີ້ແລ້ວທ່ານພໍຈະຮູ້ບໍ່ວ່າທ່ານກຳລັງເປັນພຸດປະເພດໃດຢູ່? ເປັນພຸດແທ້? ຫຼືເປັນພຸດຕາມຮີດ?

2. ເປັນຫຍັງຄວາມເຊື່ອຂອງຄົນລາວເຮົາຈຶ່ງສັບປົນຄົນເລກັນເຊັ່ນນີ້?

ສາຍເຫດທີ່ພວກເຮົາຄົນລາວໄດ້ພາກັນເຊື່ອແບບສັບສົນແລະປົນເປກັນເຊັ່ນນີ້ກໍເພາະເຫດຜົນຫຼາຍປະການຄື:



# ບົດທີ 13

# ຄວາມຫວັງຫຼັງຄວາມຕາຍ ໃນສອງສາສະໜາ

ໄປບໍ່ກັບ, ຫຼັບບໍ່ຕື່ນ, ຟື້ນບໍ່ມີ, ໜີບໍ່ພົ້ນ ສົນໃຈຢາກຈະເຊື່ອມີບໍ່ນໍ?
ໄປກໍກັບ, ຫຼັບກໍຕື່ນ, ຟື້ນກໍມີ ໜີກໍພົ້ນ ຕົນຂ້ອຍຊິເຊື່ອຕາມ ທ່ານເອີຍ!

## ຄວາມຫວັງອັນສຸດຍອດຂອງຊີວິດ

ມະນຸດເຮົາທຸກຄົນໃນໂລກນີ້ບໍ່ວ່າຈະເຊື່ອແລະໄວ້ວາງໃຈຢູ່ໃນຄຳສອນແລະໃນສາສະໜາໃດກໍຕາມຄວາມຫວັງແລະຄວາມປາຖະໜາອັນສູງສຸດໃນການເຊື່ອຂອງຕົນນັ້ນກໍໄດ້ແກ່ຄວາມເປັນຢູ່ຂອງຊີວິດໃນອະນາຄົດ. ໂດຍສະເພາະແລ້ວກໍແມ່ນຊີວິດຫຼັງຄວາມຕາຍນັ້ນເອງ. ຊຶ່ງໃນເລື່ອງນີ້ເບິ່ງເໝືອນວ່າແຕ່ລະສາສະໜາໃນໂລກນີ້ ກໍຈະມີຄຳຕອບທີ່ແຕກຕ່າງກັນ ໂດຍສະເພາະແລ້ວກໍແມ່ນສາສະໜາໃຫຍ່ທັງສອງສາສະໜາຄື ພຸດແລະຄຣິດ ດັ່ງທີ່ທ່ານຈະໄດ້ພົບໃນຂ້າງລຸ່ມນີ້:

1. ຄວາມຫວັງຂອງຊີວິດຫຼັງຄວາມຕາຍໃນພຸດທະສາສະໜາ.

ເລື່ອງຂອງຄວາມຕາຍເປັນເລື່ອງທີ່ເລິກລັບແລະສັບຊ້ອນຫຼາຍ ມະນຸດເຮົາໃນໂລກນີ້ສ່ວນຫຼາຍແລ້ວແມ່ນຍັງມືນງົງກັນຢູ່ ໂດຍ

## 5. ທ້າຍສຸດນີ້.

ຂ້າພະເຈົ້າມີຄວາມປາຖະໜາຢ່າງແຮງກ້າວ່າ ຄຳທຳນວາຍ, ປະກອບດ້ວຍຄຳອະທິບາຍແລະຂໍ້ພຣະທຳຄຳພີທັງໝົດນີ້ຈະຊ່ອຍທ່ານໃຫ້ໄດ້ພົບກັບຄວາມຈິງອັນໃໝ່ໆ,ພົບກັບຄວາມຮູ້ຄວາມເຂົ້າໃຈອັນໃໝ່ນິມິດແລະຄວາມຫວັງໃໝ່ ແລະໃນທີ່ສຸດກໍຈະໄດ້ພົບກັບພຣະເຈົ້າອົງທີ່ມະນຸດເຮົາທັງໂລກລໍຄອຍແລະປາຖະໜາພົບ. ອັນທີ່ຈິງນັ້ນພຣະອົງມາແລ້ວຕັ້ງນານຄືພາຍຫຼັງພະພຸດທະເຈົ້າມາພຽງ 543 ປີ ພຣະອົງກໍມາໂລດ. ເນື່ອງຈາກວ່າພວກເຮົາຂາດການສຶກສາຄົ້ນຄວ້າກັນຢ່າງຈິງຈັງ ແລະປ່ອຍໃຫ້ການນັບຖືສາສະໜານີ້ເປັນການນັບຖືແບບເປັນປະເພນີໄປມັນຈຶ່ງໄດ້ຄອບງຳຈິດໃຈຂອງເຮົາບໍ່ໃຫ້ເຫັນອົງພຣະຜູ້ເປັນເຈົ້າອົງທ່ຽງແທ້. ຂ້າພະເຈົ້າໄດ້ແຕ່ຫວັງວ່າມື້ໜຶ່ງຄົນລາວເຮົາທຸກຄົນຈະໄດ້ຫັນມາສົນໃຈສຶກສາທຳມະອັນແທ້ຈິງເພື່ອຈະໄດ້ພົບກັບຄວາມຈິງແລະໄດ້ນຳຊີວິດຂອງຕົນໃຫ້ພົ້ນຈາກຫ້ວງເຫວແຫ່ງຄວາມທຸກ, ຄວາມບາບ, ແລ້ວເກີດມີຄວາມຊາບຊຶ້ງໃນພຣະເຈົ້າອົງສູງສຸດທີ່ມະນຸດເຮົາທຸກຄົນຈະຂາດເສຍບໍ່ໄດ້ ຄືອົງພຣະເຢຊູຄຣິດຜູ້ນີ້. ຈົ່ງພິຈາລະນາໄຕ່ຕອງທຸກຂໍ້ຄວາມເບິ່ງພຸດທະທຳນວາຍພ້ອມດ້ວຍຄຳອະທິບາຍທັງໝົດຈາກໜັງສືເຫຼັ້ມນີ້ໃຫ້ດີແລ້ວທ່ານຈະບໍ່ຜິດຫວັງທັງໃນຊີວິດນີ້ແລະສືບໆໄປເປັນນິດ.





### ກ. ເປັນຍ້ອນຄວາມບໍ່ເຂົ້າໃຈ.

ຄົນລາວເຮົາສ່ວນຫຼາຍແລ້ວແມ່ນບໍ່ຄ່ອຍຈະພາກັນເຂົ້າໃຈໃນເລື່ອງຂອງສາສະໜາແລະໃນເປົ້າໝາຍຂອງການເຊື່ອຖືໃນສາສະໜານີ້ເທົ່າໃດ ຈຶ່ງໄດ້ແຕ່ຄິດໄປວ່າ ສາສະໜາໃດໃນໂລກນີ້ກໍດີໝົດເພາະທຸກໆສາສະໜານັ້ນລ້ວນແຕ່ສອນໃຫ້ມະນຸດເຮົາເປັນຄົນດີດ້ວຍກັນທັງນັ້ນ. ດັ່ງນັ້ນ, ເປົ້າໝາຍທີ່ຄົນລາວເຮົາເຊື່ອໃນສາສະໜາຈຶ່ງຕັ້ງຢູ່ທີ່ການຢາກເປັນຄົນດີແຕ່ພຽງເທົ່ານັ້ນ. ອັນຄວາມຈິງແລ້ວການເຊື່ອໃນສາສະໜານັ້ນແມ່ນມີຄວາມໝາຍທີ່ເລິກເຊິ່ງໄປກວ່ານັ້ນ ຄືມັນເປັນການພົວພັນກັນລະຫວ່າງມະນຸດກັບພຣະເຈົ້າ, ລະຫວ່າງຄວາມເປັນກັບຄວາມຕາຍ, ລະຫວ່າງສະຫວັນກັບນະຣົກແລະຄວາມຢູ່ລອດຂອງຊີວິດຝ່າຍວິນຍານຈິດທັງໃນເວລານີ້ແລະສືບໆໄປເປັນນິດດ້ວຍ. ດັ່ງນັ້ນ,ພວກເຮົາຈະພາກັນເຊື່ອຫຼົບເຊື່ອຫົວຕາມນິຕາມເກີດບໍ່ໄດ້ ທຸກຄົນຈະຕ້ອງຕັ້ງອົກຕັ້ງໃຈສຶກສາແລະຮຽນຮູ້ໃຫ້ດີ ກ່ອນທີ່ຈະພາກັນເຊື່ອຖືງບໍ່ດັ່ງນັ້ນພວກເຮົາຈະພົບກັບຄວາມຜິດຫວັງແລະຄວາມກິນແໜງໃຈອັນໃຫຍ່ທີ່ສຸດໃນຊີວິດ.

### ຂ. ເປັນຍ້ອນສຶກສາບໍ່ເຖິງ.

ເຫດຜົນອີກປະການໜຶ່ງນັ້ນກໍຄືດ້ອຍການສຶກສາໃນເລື່ອງຂອງສາສະໜານີ້ເອງ ຍ້ອນວ່າບໍ່ມີໃຜໄດ້ພາກັນສຶກສາຫາຄວາມຈິງກັນຢ່າງແຕກສານມາກ່ອນ ຈຶ່ງບໍ່ມີໃຜສອນໃຫ້ຮູ້. ພຸດທະສາສະນິກະຊົນສ່ວນຫຼາຍແລ້ວແມ່ນຕ້ອງອາໄສພະສົງເປັນຜູ້ບອກຜູ້ສອນ ແຕ່ພະສົງສ່ວນຫຼາຍແລ້ວກໍເປັນພຽງແຕ່ຜູ້ທີ່ບວດພໍເປັນພິທີ ຫຼືບວດພໍອາໄສເອົາຜ້າເຫຼືອງໃຫ້ເປັນທາງຜ່ານທີ່ຈະນຳຕົນໄປສູ່ການສຶກສາຢ່າງອື່ນ. ພະສົງສ່ວນຫຼາຍແລ້ວແມ່ນສຶກສາຄຳສັ່ງສອນຂອງພະພຸດທະອົງໄວ້ພໍ

ໃຫ້ຮູ້ຈັກໃນການປະກອບພິທີກຳທາງສາສະໜາແກ່ອອກຕົນຍາດໂຍມ ແຕ່ພຽງເທົ່ານັ້ນ ຈຶ່ງບໍ່ໄດ້ຄົ້ນຄິດຫາຫຼັກທຳຄຳສອນທີ່ສຳຄັນນີ້ເອົາໄວ້ເພື່ອສອນຊຶ່ງກັນແລະກັນຕໍ່ໄປ. ຂ້າພະເຈົ້າເອງກໍເຄີຍເຂົ້າວັດຟັງທຳ ແລະເຄີຍໄດ້ມີໂອກາດເຂົ້າຮ່ວມໃນພິທີສິ່ງສະການພີ່ນ້ອງຊາວພຸດຫຼາຍຄັ້ງ ເມື່ອໄດ້ນັ່ງຟັງແລະສັງເກດເບິ່ງແລ້ວ ຕັ້ງແຕ່ຕົ້ນຈົນຈົບພິທີກໍບໍ່ຮູ້ແລະເຂົ້າໃຈວ່າພະສົງນັ້ນເພິ່ນສອນຫຼືເວົ້າເຖິງເລື່ອງອັນໃດ ຍ້ອນຟັງບໍ່ເຂົ້າໃຈ ເພາະເພິ່ນບໍ່ໄດ້ເວົ້າເປັນພາສາຂອງເຮົາ. ສ່ວນອອກຕົນຍາດໂຍມທີ່ໄປນັ່ງຟັງກໍໄດ້ແຕ່ຍໍມືນົບແລະກ່າວຄຳວ່າສາທຸເອົາເປັນຄັ້ງຄາວ. ສຳລັບຢູ່ໃນຕ່າງປະເທດ ສ່ວນຫຼາຍແລ້ວພໍເຖິງຍາມທີ່ເພິ່ນຈະເທດເປັນພາສາຂອງເຮົາ ເພື່ອໃຫ້ຜູ້ຄົນທີ່ມາຮ່ວມນັ້ນໄດ້ຟັງ ແລະເຂົ້າໃຈເພິ່ນກໍຕ້ອງອາໄສພະຊາວຕ່າງປະເທດ ຄືພະໄທນັ້ນເປັນສ່ວນໃຫຍ່ ເພາະຢ່າງນ້ອຍກໍພໍເທດເປັນແດ່ ເພາະພວກເພິ່ນມີປຶ້ມທີ່ເປັນພາສາໄທໄວ້ອ່ານ ຫຼືບໍ່ກໍອາດຈະໄດ້ເຄີຍຮຽນມາແດ່ດ້ວຍ. ສ່ວນທາງດ້ານຄຳພີທີ່ມີຢູ່ກໍມີແຕ່ເປັນພາສາບາລີເທົ່ານັ້ນ ແຖມຍັງເປັນໜັງສືທີ່ຕ້ອງຫ້າມບໍ່ໃຫ້ຄົນທຳມະດາແລະຜູ້ຍິງແຕະຕ້ອງດ້ວຍ. ສ່ວນໜັງສືທີ່ພໍອ່ານໄດ້ກໍມີແຕ່ບົດສວດຫຼືຄຳໄຫວ້ພະພາວະນາເທົ່ານັ້ນ ຊຶ່ງຄຳສັ່ງສອນທີ່ເລິກເຊິ່ງໄປກວ່ານັ້ນແມ່ນບໍ່ມີເລີຍ. ດ້ວຍເຫດນີ້ຄົນລາວເຮົາຈຶ່ງຍັງດ້ອຍຕໍ່ການສຶກສາແລະຄວາມເຂົ້າໃຈໃນສາສະໜາທີ່ຕົນເຊື່ອຢູ່ນັ້ນ ຈຶ່ງເປັນເຫດໃຫ້ເກີດຄວາມສັບສົນແລະມີການເຊື່ອແບບສັບປົນຄົນເລກັນມາຈົນເຖິງທຸກມື້ນີ້. ໃນການທີ່ເຮົາຈະເຊື່ອໃນສາສະໜາຫຼືໃນສິ່ງໜຶ່ງສິ່ງໃດ ຄັນຜູ້ສອນຫາກບໍ່ມີຄວາມຮູ້ຄວາມເຂົ້າໃຈແລະໃນຂະນະດຽວກັນປຶ້ມກໍບໍ່ມີທີ່ຈະອ່ານຫຼືມີກໍອ່ານບໍ່ເຂົ້າໃຈເພາະບໍ່ແມ່ນພາສາເຮົາ ເມື່ອເປັນເຊັ່ນນີ້ຜູ້ທີ່ເຊື່ອແລະນັບຖືກໍຈະຕ້ອງຂາດຄວາມຮູ້ແລະຄວາມເຂົ້າໃຈຢ່າງແນ່ນອນ.



ພຸດທະທຳນວາຍກ່ຽວກັບພຣະເມສີອານ

ນີ້ຫາກເປັນຄວາມຈິງ ຄຳທີ່ອົງພຣະເຢຊູຄຣິດຊົງກ່າວໄວ້ໃນ ໂຢຮັນ 10:7-10 ທີ່ກ່າວເອົາໄວ້ວ່າ "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ເຮົານີ້ແຫຼະເປັນປະຕູຂອງແກະທັງຫຼາຍ. ບັນດາຜູ້ທີ່ມາກ່ອນເຮົາກໍເປັນຂະໂມຍແລະໂຈນ ແຕ່ຝູງແກະບໍ່ໄດ້ຟັງເຂົາ. ເຮົານີ້ແຫຼະເປັນປະຕູ ຖ້າຜູ້ໃດເຂົ້າທາງເຮົາຜູ້ນັ້ນຈະພົ້ນ ແລ້ວຈະເຂົ້າອອກທັງຈະພົບອາຫານ. ຂະໂມຍມາກໍພຽງແຕ່ຈະລັກ, ຈະຂ້າແລະທຳລາຍເທົ່ານັ້ນ ຝ່າຍເຮົາໄດ້ມາເພື່ອເຂົາຈະໄດ້ຊີວິດແລະຈະໄດ້ຢ່າງຄົບບໍລິບູນ". ກໍຄົງຈະຖືກຕ້ອງແລະເປັນຄວາມຈິງຢ່າງແນ່ນອນ. ອົງພຣະເຢຊູພຣະອົງບໍ່ໄດ້ເປັນຜູ້ເບີກທາງແຕ່ເປັນທາງ ດ້ວຍເຫດນີ້ພຣະອົງຈຶ່ງຊົງກ່າວວ່າ "ເຮົານີ້ແຫຼະເປັນທາງນັ້ນ, ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ" (ໂຢຮັນ 14:6).

## 4. ພະພຸດທະເຈົ້າບໍ່ແມ່ນທາງນັ້ນແຕ່ເປັນຜູ້ບອກທາງ ຫຼືຜູ້ເບີກທາງ.

ອ້າງຕາມຄຳສອນຂອງພະພຸດທະເຈົ້າ ຈາກພຸດທະປະຫວັດຈາກພະໂອດມີຂໍ້ຄວາມທີ່ສຳຄັນກ່າວວ່າດັ່ງນີ້ຢູ່ດ້ວຍກັນຫຼາຍຕອນຄື:

"ຄຳເທດສະໜາ ຂອງພະໂຄດົມນີ້ເໝືອນຫງາຍຂອງທີ່ຂວ້ຳຢູ່ ຫຼືເໝືອນເປີດຂອງທີ່ປົກປິດຢູ່ ຫຼືເໝືອນ ຊີ້ບອກທາງໃຫ້ ແກ່ຄົນຫຼົງທາງ ຫຼືເໝືອນຍ່າງຕາມຕະກຽງໃນທີ່ມືດໃຫ້ຄົນຕາດີເຫັນຮູບນັ້ນ"

ຈາກຄຳສອນພຽງເທົ່ານີ້ກໍໄດ້ຊີ້ໃຫ້ພວກເຮົາເຫັນໄດ້ຢ່າງຄັກແນ່ວ່າພະອົງບໍ່ໄດ້ຊົງເປັນທາງນັ້ນທີ່ພວກເຮົາຄວນລໍຄອຍ ແຕ່ຊົງເປັນຜູ້ນັ້ນທີ່ກຳລັງບອກທາງພວກເຮົາຢູ່. ຜູ້ມີຫູຈົ່ງຟັງເອົາ.

ນັ້ນ, ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີໃຜມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ” (ໂຢຮັນ 14:6). ທາງເສັ້ນນີ້ ຜູ້ທີ່ຈະເດີນຕາມຈະຕ້ອງໄດ້ເລີ່ມຕົ້ນດ້ວຍການມອງເຫັນ (ຄືເຫັນຊອບຕາມທີ່ປາກົດໃນມັກແປດຂໍ້ທີໜຶ່ງຂອງພະພຸດທະອົງ) ຕິດຕາມດ້ວຍການຕັດສິນໃຈເດີນຕາມໄປຢ່າງເດັດດ່ຽວດ້ວຍຄວາມເຊື່ອ, ຄວາມໄວ້ວາງໃຈ ແລະດ້ວຍຄວາມຕັ້ງໃຈຢ່າງໝັ້ນຄົງຈຶ່ງຈະພົ້ນ (ຕາມດັ່ງທີ່ກ່າວໄວ້ໃນ ມັກແປດຂໍ້ທີແປດນັ້ນ). ຜູ້ໃດທີ່ປະໝາດເລີ່ນເລີ້ ເມີນເສີຍ ແລະເຊື່ອແບບບໍ່ມີຄວາມຕັ້ງອົກຕັ້ງໃຈ ກໍຈະບໍ່ເຖິງພຣະເຈົ້າແລະບໍ່ໄດ້ຮັບຄວາມລອດພົ້ນບາບກຳຂອງຕົນເປັນແນ່ແທ້ໃນຊີວິດ.

## 2. ພຣະເຈົ້າກ່າວເຖິງ.

ກ່ຽວກັບທາງທັງສອງເສັ້ນນີ້ ເບິ່ງເໝືອນວ່າທັງພຸດແລະຄຣິດຈະເຫັນພ້ອມຢ່າງເປັນເອກະສັນວ່າ ແມ່ນແທ້ ແລະກໍເປັນຈິງຄືມີພຽງສອງທາງເທົ່ານັ້ນ. ຄວາມຈິງແລ້ວທາງທັງສອງນີ້ເປັນທາງທີ່ພຣະເຈົ້າໄດ້ມອບໃຫ້ແກ່ມະນຸດໃນເບື້ອງຕົ້ນເພື່ອມະນຸດເຮົາຈະໄດ້ເລືອກ ດັ່ງທີ່ເຮົາໄດ້ພົບເຫັນໃນພຣະທຳ (ປະຖົມມະການ 2:9, 15-17) ນັ້ນເອງ.

## 3. ພຣະເຢຊູກ່າວເຖິງ.

ຕຳນານຕອນໜຶ່ງຂອງພີ່ນ້ອງຊາວພຸດໄດ້ກ່າວເອົາໄວ້ວ່າດັ່ງນີ້: ພະພຸດກັບພຣະເຢຊູນີ້ເປັນພີ່ນ້ອງກັນ ຄັ້ງໜຶ່ງທັງສອງໄດ້ຊິງສ່ຽງດອກບົວລົງມາເກີດ. ຕຳນານນີ້ໄດ້ກ່າວວ່າ ດອກບົວຂອງພຣະເຢຊູນີ້ໄດ້ເກີດກ່ອນ ແຕ່ພະພຸດເກີດຄວາມອິດສາ ຈຶ່ງໄດ້ໄປລັກເອົາມາສຽບໃສ່ຂອງຕົນ ໃນທີ່ສຸດກໍເລີຍໄດ້ລົງມາເກີດກ່ອນ. ກ້າຕຳນານ





## ຄ. ເປັນເພາະຂາດຄວາມກ້າຫານທີ່ຈະຍອມຮັບຄວາມຈິງ.

ການນັບຖືແລະການເຊື່ອຖືໃນພຸດທະສາສະໜາ ພ້ອມດ້ວຍການປະກອບພິທີກຳຕ່າງໆທາງສາສະໜາຂອງຄົນລາວເຮົານັ້ນ ສ່ວນຫຼາຍແມ່ນບໍ່ໄດ້ສອດຄ່ອງກັບຄຳສັ່ງສອນຂອງພຸດທະສາສະໜາທີ່ຕົນໄດ້ເຊື່ອຖືນັ້ນ. ທັງນີ້ກໍເປັນເພາະວ່າ ພວກເຮົາຄົນລາວບໍ່ໄດ້ເຂົ້າໃຈໃນເລື່ອງຄຳສອນຂອງພຸດທະສາສະໜານັ້ນຢ່າງແທ້ຈິງ ດ້ວຍເຫດນີ້ ຈຶ່ງໄດ້ພາກັນເອົາພິທີກຳທາງສາສະໜາມາປະປົນກັບລັດທິແຫ່ງການເຊື່ອຖືໃນສາສະໜາອື່ນໆແລະຮີດຄອງປະເພນີ ຈົນແຍກກັນບໍ່ໄດ້ວ່າອັນໃດຄືພິທີກຳຂອງສາສະໜາແລະອັນໃດຄືປະເພນີ. ການເຊື່ອຖືໃນທຳນອງນີ້ໄດ້ເກີດມີມາກັບຄົນລາວເຮົາເປັນເວລາດົນນານຈົນເປັນການຍາກທີ່ຈະແກ້ໄຂໃຫ້ຖືກຕ້ອງໄດ້.

ໃນອະດີດ ອາດຈະມີຜູ້ທີ່ໄດ້ຮັບການສຶກສາຢ່າງແຕກສານມາແລ້ວໃນເລື່ອງພິທີກຳຕ່າງໆຂອງສາສະໜາກັບຮີດຄອງປະເພນີນີ້ ແຕ່ກໍບໍ່ກ້າທີ່ຈະບອກຫຼືສອນຄວາມຈິງນີ້ແກ່ຄົນອື່ນ ເພາະຢ້ານວ່າຈະຖືກຕໍ່ຕ້ານຂັດຂວາງ, ປະຕິເສດ ແລ້ວຈະເຮັດບໍ່ສຳເລັດ ແຖມຍັງເປັນການຫຍຸ້ງຍາກແລະສ່ຽງຕໍ່ຊີວິດນຳອີກດ້ວຍ ທີ່ຈະນຳເອົາຄວາມຮູ້ແລະຄວາມເຂົ້າໃຈແບບໃໝ່ແກ່ຄົນທີ່ເຄີຍເຂົ້າໃຈຜິດມາແລ້ວ. ເມື່ອເປັນເຊັ່ນນີ້ຈຶ່ງບໍ່ມີໃຜກ້າທີ່ຈະນຳເອົາຄວາມຈິງອອກມາຢືນຢັນແລະປະຕິບັດຕາມ. ຜົນທີ່ຕາມມານັ້ນກໍຄືຄວາມເຊື່ອທີ່ຜິດພາດ ຄືເຊື່ອແບບປະປົນຄົນເລກັນມາຈົນເຖິງທຸກມື້ນີ້.

## ງ. ເປັນເພາະຄວາມຮັບຮູ້ນັ້ນມີບໍ່ເຖິງ.

ການຮັບຮູ້ໃນເລື່ອງຂອງສາສະໜາຫຼືຄຳສອນແບບໃໝ່ໆຂອງຄົນລາວເຮົານັ້ນຍັງບໍ່ສູງພໍທີ່ຈະຍອມຮັບຄຳສອນອັນໃໝ່ໆນັ້ນ

ໄດ້. ດັ່ງນັ້ນ, ເມື່ອມີຄົນໜຶ່ງຄົນໃດຫາກໝູນປ່ຽນທິດທາງຂອງຄວາມເຊື່ອກໍຈະຖືວ່າເປັນການຜິດຫຼືເປັນການກະບົດຄິດລ້ຽວຕໍ່ຊາດ, ຕໍ່ສາສະໜາທີ່ພໍ່ແມ່ພາເຊື່ອຖືມາເປັນເວລາດົນນານນັ້ນໂລດ. ສ່ວນຜູ້ທີ່ເຊື່ອຖືແລະໝູນປ່ຽນໄປຕາມຄວາມຮູ້, ຄຳສອນແລະແນວຄິດແບບໃໝ່ທີ່ຫາກໍມາເຖິງ ດັ່ງເຊັ່ນ ເລື່ອງຂອງພຣະເຢຊູດັ່ງນີ້ເປັນຕົ້ນ ກໍໄດ້ຖືກກ່າວຫາວ່າ ເປັນຄົນທີ່ລືມຊາດລືມສາສະໜາໄປ. ເມື່ອເປັນເຊັ່ນນີ້ ການທີ່ຈະປ່ຽນຄວາມເຊື່ອໃນພຣະເຈົ້າໃຫ້ຖືກຕ້ອງນັ້ນຈຶ່ງເກີດຂຶ້ນໄດ້ຍາກໃນທ່າມກາງໝູ່ພີ່ນ້ອງຊາວລາວເຮົາ. ຜູ້ທີ່ຍອມສຶກສາຢ່າງຈິງຈັງພ້ອມທັງມີຄວາມກ້າຫານພຽງພໍບໍ່ຢ້ານແລະບໍ່ສົນໃຈໃນຄຳກ່າວຫານິນທາໃດໆຂອງຄົນອື່ນເທົ່ານັ້ນຈຶ່ງພ້ອມທີ່ຈະຮັບການປ່ຽນແປງ ແລະຍອມຮັບເອົາຄວາມຈິງແລະຄວາມເຊື່ອແບບໃໝ່ນີ້ໄດ້.

ຈ. <u>ເປັນເພາະຄວາມມັກງ່າຍ</u>.

ຄົນລາວເຮົາເປັນຄົນທີ່ມັກງ່າຍບໍ່ຄ່ອຍມັກທີ່ຈະດີ້ນຮົນຫຼືພະຈົນໄພເໝືອນດັ່ງຊາດອື່ນເຂົາ. ອັນໃດກໍຕາມທີ່ເຫັນວ່າພໍເຊື່ອໄດ້ກໍຈະເຊື່ອກັນໄປໂລດ. ອັນຄວາມຈິງແລ້ວ ສຸພາສິດຂອງລາວບົດໜຶ່ງ ໄດ້ສອນເອົາໄວ້ວ່າ "ມັກງ່າຍນັ້ນໄດ້ຍາກ ມັກລຳບາກໄດ້ດີ" ແຕ່ກໍບໍ່ມີໃຜສົນໃຈໃນສຸພາສິດນັ້ນເທົ່າໃດ. ດັ່ງນັ້ນ, ເມື່ອມີການເຊື່ອຖືກັນມາຢ່າງໃດກໍຈະເຊື່ອກັນໄປຢ່າງນັ້ນໂດຍບໍ່ຕ້ອງການທີ່ຈະປ່ຽນແປງ ບໍ່ວ່າມັນຈະດີຫຼືຈະຊົ່ວ ຈະຖືກຫຼືຈະຜິດກໍຕາມ.

ສ. <u>ເປັນເພາະສະພາບການບັງຄັບ</u>.

ການເມືອງ ກໍມີສ່ວນທີ່ພາໃຫ້ມະນຸດເຮົາເຊື່ອຢ່າງງົມງວາຍໄດ້. ການທີ່ນັກການເມືອງມັກຈະໃຫ້ການເມືອງມີບົດບາດແລະພົວພັນໃນເລື່ອງຂອງການເຊື່ອຖືຂອງປະຊາຊົນນີ້ ກໍແມ່ນເພື່ອປະໂຫຍດໃນ





ມາສຳພຸດທະເຈົ້າຈຶ່ງໄດ້ກ່າວເອົາໄວ້ວ່າ "ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ" ເພື່ອຈະໄດ້ຕັກເຕືອນມະນຸດເຮົາໃຫ້ຮູ້ລ່ວງໜ້າເຖິງການກະທຳແລະຜົນຂອງການກະທຳນັ້ນທີ່ຈະຕາມມາພາຍຫຼັງ. ພະພຸດທະອົງຍັງໄດ້ຊົງເຕືອນພວກເຮົາທັງຫຼາຍເອົາໄວ້ອີກວ່າ "ອັດຕະຫິ ອັດຕະໂນນາໂຖ" ຕົນນັ້ນຈະຕ້ອງເປັນທີ່ເພິ່ງຂອງຕົນ ກ່ຽວກັບເລື່ອງນີ້ ມະນຸດເຮົາຈະຂຶ້ນສະຫວັນຫຼືລົງນະຮົກ ມັນບໍ່ໄດ້ຂຶ້ນຢູ່ກັບການກະທຳຄວາມດີ, ການເຮັດບຸນສິນກິນທານ ແລະການອາໄສຜົນບຸນຈາກຄົນອື່ນເຮັດໃຫ້ຫຼືສົ່ງໃຫ້ ແຕ່ຈະຕ້ອງອາໄສໃນການເລືອກທາງເດີນໂດຍຕົນເອງວ່າຈະເດີນຢູ່ໃນທາງສາຍໃດ, ພະພຸດທະອົງຍັງໄດ້ຊົງສອນເອົາໄວ້ອີກວ່າ ທາງທີ່ພວກເຮົາຄວນເດີນຕາມນັ້ນ ກໍຄືທາງຂອງພຣະເມສີອານ ຜູ້ທີ່ຈະມາໂຜດໂລກພາຍໜ້າ ເພາະພຣະອົງນັ້ນຄືສະເພົາຄຳລຳໃຫຍ່ນຳມະນຸດຂ້າມວາຕະສົງສານແລ້ວຈະພົບກັບພຣະແກ້ວສາມປະການ. ພະພຸດທະອົງພະອົງບໍ່ໄດ້ຊົງເປັນທາງແຕ່ເປັນຜູ້ເບີກທາງຫຼືຊີ້ບອກທາງນັ້ນເພື່ອເຮົາຈະໄດ້ເດີນຕາມໄປຖືກ. ດ້ວຍເຫດນີ້ ໃນໜັງທີ່ເປັນພາສາໄທທີ່ໃຫ້ຊື່ວ່າພຸດທະປະຫວັດຈາກພຣະໂອດ ໂດຍ ອ.ປ. ໜ້າທີ 505 ແລະໜ້າອື່ນໆຈຶ່ງໄດ້ກ່າວເອົາໄວ້ຢູ່ດ້ວຍກັນຫຼາຍຄັ້ງວ່າ:

"ຄຳເທດສະໜາ ຂອງພະໂຄດົມນີ້ເໝືອນຫງາຍຂອງທີ່ຂວ້ຳຢູ່ຫຼືເໝືອນເປີດຂອງທີ່ປົກປິດຢູ່ ຫຼືເໝືອນຊີ້ບອກທາງໃຫ້ແກ່ຄົນຫຼົງທາງ ຫຼືເໝືອນຍ່າງຕາມຕະກຽງໃນທີ່ມືດ ໃຫ້ຄົນຕາດີເຫັນຮູບນັ້ນ"

543 ປີຫຼັງຈາກນັ້ນ ອົງພຣະເຢຊູຄຣິດ ຜູ້ຊຶ່ງຊົງພຣະນາມອີກຢ່າງໜຶ່ງວ່າ "ພຣະເມຊີອາ" ກໍໄດ້ຊົງສະເດັດມາບັງເກີດໃນໂລກ. ພຣະອົງໄດ້ຊົງກ່າວແກ່ເຮົາທັງຫຼາຍເອົາໄວ້ວ່າ "ເຮົານີ້ແຫຼະເປັນທາງ

## 1. ພະພຸດທະເຈົ້າກ່າວເຖິງ.

ອົງພະພຸດທະເຈົ້າໄດ້ກ່າວໄວ້ໃນຄຳສອນຂອງພະອົງວ່າ:
"ທຳດີໄດ້ດີ ທຳຊົ່ວໄດ້ຊົ່ວ"
ອັດຕະຫິ ອັດຕະໂນນາໂຖ ຊຶ່ງແປວ່າ ຕົນເປັນທີ່ເພິ່ງຂອງຕົນ.

ຄຳສອນຂອງພະພຸດທະອົງຕອນນີ້ ເບິ່ງເໝືອນວ່າ ຊາວລາວເຮົາ ແລະຊາວພຸດໂດຍທົ່ວໄປ ແມ່ນໄດ້ພາກັນທ່ອງຈຳໄດ້ກັບປາກ. ແຕ່ສຳລັບພີ່ນ້ອງຜູ້ທີ່ສາມາດທ່ອງຈຳຂຶ້ນໃຈໄດ້ນັ້ນ ມີໃຜແດ່ທີ່ເຂົ້າໃຈເຖິງຄວາມໝາຍອັນເລິກເຊິ່ງໄປກວ່າຄຳວ່າ ພະພຸດທະເຈົ້າຕ້ອງການສອນເຮົາໃຫ້ ເປັນຄົນດີຫຼືເຂົ້າໃຈວ່າ ໃຜເຮັດອັນໃດໄວ້ ກໍຈະໄດ້ອັນນັ້ນຕອບ. ອັນຄວາມຈິງແລ້ວທີ່ພີ່ນ້ອງເຂົ້າໃຈເຊັ່ນນີ້ມັນກໍບໍ່ຜິດແລະກໍຖືກເຖິງ 100 ເປີເຊັນ.ແຕ່ຄຳສອນຕອນນີ້ຂອງພະອົງຍັງຄົງມີ ປິດສະໜາແຝງຢູ່ ແລະປິດສະໜານັ້ນກໍໄດ້ແກ່ "ທາງສອງເສັ້ນ" ເສັ້ນໜຶ່ງນັ້ນກໍຄືທາງຂອງພຣະເຈົ້າ ເດີນຕາມໄປແລ້ວຈະພົບກັບຄວາມສຸກໃນໂລກແລະຈະເຖິງສະຫວັນ ແລະເສັ້ນໜຶ່ງນັ້ນກໍຄືທາງຂອງຊາຕານ ເດີນຕາມໄປກໍຈະພົບກັບຄວາມທຸກໃນໂລກແລະຕົກໃນນະຮົກໃນບັ້ນປາຍ. ມະນຸດເຮົາທັງຫຼາຍພາຍໃນໂລກນີ້ມີສິດທີ່ຈະເລືອກເດີນຕາມໄປໃນທາງສອງເສັ້ນນີ້ໄດ້ຕາມໃຈຊອບແລະທຸກຄົນຈະຕ້ອງໄດ້ເດີນຕາມໄປບໍ່ແມ່ນທາງໃດກໍຕ້ອງທາງໜຶ່ງ. ປາຍທາງຂອງທັງສອງເສັ້ນນີ້ ຜູ້ທີ່ເດີນຕາມທຸກຄົນຈະຕ້ອງໄດ້ຮັບການຕອບສະໜອງຕາມທີ່ຕົນເລືອກເດີນແລະຕາມທີ່ພຣະເຈົ້າໄດ້ຊົງກຳນົດໄວ້ໂດຍບໍ່ມີການລ່ອຍເຫຼືອຫຼືເລືອກແທນກັນໄດ້. ດ້ວຍເຫດນີ້ການຮູ້ຈັກທາງທີ່ເຮົາກຳລັງເດີນຢູ່ນັ້ນຈຶ່ງເປັນສິ່ງທີ່ສຳຄັນຫຼາຍແລະເນື່ອງຈາກວ່າມັນສຳຄັນນີ້ເອງອົງພະສຳ





ການປົກຄອງນັ້ນເອງ ຄືການປົກຄອງຈະງ່າຍຂຶ້ນຄັນກ້າລັດຖະບານຫາກສາມາດຄວບຄຸມຄວາມເຊື່ອຖືຂອງປະຊາຊົນໄດ້. ຄວາມຈິງດັ່ງກ່າວນີ້ພິສູດໃຫ້ເຮົາເຫັນໄດ້ຈາກຕົວຢ່າງໃນປະຫວັດສາດຂອງກະສັດສອງອົງໃນສອງປະເທດຄື ໃນສະໄໝທີ່ພະຍາຟ້າງຸ່ມນຳພຸດທະສາສະໜາເຂົ້າມາສູ່ປະເທດລາວ ເມື່ອປີ ຄ.ສ 1353 ແລະໃນສະໄໝຂອງເຈົ້າຈັກກະພັດ ຄອນສະຕັນຕິນ ຂອງອີຕາລີ ໃນສະໄໝປີ ຄ.ສ 322 ນັ້ນ. ພະຍາຟ້າງຸ່ມນຳພຸດທະສາສະໜາເຂົ້າມາຍັງປະເທດລາວໃນເວລານັ້ນ ກໍເປັນເພາະວ່າມີການປົກຄອງໄພ່ຟ້າປະຊາກອນຍາກຍ້ອນຄົນບໍ່ມີສາສະໜານັ້ນເອງ ເພາະຄົນລາວເຮົາໃນສະໄໝນັ້ນແມ່ນລ້ວນແຕ່ພາກັນເຊື່ອຢູ່ໃນຜີສາງນາງໄມ້, ເຊື່ອຢູ່ໃນຜີໄທ້ຜີແຖນ, ຜີພໍ່ຜີແມ່ແລະເຈົ້າມະເຫສັກຫຼັກເມືອງໄປຕາມຄວາມເຂົ້າໃຈຂອງໃຜມັນ. ເມື່ອເປັນເຊັ່ນນັ້ນພະອົງຈຶ່ງໄດ້ຊົງອະນຸຍາດໃຫ້ຄະນະສົງຈາກປະເທດຂະເໝນ (ປະເທດກຳປູເຈຍ) ນຳເອົາພຸດທະສາສະໜາເຂົ້າມາປະກາດເຜີຍແຜ່ໃຫ້ແກ່ຄົນລາວເຮົາໄດ້ຟັງພ້ອມທັງໄດ້ປະກາດໃຫ້ເປັນສາສະໜາປະຈຳຊາດຂຶ້ນໃນເວລາຕໍ່ມາ ສ່ວນທາງດ້ານກະສັດຄອນສະຕັນຕິນຂອງພວກໂຣມັນ ພາຍຫຼັງທີ່ໄດ້ໄຊຊະນະຕໍ່ສົງຄາມຊີງບັນລັງແລ້ວ ພະອົງກໍໄດ້ຊົງເກີດມີຄວາມໝັ້ນພະໄທວ່າ ພຣະເຢຊູນີ້ທີ່ໄດ້ພາຄົນທັງໃນຈັກກະພົບຂອງຕົນເຊື່ອໃນພຣະເຈົ້າຂອງຄຣິສຕຽນຈົນໄດ້ກາຍມາເປັນນິກາຍໃຫຍ່ນິກາຍໜຶ່ງຂອງຄຣິສຕຽນໃນໂລກຄື ຄາທໍລິກ ນັ້ນກໍແມ່ນຍ້ອນໃຊ້ອຳນາດການປົກຄອງທາງການເມືອງໃຫ້ມີບົດບາດໃນການບັງຄັບແລະຄວບຄຸມນັ້ນເອງ.

ໃນປະຈຸບັນ, ຫຼາຍຊາດໃນໂລກນີ້ໄດ້ມີການຕັ້ງສາສະໜານີ້ຂຶ້ນໄວ້ໃຫ້ເປັນສາສະໜາປະຈຳຊາດຂອງຕົນ ສາຍເຫດກໍແມ່ນເພື່ອຄວາມສະດວກໃນການປົກຄອງນີ້ເອງ.

ຊ. ເປັນເພາະພີມານຊາຕານ.

ຊາຕານນີ້ມັນເປັນຕົ້ນເຫດທີ່ເຮັດໃຫ້ມະນຸດເຮົາໄດ້ພາກັນເຊື່ອຢ່າງງົມງວາຍ ເພາະການເຊື່ອຖືພຣະເຈົ້າແລະສາສະໜາຢ່າງງົມງວາຍຂອງມະນຸດເຮົານີ້ເປັນພົນດີຕໍ່ມັນ. ມານມັນຈະເຫັນພ້ອມກັບທຸກລັດທິ ທຸກສາສະໜາ ແຕ່ມັນຈະຫາທາງກີດກັ້ນຂັດຂວາງບໍ່ໃຫ້ມະນຸດເຮົາໄດ້ຮູ້ແລະໄດ້ເຊື່ອໃນພຣະເຈົ້າພຣະເຢຊູຄຣິດ ເພາະພຣະເຢຊູຄຣິດນີ້ຮູ້ຈັກວ່າມັນເປັນໃຜແລະຮູ້ຈັກໃນເລກົນຂອງມັນດ້ວຍ. ສ່ວນລັດທິແລະສາສະໜານັ້ນແມ່ນບໍ່ໄດ້ຮູ້ຈັກຖານະອັນແທ້ຈິງຂອງມັນ ຈຶ່ງໄດ້ເຮັດວຽກໃຫ້ມັນແລະໃຫ້ກຽດມັນມາໂດຍຕະຫຼອດ. ບາງສາສະໜາໃນໂລກນັ້ນເຖິງກັບຍ້ອງຍໍແລະນັບຖືມັນ ປັ້ນຮູບຂອງມັນກາບໄຫວ້ບູຊາ ແລະເອ້ອວດ ຍ້ອນບໍ່ຮູ້ຈັກວ່າມັນເປັນໃຜ. ຍົກຕົວຢ່າງໃນພຸດທະສາສະໜາໄດ້ມີການສ້າງຮູບງູ, ຮູບນາກໃຫຍ່ ນາກນ້ອຍເຕັມທົ່ວໄປໃນວັດວາອາລາມທຸກແຫ່ງ. ງູແລະນາກລ້ວນແຕ່ເປັນສັນຍາລັກຂອງຊາຕານ ແຕ່ເມື່ອພວກເຮົາບໍ່ຮູ້ກໍພາກັນ ຄວັດ ປັ້ນແລະສ້າງຂຶ້ນໄວ້ເປັນຮູບທີ່ສັກສິດແລ້ວກໍພາກັນກາບໄຫວ້ບູຊາ. ທີ່ເປັນເຊັ່ນນີ້ກໍແມ່ນຍ້ອນຄວາມຮູ້ເທົ່າບໍ່ເຖິງການແລະຍ້ອນການປິດບັງ, ການຫຼອກລວງຂອງພີມານຊາຕານນັ້ນເອງ (2 ໂກຣິນໂທ 4:4). ມະນຸດເຮົາຈະເຊື່ອມັນຢູ່ເຊັ່ນນີ້ ແລະຈະໃຫ້ກຽດມັນຢູ່ເຊັ່ນນີ້ ຕາບໃດຫາກຍັງບໍ່ຮູ້ຈັກມັນແລະບໍ່ຮູ້ຈັກເລກົນຂອງມັນ.

ໃນປະຈຸບັນຄົນລາວເຮົານັບເປັນລ້ານໆຍັງຄົງພາກັນເຊື່ອພຸດ,ພາມ, ຜີ ປະປົນຄົນເລກັນຢູ່ ແລະບາງຄົນນັ້ນຍິ່ງເຊື່ອປົນພິລຶກໄປກວ່ານັ້ນອີກຄືປົນຄຣິສຕຽນເຂົ້າໄປພ້ອມ ໂດຍຄິດໄປວ່າມີຫຼາຍສາສະໜາເທົ່າໃດຍິ່ງດີ ຈະໄດ້ມີຜູ້ຊ່ອຍຫຼາຍຂຶ້ນ ຂ້າພະເຈົ້າໄດ້ແຕ່ຫວັງຢ່າງຍິ່ງວ່າ ຄວາມຮູ້ແລະປະສົບການອັນເລັກນ້ອຍຈາກພຸດທະທຳ



# ບົດທີ 12
# ທ່ານກຳລັງເດີນຢູ່ໃນທາງສາຍໃດ?

ພາສິດໂບຮານລາວເພິ່ນໄດ້ກ່າວເອົາໄວ້ວ່າ
"ທາງໄປສະຫວັນນັ້ນມັນຮົກ ທາງໄປນະຮົກນັ້ນມັນແປນ"
ພຣະເຢຊູໄດ້ຊົງກ່າວເອົາໄວ້ວ່າ
"ເຮົານີ້ແຫຼະເປັນທາງນັ້ນ, ເປັນຄວາມຈິງ ແລະເປັນຊີວິດ
ບໍ່ມີໃຜໄປເຖິງພຣະບິດາໄດ້ນອກຈາກມາທາງເຮົາ"
(ໂຢຮັນ 14:6)

## ໃນໂລກນີ້ມີທາງຢູ່ສອງເສັ້ນທ່ານກຳລັງເດີນຢູ່ໃນເສັ້ນໃດ?

ໃນໂລກນີ້ມີທາງເດີນສຳລັບມະນຸດເຮົາ ຢູ່ແຕ່ພຽງສອງເສັ້ນຄື: "ທາງດີ" ແລະ "ທາງຊົ່ວ" ທາງດີນັ້ນກໍໄດ້ແກ່ທາງຂອງພຣະເຈົ້າ ແຕ່ທາງຊົ່ວນັ້ນກໍໄດ້ແກ່ທາງຂອງພີມານຊາຕານ. ທີ່ສຸດປາຍຂອງທາງທັງສອງເສັ້ນນີ້ບໍ່ຄືກັນ. "ທາງດີ" ຄືທາງຂອງພຣະເຈົ້າ ເປັນທາງທີ່ຈະນຳມະນຸດເຮົາໄປສູ່ສະຫວັນ ສ່ວນ "ທາງຊົ່ວ" ຄືທາງຂອງພີມານຊາຕານນັ້ນກໍຈະນຳມະນຸດເຮົາໄປສູ່ນະຮົກ. ທາງທັງສອງເສັ້ນນີ້ໄດ້ມີການກ່າວເຖິງຢູ່ດ້ວຍກັນທັງສອງສາສະໜາຄື: ທັງສາສະໜາພຸດແລະສາສະໜາຄຣິສຕຽນ.

ຄົນສະຫຼາດຢ້ານ ແລະໜີຈາກຄວາມຊົ່ວ
ແຕ່ວ່າຄົນໂງ່ຊີ້ຄຸຍ ແລະບໍ່ລະມັດລະວັງ

(ສຸພາສິດ 14:16)



ພຸດທະທຳນວາຍກ່ຽວກັບພຣະເມສີອານ

ນວາຍສະບັບນີ້ ຈະຊ່ອຍທ່ານໃຫ້ເກີດມີຄວາມຮູ້ ຄວາມເຂົ້າໃຈເພີ່ມເຕີມແລະກວ້າງຂວາງຫຼາຍຍິ່ງຂຶ້ນໃນເລື່ອງຂອງສາສະໜາ ແລະການເຊື່ອກົພຣະເຈົ້າໃນຊີວິດຂອງທ່ານ.

ເລື່ອງນີ້ໄດ້ຮ້ອນເຖິງພະກາພິມຜູ້ເປັນມານດາທີ່ເມືອງສະຫວັນ ພະກາພິມກໍໄດ້ແປງກາຍເປັນການມາປາກົດຕົວໃຫ້ລູກຊາຍທັງຫ້າໄດ້ເຫັນ ແລະໄດ້ເລົ່າເຫດການໃຫ້ຟັງຈົນເປັນທີ່ເຂົ້າໃຈ. ພໍລູກຊາຍໄດ້ຟັງແລ້ວ ກໍພາກັນກາບລົງທີ່ຕີນແມ່ ແລະແມ່ກໍໄດ້ເຮັດດ້າຍຕີນກາໃຫ້ລູກຄົນລະເສັ້ນ ເພື່ອເປັນເຄື່ອງໝາຍໃຫ້ຮູ້ວ່າເປັນລູກກາເຜືອກ ຄັນມອບດ້າຍໃຫ້ແລ້ວກໍກັບສູ່ສວງສະຫວັນ.

## 2. ຊີວິດທີ່ສົມຄວນນໍາມາພິຈາລະນາ.

ຝ່າຍລືສີທັງຫ້າ ເມື່ອໄດ້ດ້າຍຕີນກາທີ່ແມ່ໃຫ້ແລ້ວກໍແສນດີໃຈ ຈຶ່ງໄດ້ບໍາເພັນພຽນຈົນສາມາດ ສິ້ນອາຍຸໄຂ ໄປເກີດໃນສະຫວັນຊັ້ນດຸສິດສະເຫວີຍສຸກສົມບັດອັນເປັນທິບຕະຫຼອດກາລະນານ. ນີ້ຄືນິທານກາເຜືອກອັນໄດ້ຊ່ອຍຊີ້ໃຫ້ເຮົາໄດ້ຮູ້ຈັກເບື້ອງຕົ້ນຄວາມເປັນມາຂອງພະພຸດທະເຈົ້າໂຄຕະມະ ຜູ້ເກີດທີ່ປະເທດອິນເດຍ ກີດ້າຍຕີນກາຕາມສັນຍາລັກຂອງພຸດທະສາສະໜາ. ພະອົງຊົງເປັນພະເຈົ້າອົງທີ່ 4 ຕາມຕໍານານທີ່ກ່າວໄວ້ ສ່ວນພຣະເຈົ້າອົງທີ່ 5 ນັ້ນກໍຄືພຣະສີອະຣິຍະເມດໄຕຣໂຍ ທີ່ພະພຸດບອກວ່າຈະມາເກີດຫຼັງຈາກໝົດອາຍຸໄຂຂອງພະສາສະໜາຫຼືຄໍາສອນຂອງພະອົງ. ພຣະເຈົ້າອົງນີ້ໄດ້ຊົງເກີດຕາມທີ່ທໍານວາຍເອົາໄວ້ແທ້ ຄື: (1) ເກີດທີຫຼັງພະອົງ ແລະ (2) ເກີດເມື່ອ 500 ປີພາຍຫຼັງທີ່ພະພຸດທະເຈົ້າໄດ້ສະຫວັນນະຄົດຈາກໂລກນີ້ໄປແລ້ວ. ພຣະອົງໄດ້ຊົງບັງເກີດທີ່ປະເທດ ອິດສະຣາເອນໂດຍຊົງພຣະນາມວ່າພຣະເມຊີອາຫຼືພຣະເຢຊູຄຣິດ ນັ້ນເອງ. ອົງພຣະເຢຊູຄຣິດຜູ້ນີ້ແຫຼະຄືພຣະເມສີອານທີ່ຊາວພຸດທັງໂລກພາກັນລໍຄອຍ. ຂໍໃຫ້ພີ່ນ້ອງໄດ້ພາກັນພິຈາລະນາໃຫ້ດີກ່ຽວກັບເລື່ອງນີ້ ເພື່ອທ່ານຈະບໍ່ໄດ້ພາດພັ້ງ ແລະຜິດຫວັງໃນຊີວິດໃນການເຊື່ອກີໃນສາສະໜາຫຼືໃນພຣະເຈົ້າຂອງທ່ານ.

ສ່ວນໄຂ່ທັງຫ້າ ທີ່ໄດ້ໄຫຼໄປນຳນ້ຳນັ້ນ ໜ່ວຍໜຶ່ງໄຫຼໄປຕິດຢູ່ທີ່ທ່ານ້ຳຊຶ່ງເປັນທ່າຂອງແມ່ໄກ່ ຂະນະທີ່ແມ່ໄກ່ລົງມາຫຼິ້ນນ້ຳກໍເລີຍໄດ້ພົບໄຂ່ໜ່ວຍນີ້ ຈຶ່ງໄດ້ນຳໄປລ້ຽງຮັກສາໄວ້ ແມ່ໄກ່ມີຄວາມເມດຕາສົງສານເໝືອນລູກທີ່ເກີດໃນອຸທອນຂອງຕົນ. ໜ່ວຍທີ່ສອງໄປຕິດຢູ່ທີ່ທ່າຂອງນາກ ນາກກໍເອົາໄຂ່ໄປໄວ້ໃນຖ້ຳ ບຳລຸງຮັກສາໄວ້ເປັນຢ່າງດີເໝືອນລູກທີ່ເກີດໃນອຸທອນ.ໜ່ວຍທີ່ສາມກໍໄຫຼໄປຄ້າງຢູ່ທີ່ທ່າຂອງເຕົ່າຄັນເມື່ອເຕົ່າພົບໄຂ່ແລ້ວ ຈຶ່ງນຳເອົາໄປຮັກສາໄວ້ ແມ່ເຕົ່າກໍຮັກໄຂ່ແລະເອັນດູເໝືອນກັນ. ໜ່ວຍທີ່ສີ່ນັ້ນໄຫຼໄປຄ້າງຢູ່ທີ່ຫາດຊາຍຂະນະທີ່ແມ່ງົວລົງໄປກິນນ້ຳກໍໄດ້ພົບເຫັນຈຶ່ງໄດ້ນຳມາຮັກສາໄວ້ ແມ່ງົວໄດ້ເກີດມີຄວາມເມດຕາສົງສານ ເໝືອນລູກທີ່ເກີດໃນອຸທອນເຊັ່ນດຽວກັນ. ສ່ວນໜ່ວຍທີຫ້ານັ້ນລອຍລ່ອງຕາມກະແສ ແວ່ວຽນວັດລ່ອງລົງທາງໃຕ້ໄຫຼໄປໜ້າຄົງຄາຍາວຍ່ານເຖິງບ່ອນບ້ານລາຊະສີເຈົ້າພັກຊົາ (ສິງໂຕ) ເມື່ອລາຊະສີມາພໍ້ ກໍເອົາໄປລ້ຽງຮັກສາໄວ້ ສິງໂຕກໍຮັກໄຂ່ດັ່ງແຕງແພງດັ່ງແກ້ວຕາ. ການທີ່ສັດທັງຫ້າ ມີຄວາມເມດຕາປານີໄຂ່ທັງຫ້າໜ່ວຍນີ້ກໍເປັນເພາະບາລະມີຂອງໄຂ່ ດ້ວຍວ່າທັງຫ້າເປັນໜໍ່ເນື້ອໂພທິສັດຜູ້ປາຖະໜາເປັນພະພຸດທະເຈົ້າຊຶ່ງກໍໄດ້ເປັນພະພຸດທະເຈົ້າໄປແລ້ວສີ່ອົງ ເຫຼືອຢູ່ອົງດຽວຄື ພຣະສີອະຣິຍະເມດໄຕຣຈະໄດ້ມາເປັນພະພຸດທະເຈົ້າໃນອະນາຄົດ.

ໄຂ່ທັງຫ້າ ເມື່ອອອກມາເປັນຕົວຕົນແລ້ວ ກໍເປັນມະນຸດຮູບຮ່າງງາມ ແຕ່ລະຄົນຈຶ່ງຖາມແມ່ລ້ຽງຂອງຕົນວ່າ ໃຜເປັນແມ່ບັງເກີດເກົ້າ ແມ່ລ້ຽງກໍໄດ້ເລົ່າຄວາມຈິງໃຫ້ຟັງ. ຄັນຈະເລີນໄວໃຫຍ່ຂຶ້ນທັງຫ້າກໍໄດ້ລາແມ່ລ້ຽງຂອງຕົນອອກບວດເປັນລືສີ ອາໄສຢູ່ໃນປ່າຫິມະພານ. ທັງຫ້າໄດ້ມີໂອກາດພົບກັນແລະຊາບວ່າພວກຕົນເປັນລູກທີ່ເກີດຮ່ວມພໍ່ແມ່ດຽວກັນແຕ່ບໍ່ຮູ້ວ່າແມ່ນໃຜເປັນພໍ່ແມ່ແລະກໍບໍ່ຮູ້ວ່າເພິ່ນຢູ່ໃສກັນ



# ບົດທີ 3

# ພຸດທະປະຫວັດ, ຫຼັກຄຳສອນ, ຂໍ້ຄິດແລະຄວາມຈິງ

"ຄວາມຈິງເປັນສິ່ງທີ່ບໍ່ຕາຍ ເປັນສິ່ງທີ່
ມະນຸດເຮົາທັງຫຼາຍພາຍໃນໂລກນີ້ສົມຄວນພາກັນຮູ້"
"ແລ້ວທ່ານຈະຮູ້ຈັກຄວາມຈິງ ແລະຄວາມຈິງນັ້ນ
ຈະເຮັດໃຫ້ພວກທ່ານເປັນອິດສະຫຼະ"
(ໂຢຮັນ 8:32)

## 1. ພຸດທະປະຫວັດ.

ກ່ອນຈະພົບກັບຄຳທຳນວາຍຂອງພະພຸດທະເຈົ້າ ຂ້າພະເຈົ້າເຫັນວ່າ ຈະເປັນການດີບໍ່ໜ້ອຍ ຄັນເຮົາຫາກຮູ້ຈັກລ່ວງໜ້າກ່ອນວ່າພະອົງຊົງເປັນໃຜ? ມີປະຫວັດການເປັນມາຢ່າງໃດ? ພະພຸດທະເຈົ້ານັ້ນ ເດີມຊື່ວ່າ ສິທັດຖະ ເປັນບຸດຊາຍຂອງເຈົ້າສຸດໂທທະນະ ແລະນາງສິຣິມະຫາມາຍາ ເປັນກະສັດປົກຄອງກຸງກະບິນລະພັດ ນະຄອນຫຼວງຂອງແຄວ້ນ ສັກກະ ທາງພາກເໜືອຂອງປະເທດອິນເດຍ. ເມື່ອ 543 ປີກ່ອນຄຣິສຕະສັກກະລາດ. ເຈົ້າສຸດໂທທະນະ ພ້ອມທັງໄພ່ຟ້າປະຊາກອນຂອງ ອິນເດຍ ໃນສະໄໝນັ້ນກໍແມ່ນເຊື່ອຢູ່ໃນລັດທິພາມຊຶ່ງມີຄວາມເຊື່ອໃນເທບພະເຈົ້າແລະໃນການວຽນວາຍຕາຍເກີດ.

ເຈົ້າຊາຍສິທັດຖະໄດ້ຮັບການສຶກສາສິລະປະວິທະຍາເປັນຢ່າງດີເພາະເປັນເຊື້ອພະວົງ.ແຕ່ພໍໃຫຍ່ຂຶ້ນສິທັດຖະກໍເກີດມີຄວາມສົນໃຈໃນເລື່ອງຂອງຊີວິດນີ້ຫຼາຍກວ່າການເມືອງ. ທີ່ເປັນເຊັ່ນນີ້ກໍແມ່ນຍ້ອນຄວາມຈິງ 4 ຢ່າງທີ່ບີບຄັ້ນຫົວໃຈຂອງສິທັດຖະໃຫ້ເພິ່ນຕ້ອງຊອກຫາຄຳຕອບຄວາມຈິງທັງສີ່ຢ່າງນັ້ນກໍຄື:

(1) ມະນຸດເຮົານີ້ເປັນໃຜ?

(2) ເກີດມາຈາກໃສ?

(3) ເກີດມາເຮັດຫຍັງຢູ່ໃນໂລກນີ້?

(4) ຕາຍແລ້ວຈະໄປຢູ່ໃສ?

ສິທັດຖະຕ້ອງການຢາກຮູ້ຈັກຄຳຕອບຈຶ່ງໄດ້ໄຕ່ຖາມແລະສຶກສາຈາກບັນດາຄູອາຈານແລະນັກປາດຂອງພວກພາມທັງຫຼາຍໃນສະໄໝນັ້ນ ແຕ່ກໍບໍ່ມີໃຜສາມາດທີ່ຈະໃຫ້ຄຳຕອບອັນເປັນທີ່ພໍໃຈແກ່ພະອົງໄດ້. ດັ່ງນັ້ນ ເມື່ອໃຫຍ່ຂຶ້ນ ອາຍຸໄດ້ 16 ພັນສາ ພະອົງກໍໄດ້ຊົງອະພິເສກສົມຣົດກັບ ເຈົ້າຍິງ ຍະໂສທະຣາ ຫຼືນາງພິມພາ ແຫ່ງກຸງເທວະທະຫະໄດ້ລູກນຳກັນໜຶ່ງຄົນຊື່ຣາຫູນ. ເຈົ້າຊາຍສິທັດຖະ ເຖິງແມ່ນຈະແຕ່ງງານ ມີລູກແລ້ວກໍຕາມ ແຕ່ພະອົງກໍບໍ່ໄດ້ລົດລະໃນຄວາມຕັ້ງໃຈ ທີ່ຕ້ອງການຢາກຈະຮູ້ຈັກກັບຄວາມຈິງນັ້ນ ໃນທີ່ສຸດເມື່ອມີພະຊົນມາຍຸໄດ້ 29 ພັນສາ ພະອົງຈຶ່ງຕັດສິນໃຈໜີລູກ, ໜີເມຍ, ສະຫຼະສົມບັດແລະບັນລັງເຂົ້າປ່າຊອກຫາຄຳຕອບຕາມດັ່ງທີ່ພະອົງຕ້ອງການ. ພະອົງໃຊ້ເວລາຊອກຄົ້ນຫາຢູ່ຈົນເຖິງ 6 ປີ ຈຶ່ງໄດ້ພົບກັບຄວາມສຳເລັດຕາມທີ່ພຣະອົງຕ້ອງການ. ຄວາມຈິງທີ່ພະອົງໄດ້ຊົງຄົ້ນພົບໃນເວລານັ້ນ ມັນໄດ້ກາຍມາເປັນຫຼັກຄຳສອນຂອງສາສະໜາພຸດມາຈົນເຖິງທຸກມື້ນີ້.





ໝາກເດື່ອໃກ້ຝັ່ງນ້ຳ ຄັ້ງນັ້ນ ພະພຸດທະເຈົ້າທັງຫ້າເປັນໂພທິສັດເກີດໃນທ້ອງຂອງພະຍາກາເຜືອກ ຄືເມື່ອກາເຜືອກອອກໄຂ່ຫ້າໜ່ວຍແລ້ວທັງສອງຜົວເມຍກໍມີຄວາມຮັກຕໍ່ໄຂ່, ເອັນດູໄຂ່ນັ້ນຫຼາຍ ທັງສອງໄດ້ແບ່ງເວນຍາມກັນເຝົ້າຮັກສາຢູ່ບໍ່ຂາດ ວັນໃດຜົວໄປຫາອາຫານເມຍກໍຕ້ອງຢູ່ເຝົ້າແລະວັນໃດເມຍໄປຜົວກໍຕ້ອງຢູ່ ທັງສອງສາມາດຮັກສາໄຂ່ຂອງຕົນໄວ້ໄດ້ຢ່າງປອດໄພ.

ຢູ່ມາວັນໜຶ່ງສອງຜົວເມຍໄດ້ພາກັນບິນອອກໄປຫາອາຫານ ກົ້ມໄຂ່ໄວ້ໃນຮັງຕາມລຳພັງ ໃນມື້ນັ້ນກາເຜືອກທັງສອງຜົວເມຍໄດ້ເພີດເພີນນຳອາຫານການກິນຈົນລືມຄິດເຖິງໄຂ່. ຄັນຕົກມາເຖິງຕອນບ່າຍຝົນກໍຕົກໜັກ, ພາຍຸກໍພັດແຮງຈົນໄຂ່ທັງຫ້າໜ່ວຍໄດ້ຕົກຈາກຮັງ ໄຫຼໄປຕາມກະແສນ້ຳ. ພໍເຖິງຕອນແລງກາເຜືອກສອງຜົວເມຍກໍບິນກັບຮັງພໍມາເຖິງກໍປາກົດວ່າໄຂ່ທັງຫ້າໄດ້ຫາຍໄປເສຍແລ້ວ. ທັງສອງໄດ້ພາກັນບິນເຈີດເຈີ້ຍຊອກຫາໄຂ່ໄປຕາມພູເຂົາລຳເນົາໄພ ຕາມແມ່ນ້ຳນ້ອຍກໍບໍ່ພົບ ເມື່ອໝົດຫົນທາງ ຈຶ່ງໄດ້ແຕ່ລະທົມຂົມຂື່ນຮ້ອງໄຫ້ໂສກເສົ້າເສຍໃຈໄປຕາມທຳມະຊາດຂອງຊີວິດ. ໂອ້ອະນິຈັງວາຕະສັງຂະລາ ທຸກຊີວິດເກີດມາຕ້ອງມີແກ່ເຈັບຕາຍ ບໍ່ວ່າສັດຫຼືມະນຸດ ເມື່ອມີການພາກຈາກກັນກໍຈະຕ້ອງເກີດມີການລະທົມໝອງໄໝ້. ກາເຜືອກທັງສອງເມື່ອໝົດຫົນທາງທີ່ຈະຊອກຫາລູກໄດ້ ຈຶ່ງໄດ້ແຕ່ອະທິຖານຂໍໃຫ້ດິນຟ້າອາກາດ, ເທບພະເຈົ້າຫຼືສິ່ງສັກສິດ (ພຣະເຈົ້າ) ຜູ້ຢູ່ຟ້າໃຫ້ປົກປ້ອງຮັກສາລູກຮັກຂອງຕົນ. ດ້ວຍຄວາມຮັກຄວາມຫ່ວງໄຍຕໍ່ລູກອັນແສນສຸດທີ່ຈະທົນໄຫວ ເມື່ອກາເຜືອກທັງສອງໄດ້ຮ້ອງໄຫ້ອະທິຖານຈົບລົງແລ້ວ ທັງສອງກໍໄດ້ສິ້ນໃຈຕາຍ. ພໍຕາຍໄປແລ້ວ ກໍໄປເກີດຢູ່ໃນສວງສະຫວັນ ມີນາມວ່າ ພະກາພົມ ສະເຫວີຍສຸກສົມບັດໃນສະຫວັນພັ່ງພ້ອມໄປດ້ວຍສົມບັດທິບມີເທບບໍລິວານຫຼວງຫຼາຍ.

ເຫັນວ່າເປັນທີ່ໜ້າສົນໃຈຈຶ່ງຢືບເອົາມາແປແລະພິມໄວ້ໃນພຸດທະທຳນວາຍເຫຼັ້ມນີ້.

ພະກຸກຸສັນທະ (ໄກ່)

ພະໂກນາຄົມມະນະ (ນາກ)

ພະກັດສະປະ (ເຕົ່າ)

ພະໂຄຕະມະ (ງົວ)

ແລະພຣະອະຣິຍະເມດໄຕຣຍະ (ສິງໂຕ)

ເລື່ອງກໍມີຢູ່ວ່າ ໃນພັດທະກັບມີພະພຸດທະເຈົ້າມາເກີດໃນໂລກມະນຸດ 5 ພະອົງຄື: ພະກຸກຸ ສັນທະ, ພະໂກນາ ຄົມມະນະ, ພະກັດສະປະ, ພະໂຄຕະມະ ແລະ ພຣະສີອະຣິຍະເມດໄຕຣຍະ ອົງທີ 5 ຈະມາເກີດເມື່ອສິ້ນສາສະໜາພະໂຄຕະມະ. ອ້າງຕາມຄຳທຳນວາຍ ກ້າຜູ້ຍິງເຂົ້າບວດສາສະໜາຂອງພະໂຄຕະມະຈະຢູ່ໄດ້ 500 ປີ. ຕາມທີ່ເຮົາໄດ້ສຶກສາມານີ້ໄດ້ມີຜູ້ຍິງເຂົ້າບວດອີ່ຫຼີ່. ດັ່ງນັ້ນ ພຸດທະສາສະໜາຈຶ່ງໝົດຍຸກຫຼືໝົດອາຍຸໄຂໄປແລະໃນຂະນະດຽວກັນ 543 ຫຼັງຈາກນັ້ນ ພຣະເມຊີອາ (ພຣະເຢຊູຄຣິດ)ກໍໄດ້ເກີດຂຶ້ນມາໃນໂລກຕາມກຳນົດເວລາທີ່ທຳນວາຍເອົາໄວ້.

ພວກນັກປາດໂບຮານໄດ້ກ່າວໄວ້ວ່າ ພະພຸດທະເຈົ້າທັງຫ້າອົງນັ້ນໄດ້ກືກຳເນີດເກີດແລ້ວຄືໄດ້ເກີດນຳພະຍາກາເຜືອກ (ກາສີຂາວ) ຊຶ່ງບໍ່ເຄີຍເຫັນຈັກເທື່ອໃນໂລກທີ່ກາຈະເປັນພະຍາ ເປັນກະສັດຫຼືມີບັນລັງ. ພະຍາກາເຜືອກເປັນແມ່ຜູ້ທຳອິດຂອງພະພຸດທະເຈົ້າທັງຫ້າພະອົງ. ດັ່ງນັ້ນ, ຄົນໂບຮານຈຶ່ງກືເລື່ອງ ພະຍາກາເຜືອກນີ້ເປັນເລື່ອງທີ່ສຳຄັນ ຈຶ່ງມີເລື່ອງເລົ່າສືບຕໍ່ກັນມາວ່າດັ່ງນີ້:

ໃນອະດີດຕະການ ນານແສນນານຜ່ານມາແລ້ວ ໄດ້ມີກາເຜືອກສອງຜົວເມຍ ອາໄສຢູ່ໃນປ່າໃຫຍ່ຫິມະພານ ເຮັດຮັງຢູ່ເທິງຕົ້ນ





## 2. ຫຼັກຄຳສອນອັນເປັນຫົວໃຈຂອງພຸດທະສາສະໜາ.

ກ. ຫຼັກທົ່ວໄປ : ມີ 3 ປະການຄື: (1) ໃຫ້ເວັ້ນຈາກຄວາມຊົ່ວທັງປວງ (2) ໃຫ້ເຮັດຄວາມດີ (3) ໃຫ້ຊຳລະໃຈໃຫ້ສະອາດ.

ຂ. ຫຼັກການສຶກສາ : ມີ 3 ປະການຄື: (1) ສິນສຶກສາ ຄືສຶກສາໃນເລື່ອງຂອງສິນ (2) ຈິດສຶກສາ ຄືການສຶກສາໃນເລື່ອງຂອງຈິດ ແລະ (3) ປັນຍາສຶກສາ ຄືການສຶກສາເລື່ອງປັນຍາ. ການສຶກສາໃນຂັ້ນທີ່ສາມນີ້ຍ່ອມສົ່ງໃຫ້ເຖິງ "ວິມຸດຕິ" ຄືຄວາມພົ້ນ ອັນໄດ້ແກ່ການຫຼຸດພົ້ນໃນເພິງກິເລດ ແລະເພິງທຸກ ອັນເປັນຈຸດມຸ່ງໝາຍອັນສຳຄັນໃນພຸດທະສາສະໜາ.

ຄ. ຫຼັກການສັງຄົມສົງເຄາະ : ມີ 4 ປະການຄື: (1) ການເອື້ອເຟື້ອໃຫ້ປັນຫຼືທີ່ເອີ້ນວ່າທານ (2) ການເຈລະຈາອ່ອນຫວານໜ້າຟັງ, (3) ການບຳເພັນປະໂຫຍດແກ່ກັນແລະກັນ ແລະ (4) ການວາງຕົນໃຫ້ເໝາະສົມ.

ງ. ຫຼັກຂອງຜູ້ມີໃຈສູງ : ມີ 4 ປະການ: (1) ເມດຕາ (ມີໄມຕີຈິດຄິດຈະໃຫ້ເປັນສຸກ ຊຶ່ງກົງກັນຂ້າມກັບພະຍາບາດ) (2) ກະລຸນາ (ເອັນດູ ຫຼືສົງສານຄິດຈະຊ່ວຍໃຫ້ພົ້ນທຸກ ຊຶ່ງກົງກັນຂ້າມກັບຄິດບຽດບຽນ) (3) ມຸທິຕາ (ພອຍຍິນດີເມື່ອຜູ້ອື່ນໄດ້ດີຊຶ່ງກົງກັນຂ້າມກັບອິດສາ ແລະ (4) ອຸເບກຂາ (ໃຈເປັນກາງ ຊຶ່ງກົງກັນຂ້າມກັບລຳອຽງ)

ຈ.	ຫຼັກອະຣິຍະສັດສີ່ : ມີຢູ່ 4 ປະການດັ່ງນີ້ຄື:

ທຸກຂ໌	ຄວາມທຸກທັງປວງ
ສະມຸໄທ	ເຫດທີ່ພາໃຫ້ເກີດຄວາມທຸກ
ນິໂຣດ	ຄວາມດັບທຸກ
ມັກ	ທາງທີ່ພາໃຫ້ເກີດຄວາມດັບທຸກອັນໄດ້ແກ່ :

(1) ເຫັນຊອບ (ສຳມະທິຖິ Right View)
(2) ຄິດຊອບ (ສຳມາສັງກັບມັນປະ Right Thought)
(3) ວາຈາຊອບ (ສຳມາວາຈາ Right Speech)
(4) ກະທຳຊອບ (ສຳມາກຳມະຕະ Right Action)
(5) ທຳມາຫາກິນໃນທາງຊອບ (ສຳມາອະຊີວະ Right Living)
(6) ຄວາມພຽນຊອບ (ສຳມາວາຍາມ Right Effort)
(7) ຕັ້ງສະຕິຊອບ (ສຳມາສະຕິ Right Recollection)
(8) ການຕັ້ງໃຈຊອບ (ສຳມາສະມາທິ Right Concentration)

## 3. ສິ່ງທີ່ທ່ານຄວນຄິດໃນບົດຮຽນນີ້.

1. ອະຣິຍະສັດ ທັງ 4 ຫຼືຄວາມຈິງທັງສີ່ຂໍ້ທີ່ກ່າວມາໃນຂ້າງເທິງນີ້ຕາມປະຫວັດນັ້ນບອກວ່າ ສິທັດຖະເປັນຜູ້ຕັດສະຣູ້ຮູ້ດ້ວຍຕົນເອງ ອັນຄວາມຈິງນັ້ນກໍເປັນເຊັ່ນນັ້ນແທ້ ແລະທີ່ພະອົງຊົງຄົ້ນພົບໄດ້ນັ້ນກໍເປັນເພາະວ່າມັນມີຢູ່ແລ້ວ ເປັນຄວາມຈິງທີ່ມີມາຢູ່ໃນໂລກເປັນເວລາດົນນານ. ຊຶ່ງຄວາມຈິງທັງໝົດນີ້ໄດ້ປາກົດຢູ່ໃນພຣະຄຳພີ



# ບົດທີ 11

# ນິທານພື້ນເມືອງ ເລື່ອງພະຍາກເຜືອກ

"ຈົ່ງລະວັງໃຫ້ດີ ຢ່າໃຫ້ຜູ້ໜຶ່ງຜູ້ໃດນຳເຈົ້າທັງຫຼາຍຕົກເປັນເຫຍື່ອຂອງສະຕິປັນຍາຂອງໂລກ ຊຶ່ງເປັນຄຳຫຼອກລວງ ແລະໄຮ້ສາລະຕາມຕຳນານຂອງມະນຸດທີ່ສືບຕໍ່ກັນມາ, ຕາມອຳນາດສິ່ງສັກສິດແຫ່ງສາກົນຈັກກະວານແລະບໍ່ແມ່ນຕາມອົງພຣະຄຣິດ"
(ໂກໂລຊາຍ2:8)

## 1. ນິທານທີ່ໜ້າຄິດ.

ນິທານເລື່ອງຂອງກາເຜືອກເປັນນິທານທີ່ສຳຄັນແຕ່ມີຄົນຮູ້ໜ້ອຍ, ເປັນນິທານທີ່ຂ້ອນຂ້າງຈະຂັດກັບຄວາມເປັນຈິງຕາມທຳມະຊາດ ເມື່ອຟັງແລ້ວກໍຈະຂັດໆຫູ. ແຕ່ທີ່ນຳມາບັນຈຸໄວ້ໃນໜັງສືເຫຼັ້ມນີ້ນັ້ນ ກໍເປັນເພາະວ່າມັນມີການກ່ຽວພັນກັບເລື່ອງຂອງພຣະເມສີອານຫຼືພຣະສີອະຣິຍະເມດໄຕຣຜູ້ທີ່ພະພຸດທະເຈົ້າໄດ້ກ່າວວ່າຈະມາໂຜດໂລກພາຍໜ້າ. ທຳອິດຂ້າພະເຈົ້າໄດ້ຍິນເຖິງເລື່ອງນີ້ ຈາກໝໍລຳແລະຕໍ່ມາກໍໄດ້ຍິນຜູ້ນັ້ນເວົ້າຜູ້ນີ້ເວົ້າແຕ່ກໍຈັບຈຸດຫຼືຈັບເອົາຫຼັກຖານບໍ່ໄດ້ ຈົນໃນທີ່ສຸດຂ້າພະເຈົ້າໄດ້ອ່ານພໍ້ຢູ່ໃນໜັງສືເຫຼັ້ມໜຶ່ງທີ່ໃຫ້ຊື່ວ່າ "ລວມວັນນະຄະດີອີສານ"ຊຶ່ງຂຽນໂດຍທ່ານປຣີຊາພິນທອງ.ເມື່ອໄດ້ອ່ານແລ້ວກໍ

ບໍ່ຍຸຕິທຳແລະວຸ້ນວາຍ ຕາຍໄປບໍ່ເຫັນໜ້າພຣະເຈົ້າ. ດ້ວຍເຫດນີ້ພວກເຮົາຈຶ່ງຈຳເປັນຕ້ອງຄຳນຶງເຖິງຄຳທຳນວາຍຕອນນີ້ ແລ້ວຮີບຫາທາງປ່ຽນແປງ ທັງນີ້ກໍແມ່ນເພື່ອຄວາມສຸກຂອງເຮົາທັງຫຼາຍທັງໃນໂລກນີ້ແລະສືບໆໄປເປັນນິດດ້ວຍ

3. <u>ຂອບເຂດຂອງອານາຈັກຫຼືແຜ່ນດິນຂອງພຣະເຈົ້າ</u>.

ອານາຈັກຂອງພຣະເຈົ້ານັ້ນບໍ່ແມ່ນອານາຈັກແຫ່ງໂລກນີ້ແຕ່ເປັນອານາຈັກແຫ່ງຈິດວິນຍານ. ດ້ວຍເຫດນີ້ຈຶ່ງເປັນອານາຈັກທີ່ມີຂອບເຂດບໍ່ຈຳກັດດ້ວຍພົມແດນ,ຜິວພັນ,ຊັ້ນວັນນະແລະເຊື້ອຊາດວົງຕະກຸນ. ໃຜກໍຕາມທີ່ເຊື່ອ ແລະໄວ້ວາງໃຈຢູ່ໃນພຣະເຢຊູຄຣິດ, ຜູ້ນັ້ນຈະຢູ່ໃນປະເທດໃດ, ມີຖານະການເປັນຢູ່ຢ່າງໃດ ຜູ້ນັ້ນກໍສາມາດເປັນປະຊາກອນ ຫຼືເປັນພົນລະເມືອງໃນອານາຈັກຂອງພຣະເມສີອານຫຼືພຣະເມຊີອານັ້ນໄດ້. ການເຂົ້າເປັນໄພ່ພົນໃນອານາຈັກຂອງພຣະເຈົ້າໃນອານາຈັກຂອງພຣະອົງນີ້ມີຄວາມສຳຄັນຫຼາຍຕໍ່ຊີວິດຝ່າຍຈິດວິນຍານຂອງມະນຸດ ທັງນີ້ກໍເປັນເພາະວ່າ ຊີວິດຂອງມະນຸດເຮົາບໍ່ໄດ້ສິ້ນສຸດຢູ່ແຕ່ພຽງຄວາມຕາຍ ແຕ່ຍັງຈະຕ້ອງເປັນຢູ່ຕະຫຼອດໄປ. ບັນຫາມີຢູ່ວ່າ ເຮົາຈະໄປຢູ່ໃສ? ຈະໄປຢູ່ໃນສະຫວັນກັບພຣະເຈົ້າພຣະເຢຊູ (ໂຢຮັນ 14:1-3) ຫຼືຈະໄປຢູ່ໃນນະຮົກກັບມານຊາຕານ (ພຣະນິມິດ 20:10, 15).

> ຍ້ອນວ່າຜູ້ທີ່ສັດຊື່ຈະອາໄສຢູ່ໃນແຜ່ນດິນ, ແລະຜູ້ທີ່ປາສະຈາກຕຳໜິຈະຄ້າງຢູ່ໃນນັ້ນ, ແຕ່ຄົນທີ່ຊົ່ວຮ້າຍຈະຖືກຕັດອອກຈາກແຜ່ນດິນ ແລະຜູ້ທີ່ບໍ່ສັດຊື່ຈະຖືກຖອນຮາກອອກໄປ
>
> (ສຸພາສິດ 2:21-22)





ຂອງຊາວຢິວ ທີ່ປະຈຸບັນເຮົາໄດ້ເອີ້ນກັນວ່າ ພຣະຄຳພີພາກພຣະສັນຍາເດີມນັ້ນ. ອ້າງຕາມຕຳນານທີ່ບອກວ່າ ສິທັດຖະເປັນຜູ້ຕັດສະຣູ້ຮູ້ໂດຍຕົນເອງນັ້ນຈຶ່ງສາມາດເປັນໄປໄດ້ ຍ້ອນວ່າມັນມີຢູ່ແລ້ວ ພຽງແຕ່ຕັ້ງໃຈຊອກຫາເທົ່ານັ້ນແລ້ວກໍຈະພົບ (ມັດທາຍ 7:7-8 ໜ້າ 21).

2. ມັກແປດບໍ່ແມ່ນທາງແປດເສັ້ນທີ່ນຳເຮົາໄປສູ່ຄວາມພົ້ນທຸກ. ແຕ່ເປັນທາງເສັ້ນດຽວທີ່ເລີ່ມຕົ້ນດ້ວຍການເບິ່ງເຫັນທາງຊອບຫຼືທາງທີ່ຖືກຕ້ອງແລ້ວປະຕິບັດຕາມດ້ວຍຄວາມຕັ້ງໃຈ ຈຶ່ງຈະສຳເລັດຜົນຕາມເປົ້າໝາຍ. ພຣະທຳຄຳພີໄດ້ສອນເຮົາເອົາໄວ້ວ່າ ພຣະເຢຊູ ຊົງເປັນທາງນັ້ນ (ໂຢຮັນ 14:6) ຜູ້ທີ່ເຊື່ອແລະວາງໃຈກໍຈະພົ້ນບາບໃນນະຮົກ (ໂຢຮັນ 5:24; ພຣະນິມິດ 20:15) ແລະຜູ້ທີ່ດຳລົງຊີວິດແລະປະຕິບັດຕາມດ້ວຍຄວາມຕັ້ງໃຈຢູ່ໃນເສັ້ນທາງຂອງພຣະອົງ ຜູ້ນັ້ນກໍຈະມີຄວາມສຸກ (ເພງສັນລະເສີນ 1:1-3) ແລະຈະໄດ້ພົບກັບຄວາມສຳເລັດທຸກປະການ (ໂຢຊວຍ 1:5-8).

ຄວາມຈິງທັງສີ່ປະການນີ້ເຮົາເອີ້ນກັນວ່າ ຫຼັກອາຣິຍະສັດສີ່ ເປັນອະຣິຍະສັດທີ່ເຮັດໃຫ້ ສິທັດຖະ ປ່ຽນມາເປັນ ພະພຸດທະເຈົ້າ ຊຶ່ງແປວ່າຜູ້ຮູ້ແລ້ວ ຫຼື ຜູ້ຕື່ນແລ້ວ, ຜູ້ທີ່ຈະເລີນ ຫຼືພັດທະນາແລ້ວ, ບໍ່ແມ່ນປ່ຽນມາເປັນ ພຣະເຈົ້າ ຕາມທີ່ຫຼາຍຄົນໄດ້ເຂົ້າໃຈ. ພາຍຫຼັງທີ່ສິທັດຖະໄດ້ຄົ້ນພົບຄວາມຈິງສີ່ປະການນີ້ແລ້ວ ກໍມີຜູ້ຂະໜານນາມໃຫ້ພະອົງອີກຢ່າງມາກມາຍເຊັ່ນ:

| | | |
|---|---|---|
| ພະສຳມາສຳພຸດທະເຈົ້າ | ແປວ່າ | ຜູ້ຕັດຮູ້ເອງໂດຍຊອບ |
| ພະຕະຖາຄົດ | ແປວ່າ | ຜູ້ສະເດັດມາດີ |
| ພະບໍຣົມສາສະດາ | ແປວ່າ | ສາສະດາຜູ້ຍອດຍ້ຽມ |

## 4. ຄວາມຈິງອັນສຳຄັນທີ່ທ່ານຄວນຮູ້.

ກ. ບໍ່ມີນາມມະຍົດຕອນໃດ ທີ່ຊີ້ໃຫ້ເຫັນວ່າ ສີທັດຖະ ເປັນພຣະເຈົ້າ ເພາະພະອົງເອງນັ້ນບໍ່ໄດ້ແມ່ນພຣະເຈົ້າ.

ພະອົງນັ້ນເປັນພຽງແຕ່ຜູ້ສະແຫວງຫາເໝືອນດັ່ງທ່ານ ແລະຂ້າພະເຈົ້ານີ້ເອງ ຫາກແຕ່ເປັນຜູ້ທຳອິດທີ່ຕັ້ງໃຈແລະມີການເສຍສະຫຼະໃນການຊອກຫາທີ່ຍິ່ງໃຫຍ່ກວ່າໃຜໆໃນປະຫວັດ. ຄຳວ່າ 'ເຈົ້າ' ທີ່ຕິດຢູ່ໃນຊື່ຂອງພະອົງນັ້ນເປັນນາມມະຍົດທີ່ຕິດມາ ເພາະວ່າພະອົງຊົງເປັນເຊື້ອກະສັດຊຶ່ງບໍ່ໄດ້ກ່ຽວກັບການຊົງເປັນພຣະເຈົ້າຂອງ ສີທັດຖະເລີຍ. ຫຼາຍຄົນເຂົ້າໃຈຜິດຈຶ່ງຄິດວ່າພະອົງຊົງເປັນພຣະເຈົ້າ ແລະໄດ້ເຊື່ອພະອົງໃນຖານະຂອງພຣະເຈົ້ານີ້ຕະຫຼອດມາ.

ຂ. ພຸດທະສາສະໜານີ້ບໍ່ໄດ້ແມ່ນສາສະໜາຂອງລາວເຮົາ.

ພຸດທະສາສະໜາບໍ່ໄດ້ເປັນສາສະໜາຂອງຄົນລາວເຮົາ ຕາມດັ່ງທີ່ຫຼາຍຄົນຄິດ. ແຕ່ເປັນສາສະໜາທີ່ເກີດຢູ່ໃນຕ່າງປະເທດ ຄືເກີດຢູ່ໃນປະເທດອິນເດຍ ຊຶ່ງໄດ້ແຜ່ພາຍມາທາງພາກພື້ນເອເຊຍອາຄະເນ ເມື່ອຫຼາຍສັດຕະວັດກ່ອນ. ເປັນສາສະໜາທີ່ມີຄຳສອນທີ່ເຈືອປົນກັບລັດທິພາມຈົນຜູ້ທີ່ເຊື່ອໂດຍທົ່ວໄປບໍ່ສາມາດທີ່ຈະໄຈ້ແຍກອອກໄດ້ວ່າອັນໃດເປັນຄຳສອນຂອງພຸດແລະອັນໃດເປັນຄຳສອນຂອງພາມ. ພາຍຫຼັງທີ່ພະຍາຟ້າງຸ່ມນຳມາສະຖາປະນາຂຶ້ນເປັນສາສະໜາປະຈຳຊາດແລ້ວ ຄົນລາວກໍໄດ້ພາກັນເອົາຜີປົນເພີ່ມເຂົ້າໄປອີກຕໍ່ໜຶ່ງ ຈຶ່ງມົ່ວກັນມາຈົນເຖິງທຸກມື້ນີ້.

ຄ. ພຸດທະສາສະໜາເຂົ້າມາສູ່ປະເທດລາວ.

ເມື່ອປີຄ.ສ 1353ຜ່ານທາງປະເທດຂະເໝນ ໂດຍກະສັດລາວອົງໜຶ່ງ ຄືພະຍາຟ້າງຸ່ມ ເປັນຜູ້ນຳເຂົ້າມາປະກາດເຜີຍແຜ່ແກ່ຄົນລາວ





ພີ່ນ້ອງເຮົາໄດ້ຮູ້ ເຊັ່ນ ມະຫາ ຄຳໄມ ທຳມະວົງສາ, ມະຫາ ຈັນໃດ ສຸທຳມະວົງ, ມະຫາ ທອງສວຍ ສັກດາຮັກ, ມະຫາ ບຸນເລີດ ກຸລະມິດ ເຫຼົ່ານີ້ເປັນຕົ້ນ. ຂໍຂອບໃຈທີ່ທ່ານທັງສີ່ໄດ້ເປັນພະຍານແລະເປັນຕົວຢ່າງທີ່ດີໃຫ້ແກ່ພວກເຮົາທັງຫຼາຍກ່ຽວກັບເລື່ອງນີ້.

## 2. ຄວາມໝາຍຂອງຄຳທຳນວາຍ.

ສຳລັບຄຳທຳນວາຍທີ່ກ່າວມາໃນຂ້າງເທິງນີ້ ກໍໄດ້ຊີ້ໃຫ້ພວກເຮົາໄດ້ເຫັນເຖິງສະພາບການເປັນຢູ່ຂອງໂລກ ໃນເວລາທີ່ພຣະເມສິອານຈະລົງມາບັງເກີດວ່າ ຈະມີສະພາບການປ່ຽນແປງ ສີ່ຢ່າງປາກົດຂຶ້ນຄື:

(1) ຄວາມອຸດົມສົມບູນທາງດ້ານອາຫານ
(2) ຄວາມຈະເລີນຂອງໂລກແລະສັງຄົມ
(3) ການເປັນຢູ່ຂອງມວນມະນຸດທາງດ້ານສິນທຳ
(4) ອະນາຄົດຂອງຜູ້ເຊື່ອຟັງ.

ຊີວິດແລະສັງຄົມມະນຸດໃນປະຈຸບັນ ບໍ່ວ່າຊີວິດແລະສັງຄົມນັ້ນຈະໂຫດຮ້າຍແລະປ່າເຖື່ອນເຖິງຂະໜາດໃດກໍຕາມ ເມື່ອຂ່າວປະເສີດເລື່ອງຂອງພຣະເຢຊູຄຣິດນີ້ຫາກໄປເຖິງເມື່ອໃດ ຊີວິດແລະສັງຄົມນັ້ນກໍຈະມີການປ່ຽນແປງໃນສີ່ດ້ານນີ້ເກີດຂຶ້ນໃນທີ່ນັ້ນ. ທັງນີ້ກໍແມ່ນຍ້ອນພຣະຄຸນ, ຄວາມຮັກ ແລະລິດອຳນາດຂອງພຣະອົງນັ້ນເອງ. ໃນປະຈຸບັນໂລກມະນຸດເຮົາເຕັມໄປດ້ວຍພຶດພັນທັນຍາຫານ ແຕ່ມະນຸດກັບຂາດແຄນອາຫານ, ມະນຸດເຮົາໃນໂລກໄດ້ມີການຜະລິດວັດຖຸຂອງໃຊ້ທີ່ທັນສະໄໝຫຼວງຫຼາຍເພື່ອໃຫ້ຄວາມສະດວກໃນການດຳລົງຊີວິດ ແຕ່ໂລກມະນຸດບາງແຫ່ງກັບມີແຕ່ຄວາມທຸກຍາກລຳບາກ, ສັງຄົມ

"ແຜ່ນດິນຂອງພຣະສີອານຫຼືພຣະສີອະຣະຍະເມດໄຕຣນັ້ນ ກໍ່ວ່າພຣະອົງທາງກລົງມາເກີດເມື່ອໃດ ແຜ່ນດິນນີ້ຈະອຸດົມສົມບູນແລະມີອາຫານການກິນທຸກຢ່າງ, ນໍ້າຈະໄຫຼ, ໄຟສະຫວ່າງ ຫົນທາງໄປມາສະດວກແລະມີຢູ່ຕະຫຼອດໄປເປັນນິດ ບໍ່ມີຄວາມທຸກຍາກ ແຕ່ເທົ່າທຽມກັນໝົດ ບໍ່ເຊື່ອມສູນຈັກເທື່ອຈົນຕະຫຼອດໂລກສະຫຼາຍໄປ ແລ້ວຈະໄດ້ພົບກັບພຣະແກ້ວສາມປະການຄື ສະຫວັນນິພານ ດັ່ງນັ້ນແລ".

ຄຳທຳນວາຍໃນຕອນນີ້ ໄດ້ມາຈາກລຳພື້ນເມືອງ ຊຶ່ງເປັນລຳທີ່ທຳນວາຍກ່ຽວກັບພຣະເມສີອານແລະແຜ່ນດິນຂອງພຣະອົງ. ເປັນການຈື່ຈຳຂອງມະຫາ ຄຳໄມ ທຳມະວົງສາ ພາຍຫຼັງທີ່ເພິ່ນໄດ້ບວດຮຽນຂຽນອ່ານມາຈົນໄດ້ເປັນມະຫາ. ມະຫາ ຄຳໄມ ຜູ້ນີ້ ພາຍຫຼັງທີ່ໄດ້ສຶກສາຄົ້ນຄວ້າເພີ່ມເຕີມເພິ່ນກໍໄດ້ພົບວ່າ ພຣະເມສີອານ ຫຼືພຣະສີອະຣິຍະເມດໄຕຣໂຍ ຜູ້ທີ່ພວກເຮົາຊາວລາວຊາວພຸດໄດ້ພາກັນລໍຄອຍວ່າຈະມາໂຜດໂລກພາຍໜ້ານັ້ນກໍໄດ້ແກ່ພຣະເຢຊູຄຣິດນັ້ນເອງ. ຫຼັງຈາກນັ້ນທ່ານກໍໄດ້ຕັດສິນໃຈເຊື່ອແລະຮັບເອົາພຣະອົງທ່ານໄດ້ເລົ່າເຖິງເລື່ອງນີ້ໃຫ້ແກ່ຂ້າພະເຈົ້າຟັງພາຍຫຼັງທີ່ທ່ານໄດ້ກາຍມາເປັນຄຣິສຕຽນແລ້ວ. ຄວາມຈິງແລ້ວພີ່ນ້ອງຊາວລາວເຮົາເປັນຈຳນວນບໍ່ໜ້ອຍໄດ້ພາກັນບວດຮຽນ ແລະໄດ້ສຶກສາຮຽນຮູ້ເຖິງຄວາມຈິງກ່ຽວກັບເລື່ອງນີ້ ແຕ່ບໍ່ຄ່ອຍມີຜູ້ໃດກ້າທີ່ຈະອະທິບາຍໄຈ້ແຍກໃຫ້ພີ່ປ້ານ້າສາວແລະອອກຕົນຍາດໂຍມຟັງກັນໃຫ້ຮູ້ຢ່າງລະອຽດແລະກີ່ຖ້ວນກ່ຽວກັບເລື່ອງນີ້. ທັງນີ້ກໍແມ່ນຍ້ອນເຫດຜົນສອງປະການຄື: (1) ບໍ່ມີຄວາມເຂົ້າໃຈເລິກເຊິ່ງແລະພຽງພໍ (2) ຜູ້ທີ່ຮູ້ແລ້ວນັ້ນກໍຢ້ານວ່າຈະຖືກຕໍ່ຕ້ານແລະກ່າວຫາວ່າເປັນຄົນທຳແຕກໄປ ດ້ວຍເຫດນີ້ຈຶ່ງມິດໄວ້ກໍດີກວ່າ. ຂໍຂອບໃຈນຳ ທ່ານ ອາຈານແລະມະຫາທັງຫຼາຍຜູ້ທີ່ມີຄວາມກ້າຫານໃນການຢືນຢັນຄວາມຈິງທັງຫຼາຍເຫຼົ່ານີ້ໃຫ້ແກ່





ແລະຕໍ່ມາກໍໄດ້ປະກາດແລະສະຖາປະນາຂຶ້ນໄວ້ເປັນສາສະໜາປະຈຳຊາດ. ສາສະໜາພຸດບາງພາກສ່ວນກໍໄດ້ເຂົ້າມາສູ່ປະເທດລາວເຮົາໂດຍຜ່ານທາງຕິເບດແລະປະເທດຈີນ ເປັນການເຂົ້າມາແບບແຊກຊຶມບໍ່ແມ່ນແບບເປັນທາງການຕາມດັ່ງທີ່ໄດ້ເຂົ້າມາທາງປະເທດຂະເໝນນັ້ນ.

ງ. ຄົນລາວເຮົາເມື່ອກ່ອນນັ້ນກໍແມ່ນນັບຖືຜີເປັນຊີວິດຈິດໃຈ.

ການເຊື່ອຖືຜີນີ້ມີມາຕັ້ງແຕ່ດຶກດຳບັນອ້າງຕາມພຣະຄຳພີຂອງຄຣິສຕຽນ ມະນຸດເຮົາເຊື່ອຜີ ຮອງຈາກການເຊື່ອໃນພຣະເຈົ້າ (ປະຖົມມະການ 3:1-7). ດັ່ງນັ້ນ ຄັນເຮົາຈະລຽງເປັນລຳດັບກ່ຽວກັບປະຫວັດຂອງການເຊື່ອຖືຂອງມະນຸດກໍເປັນດັ່ງນີ້:

1. ໃນຕອນທຳອິດ ມະນຸດເຮົາທັງໂລກໄດ້ເຊື່ອຢູ່ໃນພຣະເຈົ້າອົງດຽວກັນບໍ່ໄດ້ເຊື່ອຜີແລະບໍ່ໄດ້ເຊື່ອສາສະໜາອື່ນ
2. ຕໍ່ມາກໍໄດ້ມີການເຊື່ອຟັງຜີມານຊາຕານ ເປັນອັນດັບທີສອງ ແລະ
3. ເຊື່ອໃນລັດທິ ແລະສາສະໜາຕ່າງໆ ໃນທຸກມື້ນີ້

ການເຊື່ອຖືໃນພຣະເຈົ້າແລະໃນສາສະໜາຂອງມະນຸດເຮົາໄດ້ມີການວິນວຽນກັນຢູ່ຕະຫຼອດມາແລະຈະວິນວຽນຢູ່ເຊັ່ນນີ້ຕະຫຼອດໄປຈົນກວ່າວັນສຸດທ້າຍແຫ່ງການສິ້ນສຸດຂອງໂລກນີ້.

ຈ. ພຸດອັດຕະໂນມັດ.

ເມື່ອພຸດທະສາສະໜາໄດ້ຖືກປະກາດແລະສະຖາປານາໃຫ້ເປັນສາສະໜາປະຈຳຊາດແລ້ວ ທຸກຄົນທີ່ເກີດຢູ່ໃນຊາດລາວນີ້ຈຶ່ງຖື

ວ່າເປັນພຸດໄປໃນຕົວຢ່າງອັດຕະໂນມັດໂລດ ເຖິງແມ່ນຈະຮູ້ຫຼືບໍ່ຮູ້, ຈະເຂົ້າໃຈຫຼືບໍ່ເຂົ້າໃຈໃນຄຳສອນຂອງພຸດນັ້ນຫຼືບໍ່ກໍຕາມ ນີ້ແຫຼະຄືການເຊື່ອຖືແບບຕາມມີ ຕາມເກີດ, ຕາມພໍ່, ຕາມແມ່ ແລະຕາມປະເທດຊາດບ້ານເມືອງເພິ່ນພາເຊື່ອ.

ສ. <u>ທຸກສາສະໜາດີໝົດ</u>.

ຄົນລາວເຮົາມັກຈະສະຫຼຸບຄວາມເອົາແບບງ່າຍໆວ່າທຸກໆສາສະໜານັ້ນດີໝົດ ເພາະສາສະໜາໃດກໍແມ່ນລ້ວນແຕ່ສອນໃຫ້ຄົນເປັນຄົນດີທັງນັ້ນ. ຄົນທີ່ເວົ້າເຊັ່ນນີ້ກໍຄືຄົນທີ່ບໍ່ຮູ້ແລະບໍ່ເຂົ້າໃຈໃນເລື່ອງຂອງສາສະໜານັ້ນເອງ. ບໍ່ແມ່ນທຸກສາສະໜາໃນໂລກນີ້ຈະສອນໃຫ້ມະນຸດເປັນຄົນດີໝົດ ບາງສາສະໜາໃນໂລກນີ້ຊົ່ວຮ້າຍ ເຖິງກັບນຳຄວາມພິນາດຈິບຫາຍມາສູ່ຊີວິດທັງຂອງຕົນເອງແລະຄົນອື່ນດ້ວຍ.

ຊ. <u>ສິ່ງທີ່ເຮົາຄວນຈຳ</u>:

ພຣະເຈົ້າ, ຜີ, ສາສະໜາແລະລັດທິສີ່ຢ່າງນີ້ມີຄວາມແຕກຕ່າງກັນ. ພຣະເຈົ້າ ໃນໂລກນີ້ມີແຕ່ພຽງອົງດຽວ ແຕ່ຍັງມີບາງຄົນຄິດວ່າມີຫຼາຍອົງ, ຜີມີຫຼາຍໂຕແຕ່ມີຫົວໜ້າໃຫຍ່ຢູ່ແຕ່ພຽງໂຕດຽວຄືຊາຕານ, ສາສະໜາກໍມີຫຼາຍສາສະໜາ ບາງສາສະໜານັ້ນກໍເຊື່ອວ່າມີພຣະເຈົ້າອົງດຽວດັ່ງເຊັ່ນ: ຄຣິສຕຽນ, ອິດສະລາມຫຼືມຸດສະລິມ, ບາງສາສະໜາກໍເຊື່ອວ່າມີພຣະເຈົ້າຫຼາຍອົງດັ່ງເຊັ່ນ: ສາສະໜາຮິນດູ (ພາມ), ສາສະໜາເຊນແລະອື່ນໆ ບາງສາສະໜານັ້ນກໍບໍ່ເຊື່ອໃນພຣະເຈົ້າເລີຍແຕ່ກັບເຊື່ອໃນປັດຊະຍາຂອງມະນຸດ ແລ້ວກໍຢຸດຢູ່ທີ່ປັດຊະຍານັ້ນ ຈຶ່ງບໍ່ນຳເຂົ້າໄປຈົນເຖິງເປົ້າໝາຍຂອງຜູ້ຕັ້ງສາສະໜານັ້ນດັ່ງເຊັ່ນ: ສາສະໜາພຸດ, ສາສະໜາຂົງຈື້ຂອງຈີນ, ສາສະໜາຊິນໂຕຂອງຍີ່ປຸ່ນ, ສາສະໜາເຕົ່າຂອງຈີນ ເຫຼົ່ານີ້ເປັນຕົ້ນ.



# ບົດທີ 10
# ຄຳທຳນວາຍເຖິງແຜ່ນດິນຂອງພຣະເມສີອານ

ອານາຈັກຫຼືແຜ່ນດິນຂອງພຣະເຈົ້ານັ້ນກວ້າງໃຫຍ່ໄພສານ
ບໍ່ຈຳກັດດ້ວຍຂອບເຂດຂອງປະເທດ ຫຼືພູມີພາກຂອງໂລກ,
ຜູ້ທີ່ເປັນໄພ່ພົນຂອງພຣະອົງນັ້ນກໍບໍ່ຈຳກັດດ້ວຍຜິວພັນ, ເຊື້ອຊາດ,
ສັນຊາດ ຫຼືຊັ້ນວັນນະ ຄື ບຸກຄົນໃດກໍຕາມທີ່ຍອມຮັບວ່າຕົນເອງເປັນ
ຄົນບາບແລະຍອມຮັບວ່າພຣະເຢຊູຊົງເປັນພຣະເຈົ້າ, ເຊື່ອແລະ
ຮັບເອົາພຣະອົງໄວ້ເປັນພຣະຜູ້ຊົງໂຜດໃຫ້ພົ້ນຂອງຕົນແລ້ວ
ຜູ້ນັ້ນກໍຈະສາມາດໄດ້ເຫັນແລະໄດ້ເຂົ້າໃນອານາຈັກນີ້ໄດ້
(ໂຢຮັນ 3:3,5)

1. <u>ຄຳທຳນວາຍທີ່ກ່າວເຖິງແຜ່ນດິນຂອງພຣະສີອານ</u>.

ໃນຄຳສອນຂອງພຸດທະສາສະໜານັ້ນໄດ້ມີຫຼາຍຕອນທີ່ໄດ້ສອນແລະທຳນວາຍເຖິງເລື່ອງແຜ່ນດິນຂອງພຣະເມສີອານຜູ້ທີ່ຈະມາໂຜດໂລກພາຍໜ້າ. ເນື່ອງຈາກວ່າຄຳທຳນວາຍດັ່ງກ່າວນີ້ໄດ້ມີການພົວພັນກັບກັບໜັງສືເຫຼັ້ມນີ້ ຂ້າພະເຈົ້າຈຶ່ງໄດ້ນຳເອົາມາບັນທຶກໄວ້ເພື່ອເປັນການເພີ່ມເຕີມຄວາມຮູ້ແລະຄວາມໝັ້ນໃຈໃຫ້ແກ່ທ່ານ ຊຶ່ງມີເນື້ອໃນວ່າດັ່ງນີ້:

ໂທດແລ້ວ. (ໂຢຮັນ 3:36) ບອກວ່າຜູ້ທີ່ວາງໃຈໃນພຣະບຸດກໍມີຊີວິດຕະຫຼອດໄປເປັນນິດ ຜູ້ບໍ່ເຊື່ອຟັງພຣະບຸດກໍຈະບໍ່ເຫັນຊີວິດ ແຕ່ພຣະພິໂລດຂອງພຣະເຈົ້າກໍຈະປົກຄຸມຢູ່ເທິງຜູ້ນັ້ນ. (ມັດທາຍ 10:32-33) ບອກວ່າ ຖ້າເຮົາຫາກປະຕິເສດພຣະອົງ ພຣະອົງກໍຈະປະຕິເສດເຮົາ ແລະຖ້າເຮົາຍອມຮັບພຣະອົງ ພຣະອົງກໍຈະຊົງຍອມຮັບເຮົາຕໍ່ໜ້າພຣະບິດາ. (ໂຣມ 10:9-10) ບອກວ່າ ຜູ້ທີ່ຍອມຮັບດ້ວຍປາກແລະເຊື່ອດ້ວຍໃຈກໍຈະພົ້ນ. (ພຣະນິມິດ 20:10-15; 21:8) ບອກໄວ້ອີກວ່າ ຄົນທີ່ບໍ່ມີຊື່ໃນທະບຽນແຫ່ງຊີວິດ ຂອງພຣະເຢຊູກໍຈະຖືກກິ້ມລົງບຶງໄຟນະຣົກອັນຊຶ່ງເປັນຄວາມຕາຍຄັ້ງທີສອງ ແລະຄັ້ງສຸດທ້າຍຂອງມະນຸດເຮົາໃນໂລກ. ສ່ວນຜູ້ທີ່ມີຊື່ໃນທະບຽນແຫ່ງຊີວິດນັ້ນ ກໍຈະໄດ້ເຂົ້າສູ່ສະຫວັນຫຼືແຜ່ນດິນໂລກໃໝ່ ທີ່ພຣະອົງໄດ້ຊົງຈັດແຈງໄວ້ສຳລັບເຮົາທັງຫຼາຍ.

ໝາຍເຫດ:

ທ່ານຜູ້ຊ່ອຍໃຫ້ຂໍ້ມູນດັ່ງກ່າວນີ້ ໃນອະດີດເພິ່ນເຄີຍເປັນຜູ້ທີ່ບວດຮຽນຂຽນອ່ານມາແລ້ວຈົນໄດ້ຊື່ວ່າເປັນມະຫາ. ແຕ່ປະຈຸບັນໄດ້ກາຍມາເປັນຄຣິສຕຽນແລ້ວຍ້ອນວ່າເພິ່ນໄດ້ບວດຮຽນຂຽນອ່ານ.

> "ທີ່ມະນຸດເຮົາຈະຕ້ອງຖືກກິ້ມລົງໃນບຶງໄຟນະຣົກນັ້ນ
> ບໍ່ແມ່ນເປັນເພາະວ່າເຮົາເປັນຄົນບາບ ແຕ່ເປັນເພາະວ່າ
> ເຮົາບໍ່ຍອມຮັບເອົາການອະໄພບາບໂດຍທາງພຣະເຢຊູຄຣິດຕ່າງຫາກ
> ເພາະວ່າຄວາມບາບນັ້ນພຣະເຈົ້າໄດ້ຊົງໃຫ້ອະໄພໝົດແລ້ວ
> ໂດຍທາງພຣະເຢຊູ"
>
> (ໂຢຮັນ 5:24)





ຍ. <u>ພຸດທະສາສະໜາເປັນສາສະໜາທີ່ຖືກຈັດໄວ້ໃນກຸ່ມ ອະເທວະນິຍົມ ຄືກຸ່ມທີ່ບໍ່ເຊື່ອໃນພຣະເຈົ້າຫຼືເທບພະເຈົ້າ</u>.

(ນີ້ແມ່ນພວກສາວົກຫຼືພຸດທະສາສະນິກະຊົນ ຕະຫຼອດເຖິງນັກສາສະໜາສາດໃນໂລກນີ້ຈັດໄວ້). ແຕ່ເຮົາຈະຕ້ອງສຶກສາຄຳສອນແລະປັດຊະຍາຂອງພະອົງໃຫ້ດີຈຶ່ງຈະພົບຄວາມຈິງ ເພາະຄຳສອນຂອງພະພຸດທະອົງລ້ວນແຕ່ເປັນປິດສະໜາ ຜູ້ທີ່ເຊື່ອຈະຕ້ອງຕີຄວາມໝາຍເອົາເອງ. ພຸດທະສາສະໜາສອນໃຫ້ໃຊ້ປັນຍາພິຈາລະນາເຫດຜົນ, ບໍ່ຖືບຸກຄົນເປັນໃຫຍ່, ບໍ່ຖືໂລກເປັນໃຫຍ່ ແຕ່ຖື <u>ທຳ</u>ເປັນໃຫຍ່. <u>ທຳ</u> ໃນທີ່ນີ້ຈະເປັນໃຜ? ຫຼືເປັນອັນໃດ? ຜູ້ໄດ້ຍິນຈະຕ້ອງໃຊ້ປັນຍາ ຫາຄົ້ນຄິດເອົາເອງຈຶ່ງຈະຮູ້ ແລະຈະພົບ. ສຳລັບຂ້າພະເຈົ້າ <u>ທຳ</u> ນີ້ກໍຄືພຣະເຈົ້າພຣະເຢຊູຄຣິດນັ້ນເອງ ຈົ່ງອ່ານເບິ່ງ (ໂຢຮັນ 1:1-3) ໜ້າທີ 267 ໃນພຣະທຳຄຳພີພາກພຣະສັນຍາໃໝ່ ຂອງຄຣິສຕຽນ ແລ້ວທ່ານຈະຮູ້ທັນທີ <u>ທຳ</u>ນັ້ນຄືພຣະເຈົ້າ.

ດ. <u>ຈາກປັດສົມໂອວາດ</u>.

ອົງພະພຸດທະເຈົ້າ ໄດ້ກ່າວໄວ້ວ່າ "ແຕ່ເຈົ້າທັງຫຼາຍຈົ່ງສະແຫວງຫາ ວິມຸດຕິ ໂດຍຄວາມບໍ່ປະໝາດເຖີດ" ວິມຸດຕິ ກໍແປວ່າຄວາມລອດພົ້ນ. ຜູ້ປະໝາດກໍຈະບໍ່ພົ້ນເປັນແນ່ ຄວາມລອດພົ້ນນີ້ຈະຕ້ອງຊອກຫາດ້ວຍປັນຍາແລະການສຶກສາ ແລະຈະຕ້ອງບໍ່ປະໝາດດ້ວຍ. ອ້າງຕາມພຣະທຳຄຳພີນັ້ນ ໃນໂລກນີ້ແມ່ນມີທາງຢູ່ແຕ່ພຽງທາງດຽວເທົ່ານັ້ນທີ່ຈະຊ່ອຍໃຫ້ມະນຸດເຮົາລອດພົ້ນຈາກຄວາມຜິດບາບໄດ້ ຄືທາງຂອງອົງພຣະເຢຊູ (ກິຈການ 4:12) ໜ້າ 349 ເນື່ອງດ້ວຍເຫດນີ້ແຫຼະ ການສຶກສາຮຽນຮູ້ຈັກວ່າ ພຣະເຢຊູນັ້ນຊົງເປັນຜູ້ໃດຈຶ່ງເປັນເລື່ອງທີ່ຈຳເປັນສຳລັບເຮົາທັງຫຼາຍ.

ຄ. ທ່ານຈະມີລິດເດດ:

ລິດເດດທີ່ພຣະເຢຊູຊົງສຳແດງ ເປັນລິດເດດທີ່ພຣະອົງຊົງກະທຳຂຶ້ນໃນທ່າມກາງຝູງຊົນຊຶ່ງບໍ່ເໝືອນກັບນິທານປຳປາ ຫຼືນິທານໂບຮານ ທີ່ມະນຸດເລົ່າກັນມາໃນອະດີດນັ້ນ. ພຣະອົງຊົງໂຜດຊ່ອຍຄົນເຈັບໄຂ້ໄດ້ປ່ວຍ (ມັດທາຍ 15:29-31), ຂັບໄລ່ຜີຮ້າຍ (ມັດທາຍ 8:28-34), ຫ້າມລົມພາຍຸໃນທະເລ (ມັດທາຍ 8:23-27) ຍ່າງເທິງໜ້ານ້ຳໄປໂດຍບໍ່ຈົມ (ມັດທາຍ 14:25-27), ຊົງໂຜດຊ່ອຍຄົນຕາຍໃຫ້ເປັນຄືນຂຶ້ນມາ (ໂຢຮັນ 11:38-45), ແລະຕົວຂອງພຣະອົງກໍຊົງຄືນຂຶ້ນມາຈາກຄວາມຕາຍດ້ວຍ (ໂຢຮັນ 20:1-10). ນີ້ຄືລິດເດດອຳນາດອັນຍິ່ງໃຫຍ່ຂອງພຣະເຢຊູ ຊຶ່ງເປັນລິດເດດທີ່ບໍ່ມີໃຜສະເໝີເໝືອນໄດ້ໃນໂລກ.

ງ. ບາດແຜທີ່ບໍ່ໜ້າເບິ່ງ:

ຈາກພຣະທຳຂ່າວປະເສີດທັງສີ່ເຫຼັ້ມ ໄດ້ອະທິບາຍເຖິງພຣະສະພາບຂອງອົງພຣະເຢຊູຄຣິດວ່າ ພຣະອົງຊົງຖືກຂ້ຽນຕີ (ລູກາ 22:63-65; 23:16-17; ມັດທາຍ 27: 27-31). ນອກຈາກນີ້ພວກເຂົາຍັງໄດ້ຕອກຄຶງພຣະອົງໄວ້ທີ່ໄມ້ກາງແຂນ (ໂຢຮັນ 19:33) ເຂົາແທງພຣະອົງທີ່ ພຣະອຸຣະ (ຂ້າງ) ຂອງພຣະອົງ (ໂຢຮັນ 19:33). ພາບພົດທັງໝົດນີ້ແມ່ນກົງກັບຄຳທຳນວາຍທີ່ພະພຸດທຳນວາຍໄວ້ທັງນັ້ນ. ອີກຢ່າງໜຶ່ງພາບພົດໃນການຂ້ຽນຕີ, ຕອກຄຶງ, ແທງຂ້າງ, ຕະຫຼອດເຖິງການປະຈານຕ່າງໆນາໆ ກໍແມ່ນເປັນທີ່ໜ້າລັງກຽດຢູ່ແລ້ວໃຜເຫັນກໍຂ້ອນຂ້າງຈະປະຕິເສດ ກົ່ມນ້ຳລາຍຄາຍຂີ້ມູກຫຼາຍກວ່າທີ່ຈະຕ້ອນຮັບ.

ຈ. ຜູ້ຍອມຮັບແລະຜູ້ປະຕິເສດ:

ໃນພຣະທຳ (ໂຢຮັນ 3:18) ບອກວ່າ ຜູ້ທີ່ເຊື່ອແລະໄວ້ວາງໃຈໃນພຣະບຸດກໍບໍ່ຖືກຕັດສິນລົງໂທດ ແຕ່ຜູ້ທີ່ບໍ່ວາງໃຈ ກໍຖືກຕັດສິນລົງ

2. ຄຳທຳນວາຍນີ້ມີການພົວພັນກັບຊີວິດຂອງອົງພຣະເຢຊູຄຣິດຢ່າງໃດແດ່?

ຄຳທຳນວາຍທັງໝົດໃນຂ້າງເທິງນີ້ ຄັນພວກເຮົາຫາກສຶກສາເບິ່ງໃຫ້ດີ ພວກເຮົາກໍຈະພົບວ່າ ມັນໄດ້ມີການພົວພັນກັນຢ່າງໃກ້ສິດກັບຊີວິດຂອງອົງພຣະເຢຊູຄຣິດ ດັ່ງທີ່ທ່ານຈະໄດ້ພົບກັບຄຳອະທິບາຍດັ່ງຕໍ່ໄປນີ້:

ກ. ພຣະເຢຊູ ໄດ້ສະເດັດມາຍັງໂລກນີ້ 543 ປີ ຫຼັງຈາກພະພຸດໄດ້ກ່າວໄວ້:

ພະພຸດທະເຈົ້າໄດ້ກ່າວເອົາໄວ້ວ່າ ຖ້າຜູ້ຍິງເຂົ້າບວດ ສາສະໜາຂອງພະອົງຈະຕັ້ງຢູ່ໄດ້ພຽງ 500 ປີ. ເຫດການນີ້ກໍໄດ້ເກີດຂຶ້ນຕາມດັ່ງທີ່ກ່າວໄວ້ ຄື: ໄດ້ມີພະນາງ ມະຫາບໍດີ ໂຄຕະມີ ໄດ້ທູນຂໍອຸປະສົມບົດຕາມດັ່ງທີ່ກ່າວມາໃນຂໍ້ທີ 2 ຕອນຕົ້ນຂອງບົດທີ 5 ນັ້ນ. ດ້ວຍເຫດນີ້ສາສະໜາຂອງພະພຸດທະອົງຈຶ່ງໝົດກັບລົງພາຍ 500 ປີ ຕາມດັ່ງທີ່ພະອົງຊົງກ່າວເອົາໄວ້

ຂ. ເກີດຢູ່ກັບຄົນທຸກຍາກໃນເຂດບ້ານນອກ:

ພຣະເຢຊູເຖິງຈະເກີດຢູ່ໃນຕະກຸນສູງຄື ຕະກຸນຂອງດາວິດກໍຕາມ ແຕ່ໂຢເຊບຜູ້ທີ່ເປັນບິດາຝ່າຍເນື້ອໜັງຂອງພຣະເຢຊູນັ້ນກໍເປັນພຽງແຕ່ຊ່າງໄມ້ທີ່ທຸກຍາກຄົນໜຶ່ງເທົ່ານັ້ນ (ມັດທາຍ 13:55). ໃນເວລາທີ່ພຣະອົງເກີດ ພຣະອົງກໍບໍ່ໄດ້ເກີດຢູ່ຫໍຜາສາດລາຊະວັງແຕ່ກັບເກີດຢູ່ທີ່ຄອກສັດ ອູ່ຫຼືທີ່ຮອງພຣະກາຍຂອງພຣະອົງກໍຄື ຮາງຫຍ້າ (ລູກາ 2:6-7). ບ້ານເບັດເລເຮັມທີ່ພຣະອົງເກີດນັ້ນກໍເປັນບ້ານນ້ອຍໆຊຶ່ງຄົນສ່ວນຫຼາຍໃນເວລານັ້ນມອງຂ້າມ (ມີກາ 5:2; ມັດທາຍ 2:3).



# ບົດທີ 4

# ພຸດທະທຳນວາຍກ່ຽວກັບຍຸກສຸດທ້າຍຂອງໂລກ

ມື້ສຸດທ້າຍໂລກຊິເກີດອົນລະຫົນ
ຝູງຄົນພາກັນຕາຍ ດັ່ງຫີນກາງແກ້ງ
ໃຜຜູ້ມີບຸນລົ້ນ ບາລະມີຢູ່ສົ່ງ
ຊິໄດ້ເຂົ້າຢູ່ຊົ້ນສາມຕົ້ນຣົ່ມໂພ

1. ຄຳທຳນວາຍຂອງອົງພະສຳມາສຳພຸດທະເຈົ້າ.

"ສອງພັນຫ້າໂລກາຊິໄຫວຫວັ່ນ ໂລກຂອງເຮົາຊິຈ້ອນເຂົ້າສາມຣົ່ມໂພສີ ໃຜບຸນມີຊິເຫັນໜ້າພຣະເຈົ້າ ໃນສະໄໝນັ້ນ ພຣະເຈົ້າຈະເອົາເຂົາເງິນເຂົາຄຳມາຮ່ອນ ຂີ້ມອດຄ້າງຂີ້ຊ້າງລອດ".

ຄຳທຳນວາຍດັ່ງກ່າວນີ້ໄດ້ມາມີມາເປັນເວລາດົນນານ ຊຶ່ງໄດ້ມີການກ່າວຂານກັນມາໂດຍຕະຫຼອດ. ຄົນລາວເຮົາເກືອບທຸກຄົນ ສາມາດທ່ອງຂຶ້ນໃຈໄດ້ ພ້ອມທັງຕີຄວາມໝາຍກັນໄປຕາມຍຸກຕາມສະໄໝແລະຕາມຄວາມເຂົ້າໃຈຂອງຕົນ. ອັນຄວາມຈິງແລ້ວຄຳທຳນວາຍດັ່ງກ່າວນີ້ເລິກເຊິ່ງແລະມີຄວາມໝາຍ ເໝາະແກ່ການນຳມາສຶກສາຮຽນຮູ້. ຕໍ່ໄປນີ້ແມ່ນຄວາມໝາຍຕ່າງໆ ທີ່ພວກເຮົາຄວນຮູ້ກ່ຽວກັບຄຳທຳນວາຍໃນຂ້າງເທິງນີ້:

## 2. ຄວາມໝາຍຕ່າງໆຂອງຄຳທຳນວາຍ.

### ກ. ພະພຸດທະເຈົ້າກ່າວເຖິງຄວາມວຸ້ນວາຍຂອງໂລກ :

"ສອງພັນຫ້າໂລກາຈິໄຫວຫວັ່ນ"

ຄຳທຳນວາຍຕອນນີ້ ອົງພະພຸດທະເຈົ້າໄດ້ເຕືອນວ່າໃນຊ່ວງໄລຍະປີສອງພັນຫ້າ ໂລກາຈະໄຫວຫວັ່ນ ຊຶ່ງໝາຍເຖິງຄວາມວຸ້ນວາຍຈະເກີດມີຂຶ້ນໃນໂລກ ແລະເຫດການພາຍໃນໂລກນີ້ກໍກຳລັງເປັນເຊັ່ນນັ້ນແທ້. ອົງພຣະເຢຊູຄຣິດຍິ່ງໄດ້ກ່າວໄວ້ຢ່າງລະອຽດໄປກວ່ານັ້ນອີກກ່ຽວກັບເລື່ອງນີ້ ຊຶ່ງປາກົດຢູ່ໃນ ພຣະທຳ ມັດທາຍ ບົດທີ 24 ໜ້າທີ 84-87. ພຣະອົງໄດ້ຊົງກ່າວວ່າ ຄວາມວຸ້ນວາຍນີ້ຄືໝາຍສຳຄັນແຫ່ງການສິ້ນສຸດຂອງໂລກນີ້ ພຣະອົງໄດ້ຊົງກ່າວວ່າ ເມື່ອໂລກນີ້ໃກ້ຈະເຖິງຍຸກອາວະສານ ພຣະເຈົ້າປອມຈະເກີດຂຶ້ນ ເພື່ອຫຼອກລວງມະນຸດໃຫ້ຫຼົງທາງຈາກພຣະເຈົ້າແທ້, ເສິກສົງຄາມພ້ອມທັງຂ່າວເລົ່າລືເຖິງເລື່ອງການເສິກສົງຄາມນັ້ນຈະເກີດຂຶ້ນແລະໂດ່ງດັງໄປທົ່ວສາລະທິດ, ແຜ່ນດິນກໍຈະຫວັ່ນໄຫວ, ພູເຂົາໄຟຈະລະເບີດ, ສົງຄາມຮ້ອນ, ສົງຄາມເຢັນ, ການອະທຳ, ການຂົ່ມເຫງ, ການຂ້າຟັນລັນແທງ, ການຫັກຫຼັງ, ການກຽດຊັງຊຶ່ງກັນແລະກັນຕະຫຼອດທັງໝໍທຳນວາຍຂີ້ໂລບກໍຈະເກີດມີຂຶ້ນ.ປະຈຸບັນເບິ່ງເໝືອນວ່າເຫດການດັ່ງກ່າວນີ້ກຳລັງຄຸກຄາມຢູ່ໃນໂລກຂອງເຮົາຢ່າງໜ້າຢ້ານກົວ, ຫຼາຍຢ່າງກໍໄດ້ເກີດຂຶ້ນແລ້ວ ແລະອີກຫຼາຍຢ່າງກໍກຳລັງເກີດຕາມມາຢ່າງບໍ່ຢຸດຢັ້ງ ໂລກຈະເປັນເຊັ່ນນີ້ໄປຈົນກວ່າຈະເຖິງວັນສຸດທ້າຍແຫ່ງໂລກນີ້. ພະພຸດທະເຈົ້າ ໄດ້ທຳນວາຍເອົາໄວ້ວ່າ ເມື່ອຄົບຫ້າພັນປີ(5000)ປີຈະບໍ່ມີຜູ້ບັນລຸສຸດາບັນ



# ບົດທີ 9

# ຄຳທຳນວາຍຈາກລຳພື້ນເມືອງ ກ່ຽວກັບຜູ້ທີ່ຈະມາໂຜດໂລກພາຍຫນ້າ

"ການທີ່ເຮົາກິນເຂົ້າ ຜູ້ໃດກິນຜູ້ນັ້ນອີ່ມ
ບໍ່ຫ່ອນໄປອີ່ມທ້ອງເຂົາພຸ້ນຜູ້ບໍ່ກິນ"
"ເຊັ່ນດຽວກັນກັບການທີ່ເຮົາຈະພົ້ນຈາກບາບກຳໃຫຍ່ອາເວຈີ
ບໍ່ຫ່ອນມີໃຜຕາງເຊື່ອແທນກັນໄດ້"

## 1. ຄຳທຳນວາຍຈາກລຳພື້ນເມືອງ.

ໃນລຳພື້ນເມືອງໄດ້ກ່າວເຖິງຄຳກ່າວຂອງອົງສຳມາສຳພຸດທະເຈົ້າວ່າ ຖ້າຫາກສາສະໜາພຸດ ເຊື່ອມລົງເມື່ອໃດ ຈະມີພຣະເຈົ້າອົງໜຶ່ງລົງມາໂຜດ ຄືພຣະສີອະຣິຍະເມດໄຕຣ ພຣະອົງນັ້ນຈະເກີດຢູ່ກັບຄົນທຸກຍາກໃນເຂດບ້ານນອກ ແຕ່ທ່ານຈະມີລິດເດດອຳນາດຍິ່ງໃຫຍ່ທ່ານຜູ້ນີ້ຈະສະແດງຕົວເປັນຄົນມີບາດແຜ ຫຼືສິ່ງທີ່ເຮົາເບິ່ງບໍ່ໄດ້. ຖ້າພຣະອົງລົງມາໃກ້ ຄັນພວກເຮົາຄົນໜຶ່ງຄົນໃດຫາກຖິ້ມນ້ຳລາຍຄາຍຂີ້ມູກ ຜູ້ນັ້ນຈະໄດ້ຮັບໂທດ ແຕ່ຖ້າຜູ້ໃດຫາກຕ້ອນຮັບພຣະອົງ ກໍຈະບໍ່ຕົກໃນນະຮົກ. ຄຳທຳນວາຍທັງໝົດນີ້ ພວກເຮົາໄດ້ພົບວ່າມັນໄດ້ມີການພົວພັນຢູ່ໃນຊີວິດຂອງອົງພຣະເຢຊູທັງນັ້ນ.

<u>ຫມາຍເຫດ</u>:

ພະທຳພະໄຕຣປີດົກນີ້ ໄດ້ຮັບອະນຸຍາດຄັດອອກຈາກ ວັດພະສິງຫ໌ ຈັງຫວັດ ຊຽງໃໝ. ຜູ້ອະນຸຍາດ ພະສຣີຣິວິສຸດທິວົງສ໌ ກຸງເທບ. ຮັບຮອງວ່າຖືກຕ້ອງກັບຕົ້ນສະບັບໃນໜັງສືຂອງກຳນັນຜູ້ໃຫຍ່ບ້ານ ປ.ທ. 23 ເຫຼັ້ມທີ 29 ໄດ້ຄັດອອກໃຫ້ໃນວັນສຳຫຼວດ ທີ 12 ຕຸລາ 2497.





ໄຟມະໄລກັບຈະໄໝ້ໂລກ. ພຣະເມຊີອາຫຼືພຣະເຢຊູຄຣິດໄດ້ກ່າວໄວ້ພາຍຫຼັງພະພຸດທະເຈົ້າອີກວ່າວັນເວລານັ້ນບໍ່ມີໃຜຮູ້ນອກຈາກພຣະເຈົ້າ ແຕ່ຄວາມວຸ້ນວາຍແລະການສິ້ນສຸດແຫ່ງໂລກນີ້ຈະຕ້ອງເກີດຂຶ້ນຢ່າງແນ່ນອນ ໃນວັນສຸດທ້າຍພຣະເຈົ້າຈະທຳລາຍໂລກນີ້ໃຫ້ສະຫຼາຍໄປດ້ວຍໄຟ ຕາມດັ່ງທີ່ເຮົາໄດ້ພົບໃນພຣະຄຳພີ ພຣະນິມິດ 20:9 ໜ້າ 742 ຂອງຄຣິສຕຽນນັ້ນ. ໃນເມື່ອທຸກຢ່າງຈະຕ້ອງເກີດຊັ່ນນີ້ ພວກເຮົາຄວນຈະຕຽມຕົວ ແລະຄວນຈະດຳລົງຊີວິດຢ່າງໃດຈຶ່ງຈະເໝາະສົມ, ຈຶ່ງຈະມີຄວາມຫວັງແລະຈຶ່ງຈະລອດພົ້ນໄດ້? ນີ້ເປັນຄຳຖາມທີ່ເຮົາທຸກຄົນຄວນຈະຊອກຫາຄຳຕອບໃຫ້ກັບຕົນເອງກ່ອນທີ່ມັນຈະສວາຍເກີນໄປ.

ຂ. <u>ກ່າວເຖິງພຣະເຈົ້າຕຣີເອກະນຸພາບ</u> :

"ໂລກຊິຈ້ອນເຂົ້າສາມຣົ່ມໂພສີ"

ຄຳວ່າສາມຣົ່ມໂພສີນີ້ ກໍໄດ້ມີການຕີຄວາມໝາຍກັນໄປຄົນລະແບບ. ຜູ້ມັກການເມືອງກໍແປໃສ່ການເມືອງ, ຜູ້ທີ່ເຊື່ອພຸດກໍແປໃສ່ພຸດ ຫຼືຜູ້ທີ່ເຂົ້າໃຈໃນອັນໃດກໍຈະແປໃສ່ອັນນັ້ນດັ່ງຕໍ່ໄປນີ້:

1. <u>ແປໄປຕາມພຸດທະສາສະໜາ</u>: ສາມຣົ່ມໂພສີນີ້ ກໍແມ່ນເລັງເຖິງພະພຸດ, ພະທຳແລະພະສົງນັ້ນເອງ.
2. <u>ແປໄປຕາມຄວາມເປັນຈິງ</u>: ອັນໝາຍເຖິງຕົ້ນໂພສາມຕົ້ນ ຖ້າພະອົງເລັງເຖິງຕົ້ນໂພແທ້ ມະນຸດຫຼາຍພັນລ້ານກໍຄົງພິນາດເພາະຈະເຂົ້າໄປບໍ່ໄດ້ໝົດ.

3. ແປໃສ່ພຣະເຈົ້າຕຣີເອກະນຸພາບ:

ຕາມຄວາມເຂົ້າໃຈຂອງຂ້າພະເຈົ້າແລ້ວ ແມ່ນເຊື່ອວ່າ ພະອົງເລັງເຖິງພຣະເຈົ້າຕຣີເອກະນຸພາບ ອັນໄດ້ແກ່ພຣະບິດາ, ພຣະບຸດ ແລະພຣະວິນຍານບໍລິສຸດ ຄື: ໃນທີ່ສຸດ ມະນຸດກໍຈະຈ້ອນເຂົ້າພາຍໃຕ້ສາມຣົ່ມນີ້. ຊຶ່ງພະພຸດທະເຈົ້າບອກໃຫ້ມະນຸດພາກັນລໍຄອຍວ່າ ຈະມາໂຜດໂລກພາຍໜ້າ. ພາຍໃຕ້ຣົ່ມພຣະຄຸນຂອງພຣະເຈົ້າຕຣີເອກະນຸພາບນີ້ ມະນຸດເຮົາທັງໂລກ ສາມາດເຂົ້າໄປໄດ້ໂດຍບໍ່ມີກຳນົດຫຼືເຂດຈຳກັດຈະເຊື່ອຫຼືເຂົ້າໄປເທົ່າໃດກໍໄດ້.

ຄ. ກ່າວເຖິງພຣະເຈົ້າ :

"ໃຜບຸນມີຊິເຫັນໜ້າພຣະເຈົ້າ"

ຄຳທຳນວາຍຕອນນີ້ ໄດ້ຊີ້ສະແດງໃຫ້ເຮົາເຫັນຢ່າງເດັ່ນຊັດວ່າ ພະພຸດຫຼືສິທັດຖະນັ້ນ ບໍ່ໄດ້ເປັນພຣະເຈົ້າ ແລະພະອົງກໍບໍ່ໄດ້ປະຕິເສດພຣະເຈົ້າ. ຖ້າພະອົງຊົງເປັນພຣະເຈົ້າພະອົງກໍຄົງຈະບອກວ່າຈະເຫັນໜ້າເຮົາ ແຕ່ໃນທີ່ນີ້ ພະອົງກັບບອກວ່າຊິເຫັນໜ້າພຣະເຈົ້າ ຊຶ່ງກ່າວເຖິງຜູ້ທີ່ຈະມາຫຼັງຈາກພະອົງ ແລະຜູ້ທີ່ມາຫຼັງຈາກພະອົງນັ້ນກໍແມ່ນອົງພຣະເຢຊູຄຣິດຫຼືພຣະເມຊີອານັ້ນເອງ. ພຣະອົງໄດ້ສະເດັດມາ 543 ປີຫຼັງຈາກທີ່ພະພຸດໄດ້ສະຫວັນນະຄົດໄປແລ້ວຊຶ່ງກົງກັນກັບທີ່ພະພຸດທະອົງໄດ້ຊົງກ່າວເອົາໄວ້ວ່າ ສາສະໜາຂອງພະອົງຈະໝົດກັບໄປ.

ງ. ກ່າວເຖິງຄົນທີ່ມີບຸນ :

"ໃຜບຸນມີຊິເຫັນໜ້າພຣະເຈົ້າ"

ຄົນມີບຸນ ຄືຄົນປະເພດໃດ? ຫຼາຍຄົນກໍຄົງຈະຕີຄວາມໝາຍໄປໃນລັກສະນະທີ່ແຕກຕ່າງກັນ. ແຕ່ສຳລັບຂ້າພະເຈົ້າ ຄົນມີບຸນນັ້ນກໍຄື





3. ໃຫ້ຄະລຳໃຫ້ໄດ້ ຖ້າບໍ່ດັ່ງນັ້ນມັນຈະຫຼຸ້ຍ ຄືບໍ່ສັກສິດ. ຄວາມຈິງແລ້ວນີ້ຄືຄຳກ່າວທີ່ບອກວ່າ ຂອງຮັກສານັ້ນມັນບໍ່ດີ ເພາະຖ້າມັນຫາກດີແທ້ກໍຈະບໍ່ມີການຫຼຸ້ຍຫຼືໝົດຄວາມສັກສິດຢ່າງແນ່ນອນ. ເມື່ອບໍ່ນານມານີ້ ຂ້າພະເຈົ້າໄດ້ພົບກັບທ່ານອະດີດນາຍພັນທະຫານຄົນໜຶ່ງຊຶ່ງມີຄວາມເຊື່ອແລະສັດທາໃນຂອງຮັກສາເຫຼົ່ານີ້ ຂ້າພະເຈົ້າຮູ້ວ່າເພິ່ນມີຄວາມເຊື່ອແລະສັດທາໃນສິ່ງເຫຼົ່ານີ້ ເພາະວ່າໄດ້ເຊີນເພິ່ນໄປໂບດ ເພິ່ນກັບຕອບວ່າເພິ່ນມີຂອງຮັກສາແລະຖ້າໄປໂບດແລ້ວຢ້ານວ່າມັນຈະຫຼຸ້ຍພາຍຫຼັງທີ່ສົນທະນາກັນດົນສົມຄວນແລ້ວ ກ່ອນຈາກໄປຂ້າພະເຈົ້າກໍໄດ້ຝາກຂໍ້ຄິດຂໍ້ໜຶ່ງໄວ້ກັບທ່ານວ່າ ທ່ານນາຍພັນ ອັນຄຳວ່າຂອງດີຫຼືຂອງສັກສິດນັ້ນຈະຕ້ອງຕົກນ້ຳບໍ່ໄຫຼຕົກໄຟບໍ່ໄໝ້ ຂອງດີຈະບໍ່ມີຄຳວ່າຫຼຸ້ຍຫຼືຂາດຄວາມສັກສິດ ຖ້າຂອງສິ່ງນັ້ນຫາກຫຼຸ້ຍຫຼືຂາດຄວາມສັກສິດແລ້ວກໍສະແດງວ່າມັນບໍ່ດີນັ້ນເອງ ຫຼັງຈາກນັ້ນຂ້າພະເຈົ້າກໍໄດ້ຈາກທ່ານໄປ

ກົງກັນຂ້າມໃນພຣະທຳຄຳພີຂອງຄຣິສຕຽນ ເຮົາຈະຊອກຫາຄຳວ່າການເສື່ອມໂຊມຂອງສາສະໜາຫຼືຄຳສັ່ງສອນນີ້ບໍ່ພົບແລະພຣະທຳຄຳສອນຂອງພຣະອົງນັ້ນຈະຢັ້ງຢືນຕະຫຼອດໄປບໍ່ມີວັນທີ່ຈະເສື່ອມສູນໄປ ອົງພຣະເຢຊູໄດ້ຊົງສອນເອົາໄວ້ວ່າ ກ່ອນຍຸກສຸດທ້າຍຈະມາເຖິງ ມະນຸດເຮົາຈະເປັນຜູ້ເສື່ອມໂຊມບໍ່ແມ່ນຄຳສັ່ງສອນຂອງພຣະອົງເຊັ່ນ: "ຄວາມຮັກຂອງຄົນສ່ວນຫຼາຍຈະເຢັນລົງ ເພາະຄວາມອະທຳແຜ່ກ້ວາງອອກໄປ" (ມັດທາຍ 24:12) ມະນຸດທຸກຊາດທີ່ເປັນຄຣິສຕຽນຈະຖືກຂົ່ມເຫງ ຈະໄດ້ຮັບການກຽດຊັງ ຈະເກີດການທັກຫຼັງ ຈະຫຼອກລວງຊຶ່ງກັນແລະກັນ ຫຼາຍຄົນຈະສະດຸດໃຈແລະປະຖິ້ມຄວາມເຊື່ອໄປ (ມັດທາຍ 24:9-11) ນີ້ຄືຄວາມເສື່ອມໂຊມທີ່ກ່າວເຖິງໃນພຣະທຳຄຳພີ ເປັນການເສື່ອມໂຊມຂອງມະນຸດບໍ່ແມ່ນການເສື່ອມໂຊມຂອງຄຳສອນຫຼືສາສະໜາ.

ທີ່ຈະຕໍ່ລອງກັບຂ້າພະເຈົ້າອີກເລີຍ ຫຼັງຈາກນັ້ນຂ້າພະເຈົ້າກໍໜີໄປ. ມະນຸດເຮົາຫຼວງຫຼາຍໃນສະໄໝນີ້ກຳລັງພາກັນເຮັດຜິດຕາມດັ່ງທີ່ພະພຸດທະອົງໄດ້ທຳນວາຍເອົາໄວ້ວ່າ ໃນຍຸກສຸດທ້າຍນີ້ພຸດທະບໍລິສັດທັງສີ່ຈະຂາຍເຮົາກິນ ແລະໃນປະຈຸບັນກໍກຳລັງເປັນເຊັ່ນນັ້ນແທ້.

## 3. ເຄື່ອງຄ້ຳຂອງຄົງນັ້ນບໍ່ໄດ້ຄົງຢູ່ທີ່ຕົວເຄື່ອງແຕ່ຄົງຢູ່ທີ່ຄວາມເວົ້າຂອງຜູ້ຂາຍ.

ນັກຫຼິ້ນເຄື່ອງຄົງຂອງຂັງທັງຫຼາຍກໍຄົງຈະບໍ່ພໍໃຈໃນການທີ່ຂ້າພະເຈົ້າເປີດເຜີຍ ຫຼືກ່າວເຖິງເລື່ອງນີ້ ແຕ່ຂ້າພະເຈົ້າກໍຂໍກ່າວໄວ້ເພື່ອບາງທີມັນອາດຈະຊ່ອຍທ່ານຜູ້ທີ່ຍັງຫຼິ້ນຢູ່ໃຫ້ເກີດຄວາມຕື່ນຕົວໄດ້ ແລະທີ່ສຳຄັນໄປກວ່ານັ້ນກໍແມ່ນເພື່ອຕັກເຕືອນຜູ້ຍັງບໍ່ທັນໄດ້ຫຼິ້ນໃຫ້ຮູ້ເອົາໄວ້ລ່ວງໜ້າ ເພື່ອທ່ານຈະບໍ່ໄດ້ຖືກຫຼອກແລະເສຍເງິນເສຍຄຳມາກມາຍໃນການຊື້ຂອງເຫຼົ່ານີ້. ຂອງດີເຫຼົ່ານີ້ຖ້າມັນຫາກດີແທ້ກໍຄົງຈະບໍ່ມີໃຜດອກທີ່ຈະເອົາໄປຂາຍ ແລະອີກຢ່າງໜຶ່ງຍັງເປັນການເຕືອນທ່ານເອົາໄວ້ເພື່ອທ່ານຈະບໍ່ໄດ້ຫຼົງເຊື່ອແລະປະໝາດ ເພາະທ່ານອາດສາມາດພາດທ່າເສຍທີໄປໄດ້. ຄວາມຈິງແລ້ວຄວາມສັກສິດນັ້ນມັນບໍ່ໄດ້ຢູ່ໃນຂອງເຫຼົ່ານັ້ນ ແຕ່ມັນຢູ່ທີ່ຄຳເວົ້າຂອງຜູ້ຂາຍ ຫຼືນາຍຊ່າງຜູ້ປະດິດຂຶ້ນນັ້ນຕ່າງຫາກ (ຖ້າທ່ານຫາກເປັນຄຣິສຕຽນ ເຊີນອ່ານເບິ່ງພຣະທຳ ເອຊາຢາ 44:9-20, ເພງສັນລະເສີນ 115:1-8). ພວກເຂົາໄດ້ກ່າວໄວ້ຢ່າງເຕັມປາກວ່າ ມັນບໍ່ດີແລະບໍ່ມີອຳນາດສັກສິດຫຍັງໝົດ ແຕ່ເຮົາກັບບໍ່ຟັງ ແລະບໍ່ໄດ້ຍິນສຽງນັ້ນເລີຍ ຍ້ອນວ່າເຮົາຢາກໄດ້, ຢາກດີແລະຢາກເປັນຜູ້ທີ່ເດັ່ນກວ່າໝູ່ນັ້ນເອງ ແລະນອກນັ້ນກໍແມ່ນເຄີຍໄດ້ຍິນຜູ້ຄົນກ່າວເຖິງຄວາມດີຂອງສິ່ງນີ້ມາກ່ອນ.ກ່ອນຂາຍພວກເຂົາກໍໄດ້ເຕືອນເອົາໄວ້ກ່ອນວ່າ: 1. ຢ່າລອງ, 2. ຢ່າປະໝາດ ແລະ





ຄົນທີ່: ເບິ່ງເຫັນໃນສິ່ງທີ່ເຫັນໄດ້ຍາກ, ພົບພໍ້ໃນສິ່ງທີ່ພົບພໍ້ໄດ້ຍາກ ເຂົ້າໃຈໃນສິ່ງທີ່ເຂົ້າໃຈໄດ້ຍາກແລະປະຕິບັດຕາມໃນສິ່ງທີ່ປະຕິບັດຕາມໄດ້ຍາກ. ຄົນທີ່ມີບຸນ ຖ້າຈະວ່າແລ້ວກໍຄືຄົນທີ່ມີວາສະໜາສູງສິ່ງນັ້ນເອງຈຶ່ງສາມາດເບິ່ງເຫັນ, ພົບພໍ້, ເຂົ້າໃຈ ແລະປະຕິບັດຕາມສິ່ງທີ່ຍາກນັ້ນໄດ້ ຄຳວ່າ "ບຸນຫຼາຍ" ທີ່ເຮົາໄດ້ພົບຢູ່ໃນຄຳທຳນວາຍຂອງພະພຸດທະເຈົ້ານີ້ກໍແມ່ນເລັງເຖິງຄົນປະເພດນີ້. ຄົນໃດທີ່ສາມາດສອດສ່ອງເບິ່ງເຫັນ, ສາມາດເຂົ້າໃຈແລະສາມາດຕີຄວາມໝາຍໃນຄຳສອນຂອງພະອົງໄດ້ ຄົນນັ້ນແຫຼະ ຄືຄົນທີ່ມີ ບຸນຫຼາຍ. ພະພຸດທະອົງໄດ້ກ່າວໄວ້ຕອນໜຶ່ງວ່າ "ໃຜເຫັນທຳຜູ້ນັ້ນເຫັນພະຕະຖາຄົດ" ໃຜກໍຕາມທີ່ໄດ້ພົບພຣະເຈົ້າ ເຊື່ອໃນພຣະເຈົ້າ ຊຶ່ງເຮົາເອີ້ນອີກຊື່ໜຶ່ງວ່າ "ພຣະທຳ" ເທົ່ານັ້ນຈຶ່ງຈະນັບວ່າໄດ້ເຫັນ ແລະໄດ້ເຂົ້າໃຈໃນຄຳສອນຂອງພະພຸດທະອົງ. ຄຳວ່າ "ທຳ" ໃນທີ່ນີ້ກໍໝາຍເຖິງ "ພຣະເຈົ້າ" ພຣະເຢຊູຄຣິດນັ້ນເອງຊຶ່ງທ່ານໂຢຮັນ ໄດ້ອະທິບາຍໄວ້ຢ່າງຄັກແນ່ໃນ ພຣະທຳ (ໂຢຮັນ 1:1-3) ນັ້ນ. ທ່ານໄດ້ກ່າວວ່າ "ເມື່ອຕົ້ນເດີມນັ້ນ ພຣະທຳ ຊົງເປັນຢູ່ແລ້ວ ພຣະທຳ ນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະທຳ ນັ້ນແຫຼະຊົງເປັນພຣະເຈົ້າ..." ພຣະທຳ ໄດ້ຊົງບັງເກີດເປັນມະນຸດແລະຊົງອາໄສຢູ່ທ່າມກາງເຮົາທັງຫຼາຍ ບໍລິບູນດ້ວຍພຣະຄຸນແລະຄວາມຈິງ. (ໂຢຮັນ 1:14) "ບໍ່ມີໃຜໄດ້ເຫັນພຣະເຈົ້າຈັກເທື່ອ ແຕ່ພຣະບຸດອົງດຽວຜູ້ຊົງເປັນພຣະເຈົ້າຊຶ່ງຊົງສະຖິດຢູ່ໃນພຣະຊວງຂອງພຣະບິດາ ພຣະອົງນັ້ນແຫຼະຊົງສະແດງໃຫ້ຮູ້" (ໂຢຮັນ 1:18). ພຣະເຢຊູຜູ້ນີ້ແຫຼະຄືຜູ້ທີ່ພໍ່ແມ່ປູ່ຍາຕາຍາຍຂອງພວກເຮົາໄດ້ພາກັນລໍຄອຍຕາມຕຳນານແລະຕາມຄຳທຳນວາຍຂອງພະພຸດທະອົງ.

ພີ່ນ້ອງຮູ້ບໍ່ວ່າທຸກຄັ້ງທີ່ພໍ່ແມ່ຫຼືປູ່ຍາຕາຍາຍຂອງເຮົາເພິ່ນໄປເພນໄປຈັງຫັນ ເພິ່ນຈະຖືແກ້ວນ້ຳຢາດໄປພ້ອມ ເມື່ອພະສົງສວດມາ

ເຖິງຕອນຢາດນ້ຳ ເພິ່ນກໍຈະພາກັນຈົກແກ້ວນ້ຳຢາດນັ້ນອອກມາຢາດ ຍົກມືເບື້ອງໜຶ່ງຂຶ້ນຄຽງຫູ, ມືເບື້ອງທີ່ສອງຢອດນ້ຳຢາດລົງແລ້ວກໍກ່າວນຶກປາຖະໜາໃນໃຈເຖິງສິ່ງທີ່ຕົນຕ້ອງການ. ໜຶ່ງໃນຄຳເວົ້າທີ່ເພິ່ນຈົ່ມອອກມານັ້ນກໍຄື ຂໍໃຫ້ຜົນບຸນກຸສົນທີ່ເພິ່ນເຮັດເພິ່ນສ້າງນັ້ນໄດ້ຊ່ວຍຍູ້ຊູຂຶ້ນສູ່ສະຫວັນ ແລະຂໍໃຫ້ມີບຸນຫຼາຍພຽງພໍຈົນໄດ້ເກີດໃນສະໄໝຂອງພຣະສີອານຫຼືໃຫ້ໄດ້ເຫັນໜ້າພຣະສີອານ. ອົງພຣະເຢຊູຄຣິດໄດ້ກ່າວກັບຍິງຊາວສະມາເຣຍໃນ (ໂຢຮັນ 4:26) ວ່າ "ເຮົາຜູ້ທີ່ເວົ້າກັບເຈົ້າຢູ່ນີ້ແຫຼະຄືທ່ານຜູ້ນັ້ນ" ແລະພຣະອົງຍັງກ່າວກັບ ຟີລິບ ອີກວ່າ "ຖ້າທ່ານທັງຫຼາຍຮູ້ຈັກເຮົາແລ້ວ ທ່ານກໍຄົງຮູ້ຈັກພຣະບິດາຂອງເຮົາເໝືອນກັນ ຕັ້ງແຕ່ນີ້ໄປທ່ານທັງຫຼາຍກໍຮູ້ຈັກພຣະອົງ ແລະໄດ້ເຫັນພຣະອົງ (ພຣະເຈົ້າ)" (ໂຢຮັນ 14:7). ພຣະເຢຊູຜູ້ນີ້ແຫຼະຄືພຣະເມສີອານຫຼືພຣະເມຊີອາ ທີ່ພະພຸດທະເຈົ້າໄດ້ທຳນວາຍເອົາໄວ້ວ່າຈະມາໂຜດໂລກພາຍໜ້າ.

ຈ. <u>ກ່າວເຖິງຜູ້ທີ່ຈະໄດ້ຮັບຄວາມລອດ ແລະຜູ້ທີ່ບໍ່ໄດ້ຮັບ</u> :

"ຂີ້ມອດຄ້າງ ຂີ້ຊ້າງລອດ"

ຂີ້ມອດໃນທີ່ນີ້ກໍແມ່ນເລັງເຖິງສາມັນຊົນທຳມະດາຫຼືຄົນທີ່ທຸກຍາກອານາຖາ ຫາເຊົ້າກິນຄ່ຳ ດັ່ງເຊັ່ນໄທເຮົາເຈົ້າຂ້ອຍ ທີ່ບໍ່ຄ່ອຍຈະລ້ຳລວຍ, ບໍ່ມີຖານະດີ ບໍ່ມີຕຳແໜ່ງສູງ ທີ່ຈະຕ້ອງຄອຍລະມັດລະວັງຫຼືເປັນຫ່ວງນັ້ນເອງ. ຄົນປະເພດນີ້ສ່ວນຫຼາຍແລ້ວມັກຈະມີໂອກາດເຂົ້າມາຫາພຣະເຈົ້າໄດ້ງ່າຍກວ່າພວກຂີ້ຊ້າງ ຄືພວກທີ່ມີຖານະດີ ມີຕຳແໜ່ງສູງ ມີຍົດຖາບັນດາສັກແລະຄວາມລ້ຳລວຍ. ຄົນພວກນີ້ກ່ອມຕົວຍາກ ເພາະຢ້ານເສຍກຽດເສຍສັກສີ ຫຼືເສຍປຽບໃນສັງຄົມ ດັ່ງນັ້ນຈຶ່ງມາຫາພຣະເຈົ້າຍາກ. ຕົວຢ່າງໃນພຣະຄຳພີ:





ຂ້າພະເຈົ້າຈື່ໄດ້ວ່າເມື່ອປີ 1990 ຂ້າພະເຈົ້າໄດ້ໄປທ່ອງທ່ຽວທີ່ປະເທດໄທ ພີ່ນ້ອງລາວຄົນໜຶ່ງໄດ້ຝາກເງິນໄປຊື້ປຶ້ມທີ່ກ່ຽວກັບພຸດທະສາສະໜາເພື່ອມາສຶກສາຮຽນຮູ້ ຂ້າພະເຈົ້າກໍຂໍຮັບວ່າຈະໄປຊື້ໃຫ້. ທີ່ປະເທດໄທ ບ່ອນຂາຍປຶ້ມປະເພດນີ້ທີ່ໃຫຍ່ທີ່ສຸດກໍແມ່ນມີແຕ່ບ່ອນດຽວ ນັ້ນຄືຂ້າງວັດທາດໜ້າວັດພະແກ້ວຊຶ່ງຕິດກັບສະໜາມຫຼວງເກົ່າ. ພໍຂ້າພະເຈົ້າໄປເຖິງກໍປາກົດວ່າ ສະຖານທີ່ແຫ່ງນີ້ບໍ່ໄດ້ຂາຍປຶ້ມແຕ່ພຽງຢ່າງດຽວ ແຕ່ຍັງເປັນສະໜາມຂາຍພະເຄື່ອງນ້ອຍໃຫຍ່ເກົ່າໃໝ່ທຸກປະເພດ. ພາຍຫຼັງທີ່ຂ້າພະເຈົ້າຊື້ປຶ້ມໄດ້ແລ້ວກໍເລີຍຍ່າງເລາະເບິ່ງວ່າ ແມ່ນພວກເຂົາຂາຍຫຍັງກັນແທ້. ປາກົດວ່າເປັນສະໜາມຂາຍພະດ້ວຍ ແລະພໍຂ້າພະເຈົ້າຍ່າງມາຮອດບ່ອນໜຶ່ງຊຶ່ງມີແມ່ຄ້າຄົນໜຶ່ງປະກາດຂາຍພະຂອງຕົນຢູ່ ຊຶ່ງມີໃຫ້ເລືອກຢ່າງມາກມາຍ. ລາວໄດ້ຍົກພະອົງໜຶ່ງຂຶ້ນແລ້ວກໍຍື່ນມາທາງຂ້າພະເຈົ້າ ພ້ອມກັບປະກາດວ່າ "ຫຼວງພໍ່ອົງນີ້ດີຢ່າງນັ້ນແລະກໍດີຢ່າງນີ້" ຂ້າພະເຈົ້າກໍເລີຍຖາມໄປເໝືອນກັບຈະຊື້ພະຂອງລາວວ່າ "ນີ້ຄຸນ, ຫຼວງພໍ່ອົງນີ້ດີຢ່າງໄຣບ້າງ?" ລາວກໍບອກວ່າ "ໂອ້ໂຫ! ດີຫຼາຍຢ່າງຄຸນ, ໄຄຣເປັນເຈົ້າຂອງນະ ນຶກອະໄຣກໍຈະໄດ້ທັງນັ້ນ" ລາວກໍເວົ້າອອກມາດ້ວຍຄວາມຢາກຂາຍ. ຂ້າພະເຈົ້າກໍຍິ່ງແກ້ງຖາມຕໍ່ໄປວ່າ "ຈິງຫຣືປ່າວຄຣັບ?" ລາວກໍຍິ່ງຕອບດ້ວຍນ້ຳສຽງທີ່ໜັກແໜ້ນວ່າ "ຈິງຊິຄຸນ, ໄມ່ເຊື່ອກໍລອງດູ" ຂ້າພະເຈົ້າກໍເລີຍຂໍຈັບເບິ່ງພ້ອມກັບຄຸເຂົ່າລົງ ແລ້ວຍົກມືຂຶ້ນວ່າ "ສາທຸ ຖ້າຫຼວງພໍ່ສັກສິດຈິງໆລະກໍ ຂໍໃຫ້ຜົມໄດ້ຫຼວງພໍ່ໄປຟຣີເກີດ" ພໍແມ່ຄ້າໄດ້ຍິນກໍເລີຍກ່າວຂຶ້ນວ່າ "ໃຫ້ຄຸນໄມ່ໄດ້ນະຄະ ເອົາຟຣີໄມ່ໄດ້ຕ້ອງສີ່ຮ້ອຍບາດ". ຂ້າພະເຈົ້າກໍເລີຍຢືນຂຶ້ນແລ້ວສົ່ງຄືນພ້ອມທັງບອກລາວວ່າ "ຖ້າໄມ່ໄດ້ກໍສະແດງວ່າຫຼວງພໍ່ອົງນີ້ໄມ່ສັກສິດຢ່າງທີ່ພູດນະຊິ" ຂ້າພະເຈົ້າກໍແຫ່ງເຍີ້ຍໄປອີກວ່າ "ຂອງຈິງຫຣືປ່າວ?" ລາວກໍຍັງຕອບວ່າ "ຈິງ" ບໍ່ຍອມ

4. ລັງຂະອັນຕະທານ: ຄືຄວາມເຊື່ອມສູນຂອງໂສມມະນາເພດ

5. ອັນຕະທານ: ຄືຄວາມເຊື່ອມສູນຂອງພະບໍຣົມມະທາດ, ພະພຸດທະເຈົ້າຊີ້ໃຫ້ເຫັນວ່າ ກຳທີ່ມະນຸດໄດ້ຮັບນັ້ນມີຢູ່ 8 ຂຸມ ສຳລັບຜູ້ທີ່ຮັກສາບັນຍັດກຳບົດ 10 ບໍ່ໄດ້ຈະຕ້ອງຕົກນະຮົກ... ຊຶ່ງນະຮົກທັງ 8 ຂຸມນັ້ນມີຊື່ດັ່ງຕໍ່ລົງໄປນີ້:

ຂຸມທີ 1 ຊື່ວ່າ ສັດຊະວະນະຮົກທຸກຄະ ພໍຮູ້ວ່າຮ້ອນ
ຂຸມທີ 2 ຊື່ວ່າ ກາບນະຮົກທຸກຄະ ຮ້ອນຫຼາຍ
ຂຸມທີ 3 ຊື່ວ່າ ສັດຕະຂະຕະນະຮົກທຸກຄະ ຮ້ອນຫຼາຍຂຶ້ນໄປອີກ
ຂຸມທີ 4 ຊື່ວ່າ ໂສສຸວະນະຮົກທຸກຄະ ຮ້ອນດ້ວຍນໍ້າ
ຂຸມທີ 5 ຊື່ວ່າ ມະຫາໂສສຸວະນະຮົກທຸກຄະ ຮ້ອນດ້ວຍໄຟ
ຂຸມທີ 6 ຊື່ວ່າ ດາບນະຮົກທຸກຄະ ຮ້ອນດ້ວຍໄຟຈັດຂຶ້ນ
ຂຸມທີ 7 ຊື່ວ່າ ມະຫາດາບນະຮົກທຸກຄະ ຮ້ອນດ້ວຍໄຟແຮງຂຶ້ນ
ຂຸມທີ 8 ຊື່ວ່າ ອະເວຈີນະຮົກທຸກຄະ ເຢັນເກີນໄປ

## 2. ພຸດທະບໍລິສັດທັງສີ່ຈະຂາຍເຮົາກິນ:

ພະພຸດທະອົງໄດ້ຊົງຕັດກ່າວໄວ້ອີກຕອນໜຶ່ງວ່າ "ໃນຍຸກ ແຫ່ງການເຊື່ອມສູນຫຼືຍຸກສຸດທ້າຍໃນພະສາສະໜາຂອງພະອົງນີ້ ພຸດທະບໍລິສັດທັງສີ່ຈະຂາຍພະອົງກິນ" ເບິ່ງເໝືອນວ່າ ເຫດການເຫຼົ່ານີ້ໄດ້ເກີດຂຶ້ນມານານແລ້ວ ແລະກຳລັງຮ້າຍແຮງຂຶ້ນທີ່ສຸດໃນຍຸກນີ້. ທີ່ປະເທດໄທຕາມວັດແລະຕາມຫ້ອງສະໜາມຫຼວງເກົ່າຕິດກັບວັດພະແກ້ວ ໄດ້ກາຍເປັນສະໜາມຂາຍພະຢ່າງເປີດແປນ. ຍາພໍ່ຫຼືຫຼວງພໍ່ ກໍເລີ່ມຫຼໍ່ຮູບຕົນເອງຂາຍ. ພຸດແທ້ກຳລັງຫາຍໄປແລະພຸດທຽມກຳລັງແທນທີ່ ຜູ້ທີ່ສຶກສາທຳແລະສະແຫວງຫາຄວາມຈິງເທົ່ານັ້ນ ຈຶ່ງຈະຮູ້ວ່າເຫດການເຫຼົ່ານີ້ໄດ້ເກີດຂຶ້ນແລະກຳລັງເກີດຂຶ້ນຕາມດັ່ງທີ່ພະພຸດທະອົງໄດ້ທຳນວາຍເອົາໄວ້.





ບໍ່ວ່າຈະເປັນອະດີດຫຼືປະຈຸບັນ ຄົນພວກນີ້ຍັງຄົງມີບັນຫາກັບຢູ່ໃນການເຂົ້າມາຫາພຣະເຈົ້າ. ໃນພຣະຄຳພີມີຕົວຢ່າງ ທີ່ຊີ້ໃຫ້ເຫັນຢ່າງປະກົດແຈ້ງດັ່ງເຊັ່ນ: ເສດຖີໂງ່ໃນພຣະທຳ (ລູກາ 12:16-21), ເສດຖີຂີ້ທີ່ (ລູກາ 16:19-31), ເສດຖີໜຸ່ມ (ລູກາ 18:18-30), ກະສັດອາຄຣີປາແລະບັນດາຂ້າລາຊະການຊັ້ນຜູ້ໃຫຍ່ ໃນພຣະທຳ (ກິດຈະການ 25,26) ຕ່າງຄົນກໍລ້ວນແຕ່ມາຫາພຣະເຈົ້າໄດ້ຍາກ. ທັງໝົດນີ້ກໍຍ້ອນກຽດ, ຍ້ອນຖານະ, ຕຳແໜ່ງ ແລະຄວາມລໍ້າລວຍນັ້ນເອງ. ຜູ້ທີ່ກ້າຫານແລະພ້ອມທີ່ຕັດສິນໃຈຢ່າງເດັດດ່ຽວເທົ່ານັ້ນຈຶ່ງຈະມາຫາພຣະເຈົ້າແລະພົ້ນໄດ້.

## 3. ພຣະເຈົ້າຊົງຮັກຄົນລາວ ແລະຊົງໃຫ້ໂອກາດແກ່ຄົນລາວທັງຫຼາຍ.

ພຣະເຈົ້າຊົງໃຫ້ໂອກາດເຮົາ ວ່າຈະເປັນຂີ້ມອດຫຼືຂີ້ຊ້າງ ພຣະເຈົ້າບໍ່ໄດ້ຊົງໃຫ້ຄວາມລອດພົ້ນບາບນີ້ ຂຶ້ນຢູ່ກັບ ຖານະ, ຕຳແໜ່ງຫຼືວົງຕະກູນ ຫຼືບໍ່ກໍບໍ່ໄດ້ໃຫ້ຂຶ້ນຢູ່ກັບການປັບຕົວໃຫ້ເປັນຄົນດີ, ຢູ່ໃນສິນກິນໃນທຳຈຶ່ງຈະພົ້ນໄດ້ ແຖມຍັງຊື້ເອົາບໍ່ໄດ້ດ້ວຍເງິນຄຳ. ພຣະຄຳພີສອນວ່າ "ດ້ວຍວ່າທ່ານທັງຫຼາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫຼົ່ານີ້ບໍ່ແມ່ນພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້. ຄວາມພົ້ນນັ້ນບໍ່ໄດ້ມີມາຍ້ອນການປະຕິບັດເພື່ອບໍ່ໃຫ້ຄົນໜຶ່ງຄົນໃດອວດໄດ້" (ເອເຟໂຊ 2:8-9). ຄົນທຳມະດາສາມັນ ທັງຊັ້ນຕໍ່າຊັ້ນສູງ ສາມາດທີ່ຈະຮັບຄວາມລອດພົ້ນນີ້ໄດ້ ຂໍພຽງແຕ່ວ່າຕ້ອງການ.

## 4. ເຫດທີ່ຂີ້ຊ້າງລອດ.

ສາຍເຫດທີ່ຄົນພວກຂີ້ຊ້າງລອດເຂົ້າຄຳຂອງພຣະເຈົ້ານັ້ນກໍເພາະຍ້ອນວ່າ ກຽດ, ຖານະ ແລະຄວາມລ້ຳລວຍນັ້ນເອງ. ດັ່ງຕົວຢ່າງທີ່ພວກເຮົາໄດ້ເຫັນມາແລ້ວ. ຄວາມຈິງແລ້ວ ທາງຂອງພຣະເຈົ້າເປັນທາງທີ່ສວນກັນກັບທາງຂອງມະນຸດ ເພາະທາງຂອງພຣະອົງນັ້ນຂຶ້ນຄືທາງລົງແລະລົງຄືທາງຂຶ້ນ "ເຫດສະນັ້ນ ທ່ານທັງຫຼາຍຈົ່ງກ້ອມລົງໃຕ້ພຣະຫັດອັນຊົງລິດຂອງພຣະເຈົ້າ ເພື່ອວ່າພຣະອົງຈະຊົງຍົກພວກທ່ານຂຶ້ນເມື່ອເຖິງເວລາອັນຄວນ" (1ເປໂຕ 5:6). (ມັດທາຍ 23:12) ບອກວ່າ "ຜູ້ທີ່ຍົກຕົວຂຶ້ນ ຜູ້ນັ້ນຈະຖືກກອຍລົງ ຜູ້ໃດກ້ອມຕົວລົງ ຜູ້ນັ້ນຈະຖືກຍົກຂຶ້ນ". ອີກອັນໜຶ່ງນັ້ນກໍໄດ້ແກ່ ເສຍຄືທາງໄດ້ແລະໄດ້ຄືທາງເສຍ "ເພາະວ່າຜູ້ໃດຢາກຊ່ອຍຊີວິດຂອງຕົນໃຫ້ພົ້ນຜູ້ນັ້ນຈະເສຍຊີວິດ ແຕ່ຜູ້ໃດຈະເສຍຊີວິດເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະໄດ້ຊີວິດ" (ມັດທາຍ 16:25). ເມື່ອໄດ້ຍິນໄດ້ຟັງແລ້ວເຊັ່ນນີ້ທ່ານຈະເປັນຂີ້ໃດ? ເປັນຂີ້ມອດ ຫຼືເປັນຂີ້ຊ້າງ?



# ບົດທີ 8

# ຄຳທຳນວາຍເຖິງ
# ຄວາມເຊື່ອມໂຊມຂອງພະສັດຈະທຳ

ຄົນຜູ້ສະຫຼາດຮອບຄອບຍ່ອມຮູ້ອັນຕະລາຍຈະເກີດຂຶ້ນ
ແລ້ວຫຼົບຫຼີກເສຍ ແຕ່ຄົນທຳມະດາສາມັນ
ຈະເດີນເລື້ອຍໄປ ແລ້ວກໍເປັນທຸກພາຍຫຼັງ
(ສຸພາສິດ 22:3)

## 1. ຄວາມເຊື່ອມຂອງພະສັດຈະທຳແລະນະຣົກ.

ພະພຸດທະເຈົ້າ ຊົງສະແດງທຳແກ່ມະຫາກັດສະປະເຖລະ ໂດຍໄດ້ໃຈຄວາມວ່າ "ເບິ່ງເຖີດ ກັດສະປະພະສັດຈະທຳຈະຄ່ອຍເຊື່ອມລົງຕາມລຳດັບໂດຍອາການທີ່ຄົນທັງຫຼາຍບໍ່ຮູ້ສຶກບໍ່ຮູ້ສິ້ນສຸດເຊື່ອມເທື່ອລະເລັກລະນ້ອຍທຸກປີໄປ.

ພຣະຄຳພີພະໄຕປີດົກ ອັນຖະກະຖາອັງຄຸດຕະຣະນິກາຍພາກ 1 ໜ້າ 41 ໄດ້ພັນລະນາຄວາມເຊື່ອມໂຊມໄວ້ 5 ປະການ:

1. ປະຣິຍັດທຳອັນຕຣາທານ: ຄືຄວາມເຊື່ອມສູນພະປະຣິຍັດທຳ
2. ປະຣິຍັດອັນຕະທານ: ຄືຄວາມເຊື່ອມສູນໃນການປະຕິບັດ
3. ປະຕິເວດອັນຕະທານ: ຄືຄວາມເຊື່ອມສູນ ແຫ່ງຄວາມຮອບຮູ້ຫົນທາງແລະຜົນ.

# ບົດທີ 5

# ຄຳທຳນວາຍກ່ຽວກັບອາຍຸສັງຂານຂອງພຸດທະສາສະໜາ

จะมาก่อนหรือมาทีหลังนั้นไม่สำคัญ
แต่ที่สำคัญนั้นอยู่ที่ฐานะและเป้าหมายในการมานั้น
องค์พระสัมมาสัมพุทธเจ้า กับองค์พระเยซูคริสต์
แม่นมีความแตกต่างกันอยู่ในสองอย่างนี้

(ເອົາມາຈາກພຸດທະປະຫວັດປະລິເສດທີ13 ຕົ້ນສະບັບເປັນພາສາໄທ)

<u>ຂໍ້ທີ 1</u>: ໃນພຣະທຳວິໃນປິດາຈຸວອນ ເຫຼັ້ມທີ 7 ໜ້າທີ 330 ພະພຸດທະເຈົ້າກ່າວວ່າ ເບິ່ງເກີດອານົນ ຖ້າຜູ້ຍິງບໍ່ເຂົ້າບວດ ທຳມະວິໃນທີ່ຕະຖາຄົດ ປະກາດໄວ້ ຈະດຳລົງຢູ່ເຖິງ 5000 ປີ ແຕ່ຖ້າຜູ້ຍິງເຂົ້າບວດພະທຳມະວິໃນທີ່ຕະຖາຄົດປະກາດໄວ້ແລ້ວນັ້ນຈະດຳລົງຢູ່ໄດ້ແຕ່ພຽງ 500 ປີເທົ່ານັ້ນ.

<u>ຂໍ້ທີ 2</u>: ຄຳພີພະໄຕປີດົກ ອັດຖະກະຖານິບາດ ອັງຄຸດຕະຣະນິກາຍເຫຼັ້ມທີ 23 ໜ້າ 389 ໄດ້ພັນລະນາຄວາມວ່າ ທີ່ພະນາງມະຫາບໍດີ ໂຄຕະມີທູນຂໍບັນຊາອຸປະສົມບົດຈົນເຖິງໃຫ້ພະນາງອຸປະສົມບົດດ້ວຍຄູທຳ 8ປະ

ການ ແລະໄດ້ຊົງກ່າວອາຍຸສາສະໜາຂອງຕະຖາຄົດກຶກຕ້ອງກັບພະຄຳພີພະໄຕປີດົກທີ່ໄດ້ກ່າວມາແລ້ວຄື 500 ປີ.

ຂໍ້ທີ 3: ຄຳພີສຸບັນຕະປາສະທີກາອັດຖະກະຖາພະໄຕຣປີດົກກະພາບ ເຫຼັ້ມ 3 ໜ້າທີ 449 ພັນລະນາຄວາມວ່າ ທີ່ພະພຸດທະເຈົ້າຊົງກ່າວວ່າພະສັດຈະທຳ (ພຸດທະສາສະໜາ) ຈະຕັ້ງຢູ່ໄດ້ 5000 ປີ ແຕ່ຖ້າຜູ້ຍິງເຂົ້າບວດກໍຈະເຫຼືອ 500 ປີ ເທົ່ານັ້ນ. ທີ່ເຫຼືອ 500 ປີນັ້ນກໍເປັນເພາະວ່າ ມີຜູ້ໜຶ່ງຊື່ ພັນທະສົມ (ຄືພະນາດຂະເສນ) ໄດ້ມີຄວາມສັດທາໃນພະພຸດທະເຈົ້າ ທ່ານຜູ້ນີ້ໄດ້ແຕກສານໃນປະຕິສຳພານຍານ ພະປິເວທະສັດຈະທຳຂອງພະສຳມາສຳພຸດທະເຈົ້າໃຫ້ເຖິງ 5000 ປີ ດ້ວຍຄວາມສັດທາ (ຄວາມເຊື່ອ) ຂອງພະນາດຂະເສນ ໄດ້ລາເພດມາຄອງລາຊະສົມບັດເສຍແລ້ວ ແມ່ນໃຜຈະເປັນຜູ້ຮັບເລື່ອງຄຳສອນຂອງພະສຳມາສຳພຸດທະເຈົ້າ ໃຫ້ເບິ່ງໃນພະທຳມູນປັນຫາຄຳພີຂອມ.

ໝາຍເຫດ:

ມີຢູ່ສອງເລື່ອງທີ່ຂ້າພະເຈົ້າຢາກຈະເພີ່ມເຕີມໃຫ້ເປັນທີ່ເຂົ້າອົກເຂົ້າໃຈແກ່ພີ່ນ້ອງຊາວລາວເຮົາທັງຫຼາຍ, ເລື່ອງທີໜຶ່ງນັ້ນກໍໄດ້ແກ່ກຳນົດເວລາແຫ່ງການສະເດັດມາຍັງໂລກມະນຸດຂອງພຣະເຢຊູຄຣິດ (ພຣະເມຊີອາ) ຫຼືພຣະເຈົ້າ ຜູ້ທີ່ຈະມາໂຜດມະນຸດສະໂລກໃຫ້ລອດພົ້ນຈາກບາບກຳໃນພາຍຂ້າງໜ້າ. ສ່ວນເລື່ອງທີສອງນັ້ນ ກໍໄດ້ແກ່ຄວາມສຳຄັນຂອງການມາກ່ອນຫຼືມາລຸນຂອງສີກັດທະແລະພຣະເຢຊູ.





" ເສັ້ນທາງຂອງຊີວິດກໍໝູນໄປ
ຂ້າງໜ້າສະເໝີສຳລັບຄົນສະຫຼາດ
ເພື່ອລາວຈະຫັນໜີຈາກ
ນະຮົກເບື້ອງລຸ່ມ "

(ສຸພາສິດ 15:24)

ອ້າງຕາມຄວາມປາຖະໜາອັນແທ້ຈິງແລ້ວ ມະນຸດເຮົາທຸກຄົນແມ່ນຢາກໄປຢູ່ໃນຊັ້ນສູງສຸດດ້ວຍກັນທັງນັ້ນ. ແຕ່ການກະທຳໃນແຕ່ລະວັນຂອງມະນຸດເຮົາໃນໂລກນີ້ ແມ່ນລ້ວນແຕ່ຈະນຳເຮົາລົງໄປຂ້າງລຸ່ມລົງໄປເລື້ອຍໆ ເພາະໃນເມື່ອເຮົາຫາກອ້າງຕາມຄຳສອນຂອງພາມນັ້ນ ເມື່ອພວກເຮົາເຮັດອັນໃດໄວ້ ພວກເຮົາກໍຈະຕ້ອງໄດ້ໄປໃຊ້ກຳໃຊ້ເວນໃນສິ່ງນັ້ນຈົນຊົ່ວກັບຊົ່ວກັນ ຊຶ່ງຄວາມໝາຍອັນແທ້ຈິງນັ້ນກໍຄືຕະຫຼອດເປັນນິດນັ້ນເອງ. ເມື່ອເປັນເຊັ່ນນີ້ມະນຸດເຮົາຈະພົ້ນທຸກເຖິງສຸກຫຼືພົ້ນຈາກກຳຊົ່ວທຳຊົ່ວນີ້ກັນໄດ້ຢ່າງໃດ? ເມື່ອອ້າງຕາມ ສາສະໜາພາມແລະພຸດນີ້. ດ້ວຍເຫດນີ້ທັງສອງສາສະໜານີ້ຈຶ່ງມີຄຳທຳນວາຍເອົາໄວ້ເຖິງຜູ້ທີ່ຈະມາໂຜດໂລກໃຫ້ພົ້ນພາຍໜ້າ. ໃນສາສະໜາພາມນີກາຍໄວສະນົບ ໄດ້ມີການທຳນວາຍເອົາໄວ້ວ່າ “ຈະມີບຸລຸດຜິວຂາວ ຮູບຮ່າງງາມ(ບໍລິສຸດ)ທ່ານໜຶ່ງຊຶ່ງມີນາມວ່າ ກັນລະກີ ຊົງພາຊີກິດາບປະຫານຜູ້ໃຈບາບຫຍາບຊ້າ ຄັນແລ້ວກະລີຍຸກກໍສິ້ນສຸດລົງເລີ່ມຍຸກໃໝ່ຕໍ່ໄປ” ພຸດທະສາສະໜາກໍໄດ້ທຳນວາຍເອົາໄວ້ເຊັ່ນກັນວ່າ “ຈົ່ງເຮັດທານສະແຫວງຫາພະອີກອົງໜຶ່ງທີ່ຈະມາພາຍຫຼັງເຮົາຄື: ພຣະເມສີອານ ຜູ້ນັ້ນຈະເປັນສະເພົາຄຳລຳໃຫຍ່ ນຳມະນຸດຂ້າມຈາກວາຕະສົງສານ ແລ້ວຈະໄດ້ພົບກັບພຣະແກ້ວສາມປະການ ຄວາມຈິງນີ້ໄດ້ຄັດລອກອອກມາຈາກ “ (ສາສະໜາປຽບທຽບ ໜ້າທີ 504 ຊຶ່ງຂຽນໂດຍ ສ.ຈ. ສະຖຽນ ພັນທະລັງສີ). ທາງແຫ່ງຄວາມລອດພົ້ນກຳທີ່ກ່າວມານີ້ ສ່ວນຫຼາຍແລ້ວແມ່ນໄດ້ຮັບການເມີນເສີຍມາໂດຍຕະຫຼອດ. ບຸກຄົນທີ່ເຊື່ອໃນສອງສາສະໜານີ້ສ່ວນໃຫຍ່ແລ້ວກໍແມ່ນສົນໃຈນຳແຕ່ພິທີກຳຫຼາຍກວ່າຫົນທາງທີ່ຈະຊ່ອຍຕົນໃຫ້ລອດພົ້ນ ເມື່ອເປັນເຊັ່ນນີ້ພວກເຮົາຈະພົ້ນຈາກບາບກຳນີ້ໄດ້ຢ່າງໃດ?





## 1. ພຣະເມສີອານມາຕາມກຳນົດທີ່ທຳນວາຍໄວ້.

ຄຳທຳນວາຍໃນຂ້າງເທິງນີ້ບອກວ່າອີກ 500 ປີສາສະໜາຂອງພະຕະຖາຄົດຈະໝົດອາຍຸໄຂ. ໃນຂະນະດຽວກັນ ຄືເມື່ອປະມານ 540 ປີ ກົງກັນກັບເວລາທີ່ໄດ້ທຳນວາຍເອົາໄວ້ໃນພະໄຕຣປິດົກນັ້ນພຣະເຈົ້າກໍໄດ້ສົ່ງອົງພຣະເຢຊູຄຣິດ ໃຫ້ສະເດັດລົງມາຮັບຊາດເປັນມະນຸດເພື່ອໄຖ່ບາບໃຫ້ກັບມະນຸດທັງຫຼາຍ. ທ່ານຄິດວ່າ ເຫດການເຊັ່ນນີ້ມັນເປັນເລື່ອງທີ່ເກີດຂຶ້ນໂດຍບັງເອີນຫຼື? ຫຼືວ່າເປັນໂຄງການຂອງພຣະເຈົ້າ? ອ້າງຕາມພຣະຄຣິສຕະທຳຄຳພີຂອງຄຣິສຕຽນແລ້ວ ທີ່ເປັນເຊັ່ນນີ້ກໍເພາະວ່າເປັນໂຄງການ ຫຼືເປັນແຜນການຂອງພຣະເຈົ້າຜູ້ຊົງສ້າງໂລກນີ້ໄດ້ກຳນົດເອົາໄວ້ຕ່າງຫາກ ເພື່ອໃຫ້ຊາວໂລກໄດ້ຮູ້ຈັກວ່າພຣະອົງຄືພຣະເຈົ້າຜູ້ນັ້ນທີ່ຊາວໂລກລໍຄອຍວ່າຈະມາ. ເນື່ອງດ້ວຍເຫດນີ້ພີ່ນ້ອງຊາວລາວເຮົາທີ່ເປັນຊາວພຸດແລະພາມທັງຫຼາຍຈຶ່ງບໍ່ຄວນພາກັນເມີນເສີຍ, ມອງຂ້າມແລະປະຕິເສດພຣະເຢຊູຄຣິດເພາະພຣະອົງຄືພຣະອົງນັ້ນ ກໍຄືພຣະເມສີອານ, ພຣະກັນລະກີ ຕາມທີ່ພາມແລະພຸດໄດ້ມີການທຳນວາຍເອົາໄວ້ວ່າຈະມາໂຜດມະນຸດສະໂລກພາຍໜ້າ.

## 2. ການມາກ່ອນຫຼືມາທີຫຼັງນັ້ນບໍ່ສຳຄັນ ແຕ່ທີ່ສຳຄັນນັ້ນຢູ່ທີ່ຖານະແລະຕຳແໜ່ງຂອງຜູ້ມານັ້ນຕ່າງຫາກ.

ຂ້າພະເຈົ້າໄດ້ຍິນພີ່ນ້ອງຊາວລາວເຮົາຫຼາຍຄົນໄດ້ພາກັນຖົກຖຽງກັນກ່ຽວກັບເລື່ອງນີ້. ຜູ້ທີ່ເປັນຊາວພຸດກໍຈະບອກວ່າ ພະພຸດຕ້ອງດີກວ່າເພາະເພິ່ນມາກ່ອນ ແລະຜູ້ທີ່ເປັນຄຣິສຕຽນກໍຈະບອກວ່າ

ອີງ ພຣະເຢຊູນັ້ນຕ້ອງດີກວ່າເພາະເພິ່ນເປັນພຣະເຈົ້າ. ອັນຄວາມຈິງແລ້ວແມ່ນດີທັງສອງແຕ່ດີກັນຄົນລະແບບ. ກ່ອນທີ່ພີ່ນ້ອງຈະຖົກກຽງກັນຕໍ່ໄປກ່ຽວກັບເລື່ອງນີ້ ກໍຂໍໃຫ້ພີ່ນ້ອງຫັນມາພາກັນສຶກສາເຖິງຖານະພາບ ຄວາມເປັນຈິງຂອງບຸກຄົນທັງສອງກ່ອນ ແລ້ວພວກເຮົາຈະສາມາດເຂົ້າໃຈດີຂຶ້ນກ່ຽວກັບເລື່ອງນີ້.





ໄດ້ງ່າຍຂຶ້ນຄື: ອ. ອຸ. ມ. ຫຼືເມື່ອລວມກັນເຂົ້າກໍຈະອ່ານວ່າ "ໂອມ". ຄຳນີ້ເປັນຄຳທີ່ພວກຜູ້ເຖົ້າແກ່ບູຮານລາວເຮົາມັກໃຊ້ໂດຍສະເພາະແລ້ວກໍແມ່ນພວກໝໍມົນ. ທຸກໆຄັ້ງທີ່ພວກເພິ່ນຈະຈົ່ມມົນເພິ່ນກໍຈະຂຶ້ນຕົ້ນດ້ວຍຄຳວ່າ "ໂອມ" ອັນໝາຍເຖິງເທບທັງສາມອົງນີ້. ຕົວຢ່າງມັນເປົ່າຕາແດງ: "ໂອມພຸດໂທ ໃຫ້ມຶງຕາໂລ ໃຫ້ມຶງຕາແຕກ ໃຫ້ມຶງຕາຍຊາ ໂອມເພິກສະພັຽງ" ແລ້ວກໍເປົ່າ. ໂດຍທົ່ວໄປແລ້ວເພິ່ນມັກຈະເປົ່າຍາມມື້ເຊົ້າກ່ອນລ້າງປາກຫຼືກູແຂ້ວແລະກ່ອນກິນອາຫານແລະທຸກຄັ້ງທີ່ເພິ່ນເປົ່າເພິ່ນກໍຈະແຄ້ວໝາກກ່ອນ. ມີບາງຄົນໄດ້ກ່າວວ່າທີ່ເພິ່ນຕ້ອງເປົ່າໃນຍາມເຊົ້າກ່ອນບ້ວນປາກຫຼືກູແຂ້ວ ແລະກ່ອນເປົ່າຈະຕ້ອງມີການແຄ້ວໝາກເຊັ່ນນີ້ກໍເປັນເພາະວ່າ ແຂ້ວຄົນເຮົານີ້ມີພິດຮ້າຍກວ່າພິດຂອງສັດຮ້າຍແລະຂີ້ແຂ້ວນັ້ນກໍເປັນຢາ ດ້ວຍເຫດນີ້ເມື່ອພິ່ນໃສ່ບາດແຜກໍສາມາດເຮັດໃຫ້ບາດແຜເຊົາໄດ້. ສ່ວນບາງຄົນນັ້ນກໍກ່າວວ່າ ເຄື່ອງທີ່ເພິ່ນແຄ້ວ ຄືໝາກພູແລະສິ່ງອື່ນໆນັ້ນກໍເປັນຢາເມື່ອປະສົມປະສານກັນເຂົ້າກັບຂີ້ແຂ້ວກໍຍິ່ງຈະເປັນຢາວິເສດຂຶ້ນ ຈຶ່ງສາມາດປົວພະຍາດນັ້ນໄດ້. ດ້ວຍເຫດນີ້, ທີ່ເພິ່ນເປົ່າມັນອາດຈະບໍ່ເຊົາຍ້ອນມົນແຕ່ຍ້ອນຂີ້ແຂ້ວ ຫຼືເຄື່ອງທີ່ເພິ່ນແຄ້ວນັ້ນກໍໄດ້.

ຊັ້ນຂອງເທບພວກນີ້ ພວກພາມຖືວ່າເປັນຊັ້ນສູງສຸດຂອງຊີວິດຊຶ່ງທຸກຄົນກໍໃຝ່ຝັນຢາກໄປຢູ່.

2. ຊັ້ນທີ 2: ຄືຊັ້ນຂອງພວກທີ່ເຄິ່ງມະນຸດ, ເຄິ່ງເທວະດາ, ພວກພູດຜີຊັ້ນດີແລະຊົ່ວ, ເທບຊັ້ນດີແລະຊົ່ວ. ດັ່ງນັ້ນຊັ້ນທີ 2 ນີ້ກໍຄືຊັ້ນກາງນັ້ນເອງ.

3. ຊັ້ນທີ 3:ຊັ້ນນີ້ເປັນພວກຊັ້ນຕໍ່າ ຫຼືຊັ້ນລ່າງສຸດຊຶ່ງໄດ້ແກ່ຈຳພວກກ້ອນຫີນ, ແມ່ນ້ຳລຳທານ, ພູເຂົາ, ພືດພັນຕ່າງໆ, ຕົ້ນໄມ້, ສັດແລະມະນຸດເປັນລຳດັບໄປ.

3. ອຸປະມາພາວະນາສຳປາ: ແປວ່າ ໃຫ້ທ່ານສະແຫວງການຫຼຸດພົ້ນກິເລດບາບ ຖ້າບໍ່ດັ່ງນັ້ນແລ້ວ ຄວາມພິນາດກໍຈະມາເຖິງຕົວທ່ານ ພະອົງຊົງສັ່ງຕໍ່ໄປອີກວ່າການເຄົາລົບບູຊານັ້ນໃຫ້ເຄົາລົບດ້ວຍຈິດວິນຍານແລະຄວາມຈິງ ຢ່າບູຊາດ້ວຍອະມິດບູຊາ ຄື (ບູຊາດ້ວຍສິ່ງຂອງ) ທີ່ບໍ່ມີປະໂຫຍດ.

4. ເມື່ອພຸດທະສາສະໜາລ່ວງໄປ 3.000 ປີແລ້ວ ຈະບໍ່ມີສະຕິນາຄາ ແຜ່ນດິນຈະຮ້ອນເໝືອນໄຟ : (ມິດສາທິຖິ ແປວ່າ ເຫັນຜິດເປັນຊອບ ໄຫວ້ຮູບກືຜີ), (ພຸດທະ ແປວ່າ ຜູ້ຮູ້ຜູ້ຕື່ນ), (ສົງ ແປວ່າ ຜູ້ສະແຫວງຫາຫົນທາງ).

## 3. ຄວາມລອດພົ້ນກຳ.

ຜົນຂອງກຳ ອ້າງຕາມພາມແລະພຸດນັ້ນ ມະນຸດຈະບໍ່ມີໂອກາດໄດ້ເກີດດີເຖິງສຸກຫຼັງຈາກໄດ້ຮັບຊາດເປັນມະນຸດແລ້ວຢ່າງແນ່ນອນ ເພາະສາສະໜາພາມໄດ້ສອນເອົາໄວ້ວ່າ ສິ່ງທີ່ມີຊີວິດນີ້ມີຢູ່ຫຼາຍຊັ້ນຫຼາຍລະດັບດັ່ງເຊັ່ນ:

1. ຊັ້ນທີ 1:ຄືຊັ້ນຂອງພວກເທບສາມອົງຄື: ພະວິສະນຸຫຼືພະນາລາຍ (ເປັນພະຜູ້ຮັກສາຕາມຄວາມເຂົ້າໃຈຂອງພາມ). ດັ່ງນັ້ນ, ຊາວອິນເດຍເມື່ອເຂົາພົບກັນເຂົາຈຶ່ງກ່າວວ່າ “ນາລາຍ ນາລາຍ” ຊຶ່ງແປວ່າ “ພະເຈົ້າຮັກສາ ພະເຈົ້າຮັກສາ”. ພະສິວະຫຼືພະອິສວນເປັນພະເຈົ້າຜູ້ທຳລາຍ ເນື່ອງຈາກວ່າພະອົງນີ້ເປັນພະເຈົ້າຜູ້ທຳລາຍນັ້ນເອງ ຈຶ່ງບໍ່ຄ່ອຍມີການກ່າວເຖິງ. ສ່ວນເທບອົງທີສາມນັ້ນກໍໄດ້ແກ່ພະພົມ ຊຶ່ງເຂົາເຊື່ອກັນວ່າເປັນຜູ້ສ້າງໂລກແລະສັບພະທຸກສິ່ງທັງປວງ. ເທບທັງສາມອົງນີ້ ພວກພາມໄດ້ຫຍໍ້ເຂົ້າເປັນພະຍັນຊະນະ 3 ຕົວເພື່ອໃຫ້ຈື່





## ຄວາມແຕກຕ່າງລະຫວ່າງພະພຸດທະເຈົ້າກັບພຣະເຢຊູຄຣິດ

| ພະພຸດທະເຈົ້າ | ພຣະເຢຊູຄຣິດ |
|---|---|
| 01. ກ່ອນມາບັງເກີດໃນໂລກມະນຸດ ພວກເຮົາບໍ່ຮູ້ວ່າພະອົງຊົງເປັນໃຜ? ຢູ່ໃສມາກ່ອນ? | 01. ພຣະອົງຊົງເປັນພຣະເຈົ້າຜູ້ຊົງສ້າງໂລກແລະຊົງພຣະຊົນຊຶ່ງຊົງສະຖິດຢູ່ໃນສະຫວັນກັບພຣະບິດາມາກ່ອນ |
| 02. ໄດ້ບັງເກີດໃນເຊື້ອສາຍຂອງກະສັດທີ່ປະເທດອິນເດຍ ພໍ່ຊື່ ສຸດໂທທະນະແລະແມ່ຊື່ນາງ ສິຣິມະຫາມະຍາ | 02. ໄດ້ຊົງບັງເກີດໃນເຊື້ອສາຍຂອງກະສັດດາວິດທີ່ປະເທດອິດສະຣາເອນ ບິດາຊື່ ໂຢເຊບແລະມານດາຊື່ ມາຣີອາ |
| 03. ເປັນມະນຸດທຳມະດາບໍ່ແມ່ນພຣະເຈົ້າຫຼືເທບພະເຈົ້າທີ່ຮັບເທວະອົງການລົງມາເກີດ | 03. ເປັນພຣະບຸດຂອງພຣະເຈົ້າທີ່ຖືກສົ່ງມາໃຫ້ຮັບຊາດເປັນມະນຸດໂດຍພຣະບິດາເພື່ອໄຖ່ບາບໃຫ້ກັບມະນຸດ |
| 04. ເກີດຕາມຄວາມຝັນແບບທຳມະດາຂອງມະນຸດໃນສະໄໝໂບຮານ | 04. ເກີດຕາມໂຄງການຫຼືແຜນການຂອງພຣະເຈົ້າ ຕາມທີ່ພຣະອົງໄດ້ສັນຍາໄວ້ໃນພຣະຄຳພີເດີມ |

| | |
|---|---|
| 05. ເກີດຈາກເລືອດເນື້ອຫຼືການຂອງມະນຸດຕາມທຳມະຊາດ | 05. ເກີດຈາກເດດພຣະວິນຍານບໍລິສຸດ ບໍ່ແມ່ນເກີດຈາກເລືອດຫຼືການຂອງມະນຸດ |
| 06. ບໍ່ເຄີຍໄດ້ທຳການອັດສະຈັນທີ່ຍິ່ງໃຫຍ່ແຕ່ປະການໃດເລີຍ | 06. ກະທຳການອັດສະຈັນທີ່ຍິ່ງໃຫຍ່ຢ່າງມາກມາຍ ແລະທີ່ສຳຄັນທີ່ສຸດກໍ່ແມ່ນຊົງໂຜດຄົນຕາຍໃຫ້ເປັນຄືນຂຶ້ນມາຈາກຄວາມຕາຍ |
| 07. ໄດ້ຮັບການສຶກສາຮຽນຮູ້ເໝືອນປຸຖຸຊົນທຳມະດາ | 07. ມີຄວາມສະຫຼາດຮອບຮູ້ຢູ່ໃນຕົນເອງ |
| 08. ມີເມຍແລະມີລູກ | 08. ບໍ່ມີເມຍແລະບໍ່ມີລູກ ພຣະອົງຊົງຄວາມບໍລິສຸດຕະຫຼອດການ |
| 09. ຕາຍເພາະເບື່ອໝູ ເມື່ອອາຍຸໄດ້ 80 ພັນສາ(ປີ) ເປົ້າໝາຍຂອງການຕາຍນັ້ນບໍ່ມີເລີຍ | 09. ຕາຍເພາະຖືກຂ້າໂດຍການຖືກຄຶງທີ່ໄມ້ກາງແຂນເມື່ອອາຍຸໄດ້ 33 ປີ ເປົ້າໝາຍກໍແມ່ນເພື່ອໄຖ່ບາບແກ່ມະນຸດສະໂລກທັງຫຼາຍ |





ລາດ ກໍໄດ້ເປັນງູເຫຼືອມຢູ່ໃນປ່າຫິມະພານ ທຽວຫາກິນປາແລະສັດທີ່ມີຊີວິດຢູ່ ເມື່ອພະຍາອາໂສກໄດ້ຂຶ້ນຄອງລາຊະສົມບັດແທນພໍ່ ກໍໄດ້ກໍ່ສິນເຮັດທານຢ່າງເຄັ່ງຄັດຈົນສຳເລັດທຳ ເທາະເຫີນເດີນອາກາດໄດ້, ເມື່ອຕາຍຈາກໂລກນີ້ໄປ ກໍໄດ້ຂຶ້ນໄປຢູ່ເມືອງສະຫວັນ ແລ້ວກໍຖາມຫາພໍ່ນຳນາຍປະຕູສະຫວັນ ຈຶ່ງໄດ້ຄວາມວ່າ ບິດາຂອງຕົນໄດ້ໄປໃຊ້ວິບາກກຳທີ່ຜິດສິນ ໄດ້ໄປເປັນງູເຫຼືອມໃຫຍ່ຢູ່ໃນປ່າຫິມະພານ ຫາກິນປາແລະສັດທີ່ມີຊີວິດຢູ່ໃນປ່າຫິມະພານ ກ້າຢາກເຫັນກໍໃຫ້ຕາມຮອຍງູນີ້ໄປ ລູກກໍເລີຍຕາມໄປເຫັນງູເຫຼືອມໃຫຍ່ຫາກິນຢູ່ໃນປ່າ ເມື່ອງູເຫຼືອມເຫັນລູກກໍຈະກິນ, ລູກຈຶ່ງບອກກັບພໍ່ວ່າ ເຮົາເປັນລູກຂອງທ່ານເມື່ອເວລາເປັນມະນຸດຢູ່ນັ້ນ. ງູຈຶ່ງບອກວ່າ ກ້າຫາກເຈົ້າເປັນລູກຂອງເຮົາແທ້ຈິງແລ້ວ ຈົ່ງໄຕ່ເທິງຫຼັງຕັ້ງແຕ່ຫົວຈົນຮອດຫາງ ກ້າບໍ່ຕົກກໍສະແດງວ່າເປັນລູກເຮົາແທ້ ແຕ່ຄັນກ້າຕົກເຮົາຈະກິນເຈົ້າເປັນອາຫານຂອງເຮົາ ແລ້ວລູກກໍໄຕ່ເທິງຫຼັງຂອງພໍ່ໄປມາໂດຍບໍ່ຕົກເລີຍ... ລູກຈຶ່ງຖາມພໍ່ວ່າ ເປັນເພາະເຫດໃດ ເມື່ອພໍ່ເປັນມະນຸດຢູ່ກໍໄດ້ຮັກສາສິນໃຫ້ທານຢ່າງມາກມາຍ ຊັ້ນພໍ່ບໍ່ໄດ້ບຸນຈັກໜ້ອຍບໍ? ພໍ່ໄດ້ບອກກັບລູກວ່າ... ພໍ່ໄດ້ເຮັດຜິດສິນປານາ ພຽງແຕ່ພໍ່ນຶກໃນໃຈເທົ່ານັ້ນຈຶ່ງຕ້ອງລົງມາເປັນງູເຫຼືອມໃຊ້ກຳ, ລູກກໍເລີຍຖາມຕໍ່ໄປອີກວ່າ ພໍ່ຈະໃຊ້ກຳນີ້ອີກດົນປານໃດ? ພໍ່ຈຶ່ງຕອບວ່າ ໃນຫຼັງພໍ່ມີເກັດຫຼາຍເທົ່າໃດພໍ່ກໍຕ້ອງໃຊ້ກຳເທົ່ານັ້ນຊາດ. ນອກຈາກນີ້ແລ້ວຍັງມີຄຳບອກເລົ່າຂອງພະສຳມາສຳພຸດທະເຈົ້າ ກ່າວໄວ້ກ່ອນພະອົງຈະຈາກໂລກນີ້ໄປ ໄດ້ກ່າວໄວ້ກັບສາວົກທັງຫຼາຍວ່າ:

1. ອັບປະນາໂນ: ແປວ່າ ຢ່າສ້າງຮູບເຄົາລົບໄວ້ກາບໄຫວ້ບູຊາ.
2. ຈາຕະຣະໂກ: ແປວ່າ ຈົ່ງສະແຫວງຫາພຣະອົງທີ່ຍັງມີຊີວິດຢູ່

1. ກາຍຍະກຳ: ມີ 3 ຢ່າງທີ່ເຮັດດ້ວຍກາຍຄື: ຂ້າສັດໜຶ່ງ, ລັກຊັບໜຶ່ງແລະລ່ວງຜິດຜົວຜິດເມຍໜຶ່ງ.

2. ວາຈີກຳ: ມີ 4 ຢ່າງເປັນການເຮັດດ້ວຍຄຳເວົ້າຄື: ເວົ້າຕົວະໜຶ່ງ, ເວົ້າສໍ່ສຽດໜຶ່ງ, ເວົ້າຫຍາບຄາຍໜຶ່ງ, ເວົ້າບໍ່ມີແກ່ນສານໜຶ່ງ.

3. ມະໂນກຳ: ມີ 3 ຢ່າງເປັນການເຮັດດ້ວຍຈິດນຶກຄິດ ຄື ມີຈິດໃຈຄຽດແຄ້ນບໍ່ຮູ້ຫາຍໜຶ່ງ, ນຶກຄິດສິ່ງທີ່ຜິດໃຫ້ກາຍເປັນສິ່ງທີ່ຖືກໜຶ່ງ, ຕັ້ງໃຈໂລບມາກຢາກໄດ້ຂອງເພິ່ນມາເປັນຂອງຕົນໜຶ່ງ.

## 2. ຜົນຂອງກຳ.

ພະພຸດທະເຈົ້າໄດ້ຍົກຕົວຢ່າງມະໂນກຳທີ່ຈະມີຂຶ້ນພາຍໜ້າໃນພະທຳມູນບັນທາເລື່ອງງູເຫຼືອມ ເມື່ອບິດາຂອງພະຍາອາໂສກມະຫາລາດຕາຍໄປເປັນງູເຫຼືອມ.ຄັດອອກມາຈາກພະທຳງູເຫຼືອມ: ເມື່ອບິດາຂອງພະຍາອາໂສກມະຫາລາດຍັງມີຊີວິດຢູ່ ໄດ້ຈຳສິນພາວະນາ ເຮັດທານສະແຫວງຫາໂມກຂະທຳ ໄດ້ເຫຼື້ອມໃສໃນພຸດທະສາສະໜາຂອງພະສຳມາສຳພຸດທະເຈົ້າ ກໍ່ສິນຢ່າງເຄັ່ງຄັດເຄີຍເຮັດທານທອດກັນຖິນຫຼາຍຄັ້ງ. ວັນໜຶ່ງໄດ້ເດີນທາງລັດທົ່ງນາມາເພື່ອຈະໄປວັດ ບັງເອີນເພິ່ນໄດ້ພົບກັບໝູ່ປາຊິວຢູ່ໃນໜອງແຫ່ງໜຶ່ງຢ່າງມາກມາຍຫຼວງຫຼາຍຈຶ່ງໄດ້ນຶກໃນໃຈວ່າ... "ຖ້າຈະຈັບເອົາໄປເຮັດປາຈ່ອມຈະດີບໍ່ໜ້ອຍ" ນີ້ເປັນພຽງແຕ່ຄວາມນຶກຄິດໃນໃຈເທົ່ານັ້ນໂດຍບໍ່ໄດ້ເຮັດຕາມຄວາມນຶກຄິດນັ້ນແຕ່ປະການໃດເລີຍ ຄັນຢູ່ມາບໍ່ດົນລາວກໍໄດ້ຕາຍໄປຕາມສັນຍາຂັນ ພໍວິນຍານເຖິງປະຕູສະຫວັນ ນາຍປະຕູສະຫວັນ ກໍບອກວ່າຕ້ອງໄປໃຊ້ວິບາກກຳນັ້ນເສຍກ່ອນ ບິດາຂອງພະຍາ ອາໂສກມະຫາ





| | |
|---|---|
| 10. ຕາຍແລ້ວກໍຕາຍໄປເລີຍ ບໍ່ໄດ້ກັບຄືນຂຶ້ນມາອີກ | 10. ຕາຍແລ້ວກັບຄືນຂຶ້ນມາອີກ ຕາຍແລ້ວສາມວັນຊົງເປັນຄືນຂຶ້ນມາຈາກຄວາມຕາຍອີກ ຕາມດັ່ງທີ່ທຳນວາຍເອົາໄວ້ໃນພຣະຄຳພີເດີມ |
| 11. ຫຼັງຈາກຄວາມຕາຍແລ້ວໄປຢູ່ໃສ່ບໍ່ມີໃຜຮູ້ ແມ່ນແຕ່ລູກແລະເມຍກໍບໍ່ມີໃຜຮູ້ວ່າໄປຢູ່ໃສຫຼັງຈາກນັ້ນ | 11. ພຣະອົງຊົງຢູ່ໃນໂລກອີກເຖິງ 40 ວັນ ຫຼັງຈາກນັ້ນກໍຊົງສະເດັດກັບຄືນສູ່ສະຫວັນຕໍ່ໜ້າຄົນຫຼາຍກວ່າ 500 ຄົນ |
| 12. ດຽວນີ້ບໍ່ຮູ້ວ່າເຮັດຫຍັງຢູ່ໃສ? | 12. ແຕ່ພຣະເຢຊູນັ້ນ ພຣະອົງຊົງນັ່ງຢູ່ກ້ຳຂວາພຣະຫັດຂອງພຣະບິດາ ອະທິຖານແລະຈັດແຈງສະຫວັນໄວ້ເພື່ອເຮົາ |
| 13. ບໍ່ກັບມາອີກ | 13. ຈະກັບມາຍັງໂລກນີ້ເປັນຄັ້ງທີສອງເພື່ອພິພາກສາແລະຄຸ້ມຄອງໂລກນີ້ |

ນີ້ຄືສະຖານະພາບອັນແທ້ຈິງ ສິບສາມປະການຂອງເຈົ້າຊາຍສິທັດທະ ແລະອົງພຣະເຢຊູຄຣິດ ທີ່ພວກເຮົາສາມາດເຫັນໄດ້ຢ່າງຊັດເຈນວ່າ ທັງສອງມີຄວາມແຕກຕ່າງກັນຢ່າງໃດ. ພາຍຫຼັງທີ່ທ່ານໄດ້ຮູ້ຈັກແລະເຂົ້າໃຈແລ້ວເຊັ່ນນີ້ທ່ານກໍຈະສາມາດບອກໄດ້ທັນທີວ່າການ

ມາກ່ອນແລະມາທີຫຼັງນັ້ນບໍ່ສຳຄັນ ແຕ່ທີ່ສຳຄັນນັ້ນແມ່ນຢູ່ທີ່ຖານະພາບຂອງບຸກຄົນທັງສອງນັ້ນຕ່າງຫາກ ຊຶ່ງເຫັນວ່າມີຄວາມແຕກຕ່າງກັນຢ່າງຫຼວງຫຼາຍ.



# ບົດທີ 7

# ວ່າດ້ວຍກຳ, ຜົນຂອງກຳ ແລະຄວາມລອດພົ້ນກຳ

"ມະນຸດຖືກລິງກຳນົດໄວ້ແລ້ວວ່າຈະຕ້ອງຕາຍພຽງເທື່ອດຽວ ຫຼັງຈາກນັ້ນຈະມີການລົງພິພາກສາ..." (ເຮັບເຣີ 9:27)

ຄົນຜູ້ໜຶ່ງບໍ່ໄດ້ວຽນວາຍຕາຍເກີດມາແລ້ວຫຼາຍຄັ້ງ ເໝືອນດັ່ງບາງຄົນຄິດ, ເພາະພຣະເຈົ້າໄດ້ລົງກຳນົດຊີວິດເອົາໄວ້ວ່າ ໃຫ້ເກີດມາໄດ້ແຕ່ພຽງຄັ້ງດຽວເທົ່ານັ້ນ.

1. ວ່າດ້ວຍກຳ. (ຈາກພະພຸດທະຈານພູກ 5)

ຄັ້ງໜຶ່ງ ພະອໍລະຫັນແລະສາວົກຂອງອົງພະສຳມາສຳພຸດທະເຈົ້າ ໄດ້ທູນຖາມພະອົງກ່ຽວກັບເລື່ອງຄວາມພົ້ນຈາກບາບກຳ ພະອົງລົງຕອບວ່າ "ການທີ່ທ່ານທັງຫຼາຍຈະເຖິງທີ່ລອດພົ້ນໄດ້ນັ້ນຍັງມີແອກອັນໜຶ່ງໄຫຼໄປຕາມນ້ຳ ໄປໄດ້ 3 ປີ ເມື່ອຄົບ 3 ປີແລ້ວ ກໍປ່ອຍເຕົ່າຕາບອດໂຕໜຶ່ງໄປຕາມຫາແອກນັ້ນ ເມື່ອພົບແອກນັ້ນເມື່ອໃດ ທ່ານທັງຫຼາຍກໍຈະລອດພົ້ນເມື່ອນັ້ນແຫຼະ... ໃນກຳມະບົດອື້ນວ່າຫົນທາງກຳ 10 ຊຶ່ງຈະນຳມະນຸດໃຫ້ໄປສູ່ກຳ (ຄືນະຣົກ) ຖ້າໄດ້ເຮັດຜິດພຽງແຕ່ຂໍ້ດຽວກໍຜິດທັງໝົດ. ພະພຸດທະເຈົ້າລົງກ່າວວ່າ ກາຍຍະກຳມີ 3 ຢ່າງ, ວາຈີກຳມີ 4 ຢ່າງມະໂນກຳມີ 3 ຢ່າງ:

ຍ. <u>ສະຫວັນຫຼືນິພານ</u>.

ສ່ວນສະຫວັນກັບນິພານນີ້ອັນຄວາມຈິງແລ້ວມັນເປັນສະຖານທີ່ດຽວກັນ ແຕ່ມະນຸດເຮົາພາກັນເຂົ້າໃຈກັນໄປຄົນແບບ ແລະເອີ້ນກັນໄປຄົນລະຊື່ຕ່າງໆຫາກ. ນິພານສຳລັບພຸດທະສາສະນິກະຊົນເຂົ້າໃຈນັ້ນມີຢູ່ສອງຄວາມໝາຍຄື: ບ່ອນສິ້ນສຸດຂອງຊີວິດ ຄືດັບຂັນໄປໃນທີ່ສຸດຊຶ່ງໝາຍຄວາມວ່າຊີວິດຈະບໍ່ມີອີກຕໍ່ໄປ ແລະອີກອັນໜຶ່ງນັ້ນກໍໄດ້ແກ່ບ່ອນດັບສິ້ນແຫ່ງກິເລດ, ຕັນຫາ, ຫຼືຄວາມຊົ່ວ ສ່ວນຊີວິດນັ້ນແມ່ນຍັງເປັນຢູ່. ສ່ວນຄຣິສຕຽນ ເຂົ້າໃຈວ່າເປັນທີ່ປະທັບຂອງພຣະເຈົ້າ ແລະຈະເປັນບ້ານອັນຖາວອນຂອງຄຣິສຕຽນ (ໂຢຮັນ 14:1-3). ສະຫວັນນັ້ນມີເຈົ້າຂອງ, ມີລະບຽບວິໄນ ມະນຸດເຮົາຈະເຂົ້າອອກຕາມໃຈບໍ່ໄດ້ທຸກຄົນຕ້ອງປະຕິບັດຕາມກົດເກນຂອງພຣະເຈົ້າຜູ້ເປັນເຈົ້າຂອງ. ອົງພຣະເຢຊູຄຣິດ ໄດ້ຊົງສອນເອົາໄວ້ວ່າ ພຣະອົງກັບໄປຈັດແຈງບ່ອນ (ສະຫວັນ) ນີ້ໄວ້ສຳລັບເຮົາທັງຫຼາຍ (ໂຢຮັນ 14:1-3) ແລະຊົງກ່າວອີກວ່າ "ເຮົານີ້ແຫຼະເປັນທາງນັ້ນ, ເປັນຄວາມຈິງແລະເປັນຊີວິດ ບໍ່ມີຜູ້ໃດໄປເຖິງພຣະບິດາໄດ້ນອກຈາກມາທາງເຮົາ" (ໂຢຮັນ 14:6). ພຣະອົງຍັງຊົງກ່າວໄວ້ອີກວ່າພຣະອົງຊົງເປັນປະຕູເຂົ້າສູ່ສະຫວັນ "ເຮົານີ້ແຫຼະເປັນປະຕູ ຖ້າຜູ້ໃດເຂົ້າທາງເຮົາຜູ້ນັ້ນຈະພົ້ນ ແລ້ວຈະເຂົ້າອອກທັງຈະພົບອາຫານ. ຂະໂມຍມາກໍພຽງແຕ່ຈະລັກ, ຈະຂ້າແລະທຳລາຍເທົ່ານັ້ນ ຝ່າຍເຮົາມາເພື່ອເຂົາຈະໄດ້ຊີວິດແລະຈະໄດ້ຢ່າງຄົບບໍລິບູນ" (ໂຢຮັນ 10:10). ດັ່ງນັ້ນ, ຖ້າມະນຸດເຮົາຄົນໃດຫາກຢາກຈະໄປເຖິງສະຫວັນ ຫຼືນິພານເຮົາຈະຕ້ອງໄປໃຫ້ຖືກທາງ ເຂົ້າໃຫ້ຖືກປະຕູ ເຮົາຈຶ່ງຈະເຖິງ ແລະພົ້ນບາບກຳໄດ້ ຖ້າບໍ່ດັ່ງນັ້ນກໍຈະບໍ່ເຖິງເປັນແນ່ແທ້.



# ບົດທີ 6

# ຄຳທຳນວາຍກ່ຽວກັບຜູ້ທີ່ຈະມາໂຜດໂລກພາຍຫນ້າ

ມະນຸດເຮົາຈະຂຶ້ນສະຫວັນຫຼືລົງນະຮົກນັ້ນ
ມັນຈະບໍ່ຂຶ້ນຢູ່ກັບການເປັນຄົນດີແລະການ
ເຮັດບຸນໜ້ອຍຫຼືຫຼາຍ ແຕ່ຈະຂຶ້ນຢູ່ກັບການປະຕິເສດ
ແລະການຍອມຮັບຮູ້ແລະຮັບເອົາພຣະເຢຊູຕ່າງຫາກ
ດັ່ງທີ່ເຮົາໄດ້ພົບໃນຄຳຢືນຢັນຂອງອົງພະສຳມາ
ສຳພຸດທະເຈົ້າຈາກພຸດທະທຳນວາຍຕອນນີ້

## 1. <u>ມະນຸດຊ່ອຍຕົນເອງໃຫ້ພົ້ນຈາກບາບກຳໄດ້ຫຼື? ຫຼືຈະຕ້ອງເພິ່ງພາພຣະເຈົ້າ</u>?

ເມື່ອພະພຸດທະເຈົ້າເດີນທ່ຽວສັນຈອນ ເປັນຕົວຕົນຢູ່ໃນໂລກນີ້ໄດ້ມີພາມເຖົ້າຕົນໜຶ່ງນຸ່ງຫົ່ມຂາວເຂົ້າມາທູນຖາມພະອົງວ່າ:

<u>ຖາມ</u>: *"ມະນຸດ ແລະ ພາມທັງຫຼາຍ ຈະຈຳສິນກິນທານກັນໄປຢ່າງໃດຈຶ່ງຈະລອດພົ້ນບາບໄດ້?*

<u>ຕອບ</u>: ພະພຸດທະເຈົ້າຊົງກ່າວວ່າ "ເຖິງແມ່ນວ່າທ່ານທັງຫຼາຍຈະໃຫ້ທານທອດກະຖິນຖືສິນ 5, ສິນ 8 ສິນ 227 ເກົ້າພັນໂກດ ຍົກ

ມີຂື້ນໄຫວ້ບູຊາຫຼືພາວະນາ ວັນລະ 5 ຄັ້ງ ກໍບໍ່ອາດລອດພົ້ນໄດ້ ເຮັດຢ່າງ ນີ້ທຸກວັນ ກໍຈະໄດ້ບຸນເທົ່າກັບເສັ້ນຜົມເດັກອ່ອນຢູ່ໃນທ້ອງແມ່ມາຕັ້ງ 8 ອະສົງໄຂ ຈະເຂົ້າປະຕູເມືອງສະຫວັນກໍບໍ່ໄດ້ເລີຍ"

<u>*ຖາມ*</u>*: ພາມເກົ້າຈິ່ງຖາມຕໍ່ໄປອີກວ່າ "ຖ້າດັ່ງນັ້ນຈະໃຫ້ພວກຂ້ານ້ອຍທັງຫຼາຍເຮັດຢ່າງໃດຈິ່ງຈະລອດພົ້ນໄດ້?*

<u>ຕອບ</u>: ພະພຸດທະເຈົ້າຈິ່ງຊົງກ່າວກັບພາມຕໍ່ໄປວ່າ "ອັນບາບກຳຂອງມະນຸດນັ້ນ ມີມາກມາຍໜັກໜາ ໜັກກວ່າແຜ່ນຟ້າ ໜາກວ່າແຜ່ນດິນ ສູງກວ່າຫີນສີນມາຟັງສີ່ຫຼ່ຽມໜຶ່ງສອກທຸກດ້ານ ປີໃດເທວະດາເອົາຜ້າມາປັດໜຶ່ງເທື່ອ ຫີນນັ້ນໝົດໄປເມື່ອໃດບາບຂອງມະນຸດຈະໝົດໄປເມື່ອນັ້ນ. ພະພຸດທະເຈົ້າຊົງເທດສະໜາຕໍ່ໄປອີກວ່າ ຕົວຂອງເຮົາເອງໄດ້ສະຫຼະສົມບັດຕັດກິເລດມາຊົງເພດເປັນຊີ ກີ່ວ່າຕົນເອງດີບໍ່ໜ້ອຍໄດ້ 8 ອະສົງໄຂປາຍປີແກມອີກມະຫາກັບນັບໄດ້ ຕັດສະຫຼະໄດ້ 10 ຊາດກໍບໍ່ອາດລອດພົ້ນສັກຄາວດອກທ່ານທັງຫຼາຍເອີຍ".

<u>*ຖາມ*</u>*: ພາມເກົ້າຕົນນັ້ນໄດ້ທູນຖາມຕໍ່ໄປອີກວ່າ "ຖ້າດັ່ງນັ້ນແລ້ວຈະໃຫ້ພວກຜູ້ຂ້າທັງຫຼາຍເຮັດຢ່າງໃດ?"*

<u>ຕອບ</u>: ພະພຸດທະເຈົ້າຊົງຕອບວ່າ "ໃຫ້ທ່ານທັງຫຼາຍເຮັດທານສະແຫວງຫາພຣະອີກອົງໜຶ່ງ ທີ່ຈະມາໂຜດໂລກຊ່ວຍທ່ານທັງຫຼາຍພາຍໜ້າ ພຣະອົງນັ້ນຊື່ວ່າ ພຣະສີອາຣິຍະເມດໄຕຣ".

<u>*ຖາມ*</u>*: ແລ້ວພາມອົງນັ້ນ ທູນຖາມວ່າ "ພຣະສີອາຣິຍະເມດໄຕຣທີ່ຈະມາໂຜດໂລກພາຍໜ້ານັ້ນມີບຸກຄະລິກລັກສະນະຢ່າງໃດ?*

<u>ຕອບ</u>: "ພຣະເມດໄຕຣ ທີ່ຈະມາໂຜດໂລກພາຍໜ້ານັ້ນ ທີ່ອົງພຣະຫັດ (ມື) ແລະອົງພຣະບາດ (ຕີນ) ເປັນກົງຈັກມົນກົມ ທີ່ສີຂ້າງມີຮອຍກຶກແທງເປັນແຜ, ໜ້າຜາກເຕັມໄປດ້ວຍຕຳໜິ ພຣະອົງນັ້ນແຫຼະຈະເປັນສະເພົາຄຳລຳໃຫຍ່ຈະພາທ່ານທັງຫຼາຍໄປຂ້າມວາຕະສົງສານ





ຈ. <u>ດວງວິນຍານໃໝ່</u>.

ສຳລັບດວງວິນຍານໃໝ່ນີ້ກໍແມ່ນເລັງເຖິງອົງພຣະວິນຍານບໍລິສຸດ ຜູ້ຊຶ່ງຈະມາຮັບຊ່ວງຕໍ່ຈາກພຣະເຢຊູ (ໂຢຮັນ 14:16-15; ກິດຈະການ 2:1-3).

ສ. <u>ພຣະແກ້ວສາມປະການ</u>.

ນີ້ກໍແມ່ນເລັງເຖິງພຣະເຈົ້າຕຣີເອກະນຸພາບຄືພຣະເຈົ້າອົງດຽວແຕ່ຊົງເປັນຢູ່ໃນສາມບຸກຄົນຄື: ພຣະເຈົ້າພຣະບິດາ, ພຣະເຈົ້າພຣະບຸດແລະພຣະເຈົ້າພຣະວິນຍານບໍລິສຸດ (ມັດທາຍ 3:13-17) ນັ້ນເອງ.

ຊ. <u>ພຣະສີອະຣິຍະເມດໄຕຣ</u>.

ສ່ວນພຣະສີອະຣິຍະເມດໄຕຣນັ້ນ ກໍແປວ່າພຣະເຈົ້າຜູ້ເມດຕາທີ່ຍິ່ງໃຫຍ່ນັ້ນເອງ. ເມດໄຕຣ ກໍແປວ່າເມດຕາ, ຮັກ ແລະອີດູສົງສານ. ໃນໂລກນີ້ເບິ່ງເໝືອນວ່າບໍ່ມີຄວາມຮັກຂອງຜູ້ໃດສາມາດເທົ່າທຽມຄວາມຮັກຂອງພຣະເຈົ້າພຣະເຢຊູຄຣິດນີ້ໄປໄດ້ ຄື ພຣະອົງຊົງຮັກມະນຸດຫຼາຍຈົນຍອມສະຫຼະພຣະຊົນເພື່ອມະນຸດທີ່ໄມ້ກາງແຂນ, ເພື່ອທຸກຄົນທີ່ວາງໃຈເຊື່ອຈະບໍ່ຈິບຫາຍ ແຕ່ຈະໄດ້ພົ້ນຈາກຄວາມບາບ, ພົ້ນຈາກຄວາມຕາຍແລະການພິພາກສາທີ່ຈະມີມາໃນອະນາຄົດ (ໂຢຮັນ 3:16; 5:24; 1ໂຢຮັນ 4:7), ພຣະອົງຊົງຮັກແລະຊົງເມດຕາສົງສານມະນຸດເຮົາທັງຫຼາຍທັງໆທີ່ເຮົາຍັງເປັນຄົນບາບຢູ່ (ໂຣມ 5:8). ດັ່ງນັ້ນ, ເຮົາຈຶ່ງສາມາດກ່າວໄດ້ວ່າ ບໍ່ມີຄວາມຮັກໃດໃນໂລກນີ້ທີ່ຈະສະເໝີເໝືອນແລະເທົ່າທຽມໄດ້ (ໂຢຮັນ 15:13).

(ກິດຈະການ 4:12). ເນື່ອງດ້ວຍເຫດນີ້ພະພຸດທະອົງຈຶ່ງໄດ້ບອກໃຫ້ພວກເຮົາລໍຖ້າພຣະຜູ້ຊ່ອຍທີ່ຈະສະເດັດມາພາຍຫຼັງພະອົງ ຕາມດັ່ງທີ່ພວກເຮົາໄດ້ພົບໃນຄຳທຳນວາຍນັ້ນ.

ຄ. <u>ພະອົງຊົງກ່າວວ່າ ຄວາມລອດພົ້ນນັ້ນບໍ່ໄດ້ຢູ່ທີ່ພະອົງ ແຕ່ຢູ່ທີ່ຜູ້ທີ່ຈະມາພາຍໜ້າ ຄືຢູ່ທີ່ພຣະເມສີອານ ຫຼື ພຣະສີອາຣິຍະເມດໄຕຣ</u>.

ໃນພຣະຄຳພີຂອງຄຣິສຕຽນຄືໃນພຣະທຳ ໂຢຮັນ 4:25 ໄດ້ບອກວ່າການລໍຖ້າພຣະຜູ້ຊ່ອຍນີ້ບໍ່ແມ່ນແຕ່ຊາວອິນເດຍແຕ່ພຽງເທົ່ານັ້ນ, ຊາວສະມາເຣຍແລະຊາວຢິວກໍພາກັນລໍຄອຍເໝືອນກັນ. ຊາວອິນເດຍແລະທຸກຄົນທີ່ເຊື່ອຢູ່ໃນພຸດທະສາສະໜາກໍແມ່ນລໍຖ້າພຣະເມສີອານ, ສ່ວນຢິວນັ້ນລໍຖ້າ ພຣະເມຊີອາ. ອັນຄວາມຈິງແລ້ວ ກໍແມ່ນລໍຖ້າພຣະຜູ້ຊ່ອຍອົງດຽວກັນຄືພຣະເຢຊູນັ້ນເອງ. ລັກສະນະຂອງອົງພຣະສີອານຕາມທີ່ພະພຸດໄດ້ກ່າວເຖິງໃນຄຳທຳນວາຍນັ້ນ ກໍແມ່ນກົງກັນກັບສິ່ງທີ່ໄດ້ເກີດຂຶ້ນໃນຊີວິດຂອງພຣະເຢຊູ ທັງນັ້ນ. ອົງພຣະຫັດ ພຣະບາດມີກົງຈັກວົງກົມ ກໍແມ່ນຮອຍຕະປູ ທີ່ເຂົາຕອກພຣະອົງ (ໂຢຮັນ 20:25-27) ທີ່ຂ້າງມີຮອຍຖືກແທງເປັນແຜ ກໍໄດ້ແກ່ຮອຍຫອກທີ່ເຂົາແທງພຣະອົງ (ໂຢຮັນ 19:34), ໜ້າຜາກເຕັມໄປດ້ວຍຕຳໜິນັ້ນ ກໍໄດ້ແກ່ປ້າຍທີ່ເຂົາຂຽນປະຈານວ່າ "ນີ້ຄືກະສັດຂອງຊາດຢິວ" (ມັດທາຍ 27:37) ພ້ອມກັບມົງກຸດໜາມ (ມັດທາຍ 27:29).

ງ. <u>ສະເພົາຄຳລຳໃຫຍ່ຈະພາທ່ານໄຕ່ຂ້າມວາຕະສົງສານ</u>.

ຄຳທຳນວາຍຕອນນີ້ກໍໝາຍເຖິງອົງພຣະເຢຊູຜູ້ປະເສີດທີ່ຜູ້ຊົງເປັນທາງນັ້ນ, ເປັນຄວາມຈິງແລະເປັນຊີວິດ ນຳເຮົາໄປເຖິງພຣະບິດາ (ໂຢຮັນ (14:1-3, 6).





ໄປຈົນເຖິງນິພານ ຈຶ່ງຈະພົບກັບພຣະແກ້ວສາມປະການ ຢ່າປະສົງທາງເກົ່າຈະບໍ່ພົ້ນເປັນແນ່ ໃຫ້ທ່ານເລີກທາງເກົ່າເສຍ ແລະຈະມີດວງວິນຍານໃໝ່ດວງໜຶ່ງ ເທົ່າກັບແສງແນງທີ່ງທ້ອຍລົງມາຈາກຟ້າເບື້ອງເທິງ ລົງມາສະຖິດໃນຈິດໃຈຂອງທ່ານທັງຫຼາຍແລ້ວກັບເຂົ້າມາຢູ່ໃນໂລກນີ້ຕໍ່ໄປ (ຄືສະຫວັນ ນິພານ). ນີ້ແມ່ນຄຳກອນທີ່ກ່າວເຖິງພຣະສີອານອົງນີ້:

| | |
|---|---|
| ພຣະຜູ້ຊົງກ່າວນີ້ | ຈະທົງເຄື່ອງນວນຂາວ |
| ເປັນປະກາຍແວວວາວ | ດັ່ງດາວຢູ່ເທິງຟ້າ |
| ທ່ານຈະລົງມາເປັນເຮືອຂ້າມ | ສະເພົາຄຳລຳໃຫຍ່ |
| ຊື່ສີອະລິຍະເມດໄຕຣເພິ່ນຮ້ອງ | ຈົ່ງຄອງຖ້າຢ່າເສີຍ |

## 2. <u>ຂໍ້ຄິດເຫັນກ່ຽວກັບຄຳທຳນວາຍຕອນນີ້</u>. (ນີ້ແມ່ນຄວາມຄິດເຫັນຂອງຜູ້ຂຽນ)

ຈາກຄຳຖາມຄຳຕອບລະຫວ່າງ ພາມແລະພະພຸດທະເຈົ້າທີ່ພວກເຮົາໄດ້ຍິນໄດ້ຟັງຜ່ານມານີ້. ໄດ້ຊີ້ໃຫ້ພວກເຮົາໄດ້ພົບກັບຄວາມຮູ້ຄວາມເຂົ້າໃຈເຖິງຄວາມຈິງຫຼາຍຢ່າງດັ່ງເຊັ່ນ:

ກ. <u>ມະນຸດທຸກຄົນທຸກຊາດຍ່ອມມີຄວາມຕ້ອງການຄວາມລອດພົ້ນບາບກຳເໝືອນກັນທັງນັ້ນ</u>.

ຈາກການຍອມໄປຫາແລະຈາກການສົນທະນາຂອງພາມແລະອົງພະສຳມາສຳພຸດທະເຈົ້ານີ້ ໄດ້ກາຍມາເປັນບົດຮຽນອັນລ້ຳຄ່າແກ່ພວກເຮົາທັງຫຼາຍໃນປະຈຸບັນ. ໜຶ່ງໃນບົດຮຽນນັ້ນກໍໄດ້ແກ່ພວກເຮົາ

ໄດ້ພົບວ່າ ມະນຸດເຮົາໃນໂລກນີ້ບໍ່ວ່າຈະເຊື່ອຢູ່ໃນລັດທິໃດແລະຢູ່ໃນສາສະໜາໃດຍ່ອມມີຄວາມປາຖະໜາແລະມີຄວາມຕ້ອງການໃນຄວາມລອດພົ້ນຈາກບາບກຳນີ້ດ້ວຍກັນທັງນັ້ນ ເພາະວ່າມັນຄືເປົ້າໝາຍອັນສຳຄັນແລະສູງສຸດໃນການເຊື່ອໃນສາສະໜາຂອງມະນຸດເຮົາທັງຫຼາຍພາຍໃນໂລກນີ້.

ມະນຸດເຮົາສ່ວນຫຼາຍແລ້ວ ແມ່ນບໍ່ຮູ້ຊໍ້າວ່າ ແມ່ນຫຍັງຄືເປົ້າໝາຍໃນການເຊື່ອໃນສາສະໜາຂອງຕົນ ເພາະຄົນສ່ວນຫຼາຍນັ້ນແມ່ນເຊື່ອກັນມາແບບຕາມນິຕາມເກີດ,ຕາມພໍ່ຕາມແມ່ແລະຕາມຮີດຄອງປະເພນີກັນມາຊື່ໆ ໂດຍທີ່ຕົນເອງນັ້ນບໍ່ຮູ້ຈັກແລະບໍ່ເຂົ້າໃຈໃນຄວາມຕ້ອງການອັນແທ້ຈິງເລີຍ. ດັ່ງນັ້ນ, ຈຶ່ງບໍ່ຄ່ອຍມີຄວາມສົນໃຈໃນເລື່ອງຂອງຄວາມລອດພົ້ນບາບກຳນີ້ເໝືອນດັ່ງພາມຕົນນັ້ນໃນສະໄໝນັ້ນ.

ສຳລັບພີ່ນ້ອງບາງຄົນທີ່ເຂົ້າໃຈຢ່າງເລິກເຊິ່ງໃນເປົ້າໝາຍແລະຄວາມຕ້ອງການຂອງຕົນຢ່າງແທ້ຈິງແລ້ວ ບຸກຄົນນັ້ນກໍຈະບໍ່ຍອມທີ່ຈະໃຫ້ຄວາມແຕກຕ່າງຂອງການເຊື່ອຖືນີ້ເປັນຕົ້ນເຫດທີ່ຈະກີດກັ້ນບໍ່ໃຫ້ຕົນໄດ້ພົບກັບຄວາມຮູ້ແລະຄວາມເຂົ້າໃຈໃນເລື່ອງຫົນທາງທີ່ຈະຊ່ອຍໃຫ້ຕົນໄດ້ພົບກັບຄວາມລອດພົ້ນບາບນີ້ຢ່າງແນ່ນອນເຊັ່ນດຽວກັບພາມຕົນນັ້ນ.

ຂ. <u>ບາບກຳຂອງມະນຸດນັ້ນມັນຍິ່ງໃຫຍ່ເກີນກວ່າທີ່ເຮົາ ຈະ ສ້າງຄວາມດີແລະເຮັດບຸນລ້າງໄດ້</u>.

ຄຳຖາມຂອງພາມຕົນນັ້ນທີ່ໄດ້ຖາມວ່າ "ມະນຸດແລະພາມທັງຫຼາຍຈະຈຳສິນກິນທານກັນຢ່າງໃດ ຈຶ່ງຈະລອດພົ້ນຈາກບາບກຳໄດ້? ຄຳຖາມດັ່ງກ່າວນີ້ ສົມຄວນທີ່ຈະເປັນຄຳຖາມຂອງມະນຸດເຮົາໂດຍທົ່ວໄປໃນໂລກ. ອົງພະສຳມາສຳພຸດທະເຈົ້າ ພະອົງໄດ້ຊົງຊີ້ໃຫ້ພວກເຮົາໄດ້ເຫັນເຖິງຄວາມຈິງຢ່າງໜ້ອຍ 3 ປະການໃນຄຳຕອບຂອງພະອົງຄື:





(1) ໃຫ້ໄດ້ເຫັນເຖິງຄວາມຍິ່ງໃຫຍ່ຂອງບາບກຳວ່າມັນໃຫຍ່ເຖິງຂະໜາດໃດ, (2) ໃຫ້ໄດ້ເຫັນເຖິງຄວາມແຕກຕ່າງຂອງ "ບາບ" ກັບ "ບຸນ" ວ່າມັນແຕກຕ່າງກັນຢ່າງໃດ ແລະ (3) ໃຫ້ເຮົາໄດ້ເຫັນເຖິງວິທີການທີ່ຈະກຳຈັດບາບວ່າເຮົາຈະກຳຈັດມັນໄດ້ຢ່າງໃດ? ກ່ຽວກັບເລື່ອງຂອງບາບພຣະອົງໄດ້ຊົງກ່າວວ່າ "ມັນໜັກກວ່າຟ້າໜາກວ່າແຜ່ນດິນ" ຊຶ່ງໝາຍຄວາມວ່າມັນໃຫຍ່ຈົນບໍ່ມີສິ່ງໃດທີ່ຈະປຽບທຽບໄດ້. ຄວາມຈິງກໍເປັນເຊັ່ນນັ້ນແທ້ ເພາະຄວາມບາບອັນແທ້ຈິງນັ້ນກໍຄື ການກະທຳຄວາມຜິດທີ່ມະນຸດເຮົາໄດ້ເຮັດຕໍ່ພຣະເຈົ້າ ຍ້ອນວ່າບໍ່ຍອມເຊື່ອຟັງແລະບໍ່ໄດ້ຖວາຍກຽດແກ່ພຣະອົງໃຫ້ສົມກັບການທີ່ພຣະອົງຊົງເປັນພຣະເຈົ້າ (ໂຣມ 1:21). ມະນຸດເຮົາໄດ້ເຮັດບາບກຳໂດຍການເຊື່ອຟັງມານ (ປະຖົມມະການ 3:1-7) ແລະໄດ້ພາກັນເອົາສິ່ງທີ່ພຣະເຈົ້າຊົງສ້າງຂຶ້ນໄວ້ນັ້ນມານົບໄຫວ້ນະມັດສະການແທນພຣະອົງ (ໂຣມ 1:21, 25) ຊຶ່ງການກະທຳດັ່ງກ່າວນີ້ ເປັນບາບກຳອັນໃຫຍ່ຫຼວງທີ່ມະນຸດເຮົາໄດ້ພາກັນເຮັດ ເປັນບາບກຳທີ່ນຳມາຊຶ່ງໂທດແຫ່ງຄວາມຕາຍຊຶ່ງບໍ່ມີໃຜທີ່ສາມາດລົບລ້າງເອງໄດ້. ສ່ວນຄວາມແຕກຕ່າງຂອງ "ບາບ" ແລະ "ບຸນ" ນັ້ນພະພຸດທະອົງໄດ້ຊີ້ໃຫ້ເຮົາເຫັນຢ່າງແຈ່ມແຈ້ງວ່າ ມັນລົບກັນບໍ່ໄດ້ ບໍ່ວ່າເຮົາຈະເຮັດຫຼາຍເທົ່າໃດກໍຕາມ. ດັ່ງນັ້ນຜູ້ທີ່ຫວັງເພິ່ງໃນການເຮັດບຸນ ສ້າງກຸສົນເພື່ອຊ່ອຍຕົນເອງໃຫ້ລອດພົ້ນບາບກຳນັ້ນ ຈຶ່ງເປັນການຫວັງເພິ່ງໃນທາງຜິດແລະໃນທາງກົງກັນຂ້າມກັບຄຳສອນຂອງພະພຸດທະອົງດ້ວຍ. ສ່ວນເລື່ອງການທີ່ເຮົາຈະຈັດການກັບຄວາມບາບນັ້ນ ມະນຸດເຮົາແມ່ນຈະຊ່ວຍຕົນເອງ, ເພິ່ງຕົນເອງຝ່າຍດຽວແລະຈະເພິ່ງໃນສາສະໜາຕ່າງໆ ໃນໂລກນີ້ບໍ່ໄດ້ ເພາະວ່າ "ໃນຜູ້ອື່ນຄວາມລອດພົ້ນນັ້ນບໍ່ມີ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າທີ່ຊົງປະທານແກ່ມະນຸດເພື່ອໃຫ້ເຮົາທັງຫຼາຍຕ້ອງພົ້ນໄດ້"